# ກຸ່ມຜູ້ຈັດທຳ ການສຶກສາພຣະຄັມພີພາສາລາວ

Copyright © 2001 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒000

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Division: Bernard M. Spooner

Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Unit 1
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Unit 1
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Unit 2&3
Sidney Kahn, Saginaw Community Church, Fort Worth, Texas
Editor for Unit 2&3
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Unit 4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Unit 4
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the Laotian Team
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, New Work Consultant, Multi-Ethnic, Baptist General Convention of Texas
Nelda P. Williams, Facilitators Coordinator, Consultant, Bible Study/Discipleship Division, Baptist General Convention of Texas

# ບົດຮຽນທີ 1
# ບໍ່ມີຫຍັງທຽບໄດ້

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ຄາລາເຕັຽ 1:6-24
ຂໍ້ພຣະຄັມພີສໍາລັບເບື້ອງຫລັງ: ຄາລາເຕັຽ 1
ຈຸດສໍາຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າພຣະເຢຊູຄຣິດໄດ້ນໍາພຣະຄຸນອັນຍິ່ງໃຫຍ່ມະຫາສານມາໃນໂລກ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະອົງຈະບໍ່ຈິບຫາຍ.
ຄໍາຖາມເພື່ອການສໍາຣວດ: ພຣະຄຸນພຣະເຈົ້າຍິ່ງໃຫຍ່ແທ້ບໍ່? ໃຫຍ່ແນວໃດ? ພຣະຄຸນພຣະເຈົ້າມີຄວາມຫມາຍອັນໃດແດ່ສໍາລັບຊີວິດປະຈໍາວັນຂອງທ່ານ?
ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ເຮົາທັງຫລາຍໄດ້ຮູ້ແລະມີຄວາມຈົ່ງຮັກພັກດີຕໍ່ພຣະຄຸນຂອງພຣະເຈົ້າ.

**ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນ**

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກຄົນເທົ່າທີ່ເຮົາມີໂອກາດແລະບໍ່ມີໂອກາດ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ.

ນອກຈາກຂ່າວປະເສີດທີ່ສາວົກໄດ້ປ່າວປະກາດໄປນັ້ນແລ້ວ ບໍ່ມີຂ່າວປະເສີດອື່ນໃດທີ່ຈະນໍາຄົນທັງຫລາຍໃຫ້ລອດພົ້ນ ຈາກບຶງໄຟນາຮົກໄດ້. ໂປໂລຜູ້ປະກາດຂ່າວປະເສີດໄດ້ເຫັນພີ່ນ້ອງຄຣິສຕຽນໃນແຂວງຄາລາເຕັຽໄດ້ປະຖິ້ມພຣະເຈົ້າ ໄປຢ່າງຮີບດ່ວນ ດ້ວຍວ່າເຂົາໄດ້ຫລົງເຊື່ອຄຣູສອນປອມ ທີ່ໄດ້ສອນເຂົາໃຫ້ຮັກສາກົດບັນຍັດແລະຮີດຄອງຂອງຊາວ ຢິວ. ເຂົາໄດ້ສອນວ່າການຖືຮັກສາກົດບັນຍັດຈະຊ່ອຍໃຫ້ເຂົາມີຄວາມສໍາພັນກັບພຣະເຈົ້າຫລາຍຂຶ້ນ. ດັ່ງນັ້ນຄຣິສ ຕຽນໃນແຂວງຄາລາເຕັຽຈຶ່ງພາກັນນັບຖື ພິທີຕັດເປັນເຣື່ອງສໍາຄັນ ແລະພ້ອມທັງຖືວັນ, ເດືອນ, ປີຕາມຮີດຄອງຂອງ ພວກເຖົ້າແກ່ໂບຮານຂອງເຂົາມາເພີ່ມໃສ່ໃນຂ່າວປະເສີດເຣື່ອງພຣະເຢຊູຄຣິດ. ໂປໂລໄດ້ເຫັນພວກເຂົາເຂົ້າໃຈຜິດ ແລ້ວ ໂປໂລຈຶ່ງຊ້ອງຫນ້າເຂົາໂດຍກ່າວຄໍາພຍານໃຫ້ເຂົາຟັງເຖິງສິ່ງທີ່ພວກເຂົາກໍາລັງປະຕິບັດຮັກສານີ້ໂປໂລ ໄດ້ເຮັດມາກ່ອນພວກເຂົາແລ້ວ ແຕ່ສິ່ງທີ່ເຮັດມານັ້ນບໍ່ໄດ້ຊ່ອຍໂປໂລໃຫ້ຮູ້ຈັກກັບພຣະເຈົ້າຫລືໃກ້ຊິດກັບພຣະເຈົ້າແຕ່ຢ່າງໃດ ນອກຈາກເພີ່ມຄວາມຄຽດຮ້າຍໃຫ້ຄຣິສຕຽນຕື່ມອີກ ດັ່ງນັ້ນໂປໂລຈຶ່ງຂອກຫາ ທາງກົດຂີ່ຂົ່ມເຫັງແລະບັງຄັບຄຣິສຕຽນຫນັກຂຶ້ນ. ໂປໂລໄດ້ເລົ່າເຖິງຊີວິດການເປັນມາຂອງຕົນເອງໃຫ້ເຂົາຟັງ ເພື່ອເຂົາຈະໄດ້ກັບໃຈຈາກການຫລົງຜິດຂອງພວກເຂົາ.

ອ່ານຄາລາເຕັຽ 1:6-24

ບໍ່ມີຫຍັງທຽບໄດ້ (1:6-7)
ຄາລາເຕັຽເປັນ ຈ.ມ. ສະບັບດຽວທີ່ໂປໂລບໍ່ໄດ້ກ່າວຂອບພຣະຄຸນພຣະເຈົ້າໃນຕອນແຮກ. ຫລັງຈາກໂປໂລໄດ້ຈາກແຂວງຄາລາເຕັຽໄປ ໄດ້ມີພວກຄຣິສຕຽນຢິວໄດ້ປະກາດຂ່າວປະເສີດອອກນອກທາງຂອງຂ່າວປະເສີດອັນແທ້ຈິງ

ຄືເຂົາໄດ້ບອກຄຣິສຕຽນໃນແຂວງຄາລາ ບໍ່ແມ່ນແຕ່ເຊື່ອໃນພຣະຄຣິດເທົ່ານັ້ນຕ້ອງປະຕິບັດກົດບັນຍັດຂອງຊາດຢິວ, ພວກເຂົາຕ້ອງຮັບພິທີຕັດ ແລະອື່ນໆທີ່ເປັນກົດຣະບຽບຂອງປູ່ຍ່າຕາຍາຍມາເພີ້ມເຂົ້າໃນການເຊື່ອຖືພຣະເຢຊູຄຣິດ ເພື່ອໃຫ້ເຂົາກາຍເປັນຄົນບໍຣິສຸດກວ່າເດີມ. ເຂົາໄດ້ຟັງຂ່າວປະເສີດອື່ນທີ່ແຕກຕ່າງກັບຂ່າວປະເສີດທີ່ໂປໂລ ໄດ້ປະກາດ. ມີຄົນຈຳນວນນຶ່ງໄດ້ຫລົງໃຈໄປເຊື່ອໃນຂ່າວນັ້ນ. ເຣື່ອງນີ້ເຮັດໃຫ້ໂປໂລມີຄວາມໂມໂຫຫລາຍທີ່ຄຣິສ ຕຽນໃນແຂວງຄາລາເຕັຽໄດ້ຫລົງເຊື່ອຢ່າງວ່ອງໄວ. ໂປໂລໄດ້ບອກເຂົາອີກຄັ້ງນຶ່ງຄືຂ່າວປະເສີດອື່ນນັ້ນບໍ່ມີນອກ ຈາກຂ່າວປະເສີດທີ່ພຣະເຈົ້າ ໄດ້ສເນີໃຫ້ແກ່ພວກເຮົາ ຄືພຣະເຢຊູຄຣິດຜູ້ຊົງວາຍພຣະຊົນແທນຄວາມຜິດບາບຂອງ ເຮົາທັງຫລາຍແລະພຣະອົງໄດ້ຄືນມີຊີວິດອີກ ເພື່ອພິສູດໃຫ້ເຮົາເຫັນວ່າພຣະອົງຊົງເປັນພຣະເຈົ້າຜູ້ມີຣິດອຳນາດເໜືອ ຄວາມຕາຍແລະຊົງເປັນພຣະເຈົ້າອົງທ່ຽງແທ້ແຕ່ອົງດຽວ. ໂປໂລໄດ້ປະກາດຢ່າງກ້າຫານວ່າ ຄວາມເຊື່ອເທົ່ານັ້ນ ທີ່ຈະນຳເຮົາທັງຫລາຍໄປເຖິງຄວາມລອດພົ້ນຈາກບຶງໄຟນາຣົກ, ເຫດສັນນັ້ນຈົ່ງຕັ້ງໝັ້ນໃນຄວາມເຊື່ອຂອງຕົນຢ່າຫລົງເຊື່ອຜູ້ປະກາດນອກທາງ.

ບາງຄັ້ງພວກເຮົາກໍພາກັນເຮັດຄືຄຣິສຕຽນແຂວງຄາລາເຕັຽ ເຊັ່ນກັນ ຄືເຮົາທັງຫລາຍໄດ້ເອົາຮີດຄອງ, ການຖື ວັນ, ເດືອນ, ປີ ເຂົ້າມາເພີ້ມກັບຄວາມເຊື່ອພວກເຮົາອີກ, ເຊັ່ນການຜູກຂໍ່ຕໍ່ແຂນ, ຊອກຫາມື້ດີວັນດີເພື່ອເປັນສີຣິມົງຄຸນ, ເຮັດບຸນປີໃໝ່ແລະອື່ນໆ ເພາະເຮົາທັງຫລາຍເຫັນວ່າສິ່ງນີ້ດີຄວນເກັບຮັກສາໄວ້ຊຶ່ງຮີດຄອງປະເພນີອັນດີງາມຂອງ ເຮົາ. ສິ່ງດັ່ງກ່າວນີ້ໄດ້ຖ່ວງດຶງເຮົາໂດຍບໍ່ຮູ້ສຶກຕົວ, ຄວາມຈິງແລ້ວ ທຸກວັນກໍດີຄືກັນໝົດ ການຜູກຂໍ່ຕໍ່ແຂນນັ້ນແມ່ນ ເຮັດໃຫ້ຄົນເຮົາດີໃຈບໍ່ແມ່ນພຣະເຈົ້າດີໃຈ ເຮົາທັງຫລາຍຄວນເຂົ້າໃຈວ່າ ພຣະເຢຊູໄດ້ຕາຍແທນສິ່ງເລົ່ານີ້ໝົດແລ້ວ ແລະພຣະເຢຊູເທົ່ານັ້ນທີ່ເໜືອກວ່າທຸກຮີດທຸກຄອງ ແລະທຸກປະເພນີ (Christ is over all cultures) ເຮົາມີພຣະ ເຢຊູຄຣິດໃນໃຈເຮົາຍັງຕ້ອງການຫຍັງອີກ? ພຣະອົງຈະບໍ່ກັບມາຕາຍອີກເປັນຄັ້ງທີ່ສອງ ແຕ່ພຣະອົງຈະກັບມາພິພາກສາຕາມການຂອງພວກເຮົາ.

<u>ຂ່າວປະເສີດຍ່ອມດີກວ່າຜູ້ປະກາດ</u> (1:8-10)

ໂປໂລໄດ້ຢັ້ງຢືນກັບຄຣິສຕຽນໃນແຂວງຕາລາເຕັຽດ້ວຍໂປໂລເອງກໍດີ, ເທວະດາໃນສວັນກໍດີ ຫາກໃຜປະກາດຂ່າວປະເສີດທີ່ຜິດກັບຂ່າວປະເສີດທີ່ໂປໂລໄດ້ປະກາດໄປແລ້ວນັ້ນຖືກປ້ອຍດ່າ ໃນພາສາອັງກິດເວົ້າວ່າ (Eternal condemned. NIV). (Anathema. ASV) ອານາເຕມາ ມາຈາກພາສາກຣີກ ແປວ່າຄຳສາບແຊ່ງ ຫລືປ້ອຍດ່າ. ຂ້າພະເຈົ້າຄຶດເຫັນພຣະເຈົ້າສາບແຊ່ງອາດາມແລະເອວາຄັ້ງແຣກໃນປະຖົມມະການວ່າ "ເຈົ້າເຊື່ອຟັງເມັຽຂອງເຈົ້າ ເຈົ້າກິນໝາກໄມ້ຊຶ່ງເຮົາໄດ້ ຫ້າມ ຍ້ອນສິ່ງທີ່ເຈົ້າກະທຳມານັ້ນ ຂີ້ດິນຈະຖືກສາບແຊ່ງກ່ອນຈະໄດ້ອາຫານມາລ້ຽງຊີບເຈົ້າຈະຕ້ອງເຮັດວຽກຢ່າງ ໜັກ ຂຸດດິນຝັນໄມ້ຈົນໜ້າແຫລ້ໜ້າກ່ຳເທົ່າສ້ຽງຊີວິດ ກົກໄມ້ແລະພືດພັນຕ່າງໆທີ່ມີໜາມຈະເກີດຂຶ້ນສຳລັບເຈົ້າ ແລະຈະກິນພືດເປັນອາຫານ ເຈົ້າຈະຕ້ອງຫາລ້ຽງຊີບດ້ວຍເຫື່ອໄຫຼໄຄຍ້ອຍຈົນກວ່າເຈົ້າຈະສິ້ນຊີວິດຄືນໄປສູ່ດິນທີ່ ບ່ອນເຈົ້າມາ ເຈົ້າມາແຕ່ດິນເຈົ້າຈະຕ້ອງກັບຄືນໄປໃນດິນອີກ" (ປະຖົມມະການ 3:17-19). ນີ້ແມ່ນການສາບແຊ່ງທີ່ເຮົາເຫັນວ່າໜັກສົມຄວນ ແລະຜົນກໍຄືເຮົາທັງຫລາຍໄດ້ຮັບໃນທຸກວັນນີ້. ແຕ່ເມື່ອຈະປຽບທຽບສິ່ງທີ່ໂປໂລໄດ້ກ່າວວ່າ "ນອກຈາກຂ່າວປະເສີດ ທີ່ເຮົາໄດ້ປະກາດແກ່ພວກເຈົ້າແລ້ວນັ້ນກໍໃຫ້ ຜູ້ນັ້ນຖືກປ້ອຍດ່າ. ເໝືອນດັ່ງພວກເຮົາໄດ້ບອກໄວ້ກ່ອນແລ້ວ ບັດນີ້ເຮົາ ຂໍບອກອີກວ່າ ຖ້າຜູ້ໃດປະກາດຂ່າວປະເສີດອື່ນແກ່ເຈົ້າທັງຫລາຍຄືອັນທີ່ຂັດກັບຂ່າວປະເສີດທີ່ພວກເຈົ້າໄດ້ຮັບໄວ້ແລ້ວ ກໍໃຫ້ຜູ້ນັ້ນຖືກປ້ອຍດ່າ ( 1:8-9). ສິ່ງທີ່ໂປໂລໄດ້ກ່າວນັ້ນໜັກໄປກວ່າພຣະເຈົ້າໄດ້ສາບແຊ່ງໃນຕອນຕົ້ນ ເພາະຕອນ ຕົ້ນຈະສິ້ນສຸດບ່ອນທີ່ພຣະເຈົ້າ ກ່າວວ່າ "ຈົນກວ່າເຈົ້າຈະສິ້ນຊີວິດຄືນໄປສູ່ດິນທີ່ ບ່ອນເຈົ້າມາ ເຈົ້າມາແຕ່ດິນ" ແຕ່ສິ່ງ ທີ່ໂປໂລໄດ້ກ່າວໝາຍຄວາມວ່າຂໍໃຫ້ພຣະເຈົ້າ

ສາບແຊ່ງນັ້ນໃນໃຈຂອງໂປໂລແມ່ນຂໍໃຫ້ພຣະເຈົ້າເອົາເຣື່ອງ, ລົງໂທດແມ້ນກະທັ້ງລຶບຊື່ຜູ້ ປະກາດນອກກົດຜູ້ນັ້ນອອກຈາກບັນຊີແຫ່ງຊີວິດໃນພຣະເຈົ້າ. ດັ່ງນັ້ນເຮົາຈະເຫັນວ່າຜູ້ນໍາຂ່າວປະເສີດມາຍ່ອມມີຄ່ານ້ອຍກວ່າຂ່າວປະເສີດ.

ໂປໂລໄດ້ເວົ້າກັບເຂົາດ້ວຍຄວາມໂມໂຫແລະເສັຽໃຈຢ່າງຫນັກ ທີ່ເຫັນຄຣິສຕຽນໃນແຂວງຄາລາເຕັຽບໍ່ມີຄວາມເຊື່ອອັນຫນັກແຫນ້ນຫມັ້ນຄົງໃນຄວາມເຊື່ອຂອງພວກເຂົາ, ແລະໂປໂລໂມໂຫໃຫ້ຜູ້ປະກາດຂ່າວປະເສີດທີ່ປະກາດອອກນອກທາງຂອງພຣະຄັມພີ. ດັ່ງນັ້ນໂປໂລຈຶ່ງກ່າວຢ່າງກ້າຫານວ່າທ່ານເອງເປັນຜູ້ຮັບໃຊ້ພຣະເຈົ້າແທ້ຈິງຈະບໍ່ເວົ້າເອົາໃຈຜູ້ໃດຜູ້ນຶ່ງ ຫລືເຮັດໃຫ້ຜູ້ໃດຜູ້ນຶ່ງດີໃຈເພື່ອຈະໃຫ້ເຂົາຊອບໃຈໃນຕົນເອງ. ເພາະໃນການທີ່ຈະເຮັດໃຫ້ມະນຸດພໍໃຈແລະຜິດຕໍ່ນໍ້າພຣະທັຍພຣະເຈົ້າຈະບໍ່ເປັນຜົນດີແກ່ທັງຜູ້ປະກາດແລະຜູ້ຟັງ ຄືທັງສອງຈະຕ້ອງລົງບຶງໄຟດ້ວຍກັນໃນວັນສຸດທ້າຍ. ດ້ວຍເຫດນີ້ແຫລະເມື່ອເຮົາທັງຫລາຍປະກາດກໍຈົ່ງປະກາດຕາມພຣະຄັມພີໄດ້ບັກທຶກໄວ້ ຫາກພຣະຄັມພີບອກວ່າບໍ່ແມ່ນເຮົາກໍຕ້ອງວ່າບໍ່ແມ່ນ ຫລືຫາກພຣະຄັມພີກ່າວວ່າແມ່ນເຮົາກໍວ່າແມ່ນ. ເຫດສັນນັ້ນຈົ່ງອ່ານແລະເຂົ້າໃຈ ໃນພຣະຄັມພີໃຫ້ຖືກຕ້ອງເພື່ອການປະພຶດຂອງເຮົາ ແລະກໍຈະຖືກຕ້ອງຕາມຂ່າວປະເສີດອັນແທ້ຈິງນັ້ນ.

<u>ຂ່າວປະເສີດຈາກໂປໂລເປັນຂອງພຣະຣາຊທານຈາກພຣະເຈົ້າ</u> ( 1:11-24)
ໂປໂລໄດ້ບອກຢ່າງແຈ້ມແຈ້ງເຖິງຂ່າວປະເສີດທີ່ທ່ານໄດ້ປະກາດ ເປັນຂ່າວປະເສີດທີ່ມາຈາກພຣະເຢຊູຄຣິດໂດຍກົງຊຶ່ງໂປໂລຫມາຍຄວາມວ່າທ່ານບໍ່ໄດ້ໄປເຂົ້າໂຮງຮຽນຫລືມີຜູ້ບອກໃຫ້ໂປໂລເວົ້າ ແຕ່ແມ່ນພຣະເຢຊູຄຣິດຜູ້ຊົງເຮັດໃຫ້ໂປໂລຕົກລົງຈາກຫລັງມ້າຕອນທີ່ໂປໂລເດີນທາງໄປກົດຂີ່ຂົ່ມເຫັງຄຣິສຕຽນໃນເມືອງດາມາເຊ.

ໂປໂລໄດ້ບອກໃຫ້ຄຣິສຕຽນໃນແຂວງຄາລາເຕັຽໄດ້ສືບເບິ່ງຊີວະປະຫວັດຄວາມເປັນມາຂອງໂປໂລ ເປັນໃຜ? ມາແຕ່ໃສ? ເຫດອັນໃດໂປໂລຈຶ່ງມາເປັນຜູ້ນໍາຂ່າວປະເສີດມາປະກາດ ( ກິຈການ 9:1-9). ທີ່ໂປໂລໄດ້ກ່າວເຊັ່ນນັ້ນກໍເພື່ອໃຫ້ຄຣິສຕຽນໃນແຂວງຄາລາເຕັຽມີຄວາມແນ່ໃຈໃນຂ່າວປະເສີດ ທີ່ໂປໂລໄດ້ປະກາດໄປແລ້ວ ບໍ່ແມ່ນໃຫ້ຄົນແນ່ໃຈໃນຕົວຂອງໂປໂລເອງ. ທັງນີ້ກໍເນື່ອງຈາກວ່າມີບາງຄົນໄດ້ສົງສັຍໃນຕົວໂປໂລວ່າເປັນໃຜ? ມາຈາກໃສ? ແລະແມ່ນໃຜເປັນຜູ້ແຕ່ງຕັ້ງໂລໂປເປັນສາວົກ. ໂປໂລໄດ້ຕອບເຂົາເປັນສອງຕອນສໍາຄັນ ຄືໂປໂລໄດ້ບອກວ່າ ທ່ານເອງຖືກແຕ່ງຕັ້ງຈາກຣພະເຢຊູໃຫ້ເປັນສາວົກ ແລະຂ່າວປະເສີດທີ່ເພິ່ນປະກາດນັ້ນບໍ່ແມ່ນຂອງເພິ່ນເອງແຕ່ແມ່ນຂອງພຣະເຢຊູຄຣິດ. (ກິຈການ 9:1-22).

ໂປໂລຢາກໃຫ້ເຣື່ອງທຸກຢ່າງເປັນທີ່ກະຈ່າງແຈ້ງແກ່ຄຣິສຕຽນໃນແຂວງຄາລາເຕັຽ "ດ້ວຍວ່າເຮົາບໍ່ໄດ້ຮັບຂ່າວປະເສີດນັ້ນຈາກມະນຸດ ຫລືບໍ່ມີມະນຸດຄົນໃດສອນໃຫ້ເຮົາ ແຕ່ເຮົາໄດ້ຮັບຂ່າວປະເສີດນັ້ນ ໂດຍພຣະເຢຊູຄຣິດຊົງສະແດງແກ່ເຮົາ" (ຄາລາເຕັຽ1:12). ໂປໂລໄດ້ກ່າວຄໍາພຍານເຣື່ອງທີ່ເກີດຂຶ້ນກັບໂປໂລໃນເສັ້ນທາງດາມາເຊ ມີຕອນນຶ່ງສໍາຄັນ ຄືສຽງດັງອອກມາຈາກສວັນວ່າ" ເຮົາໄດ້ປາກົດແກ່ເຈົ້າ ຄືເພື່ອຈະຕັ້ງເຈົ້າໄວ້ໃຫ້ເປັນຜູ້ຮັບໃຊ້ ແລະເປັນພຍານເຖິງ ເຫດການທີ່ເຈົ້າໄດ້ເຫັນແລ້ວ ກັບທັງເຫດການທີ່ເຮົາຈະປາກົດແກ່ເຈົ້າໃນພາຍຫນ້າ" (ກິຈການ 26: 16-17). ດັ່ງນັ້ນຂ່າວປະເສີດທີ່ໂປໂລໄດ້ປະກາດນັ້ນຄົບຖ້ວນແລະຖືກຕ້ອງທຸກຢ່າງ, ເມື່ອຖືກຕ້ອງແລະຄົບຖ້ວນທຸກປະການເຊັ່ນນັ້ນ ຄຣິສຕຽນໃນແຂວງຄາລາເຕັຽບໍ່ສົມຄວນຈະເອົາສິ່ງອື່ນໃດມາເພີ້ມເຂົ້າໃນຂ່າວປະເສີດເຣື່ອງພຣະຄຸນພຣະເຈົ້າເລີຍ. ເມື່ອເຮົາທັງຫລາຍຢູ່ໃນພຣະຄຸນຂອງພຣະເຈົ້າ ເຮົາຈຶ່ງບໍ່ຕ້ອງການຫຍັງອີກເພາະທຸກຢ່າງມີຄົບຖ້ວນໃນພຣະຄຸນນັ້ນຫມົດແລ້ວ. ດ້ວຍຄວາມເຂົ້າໃຈຜິດຂອງຄຣິສຕຽນໃນແຂວງຄາລາເຕັຽໄດ້ເອົາຮີດຄອງປະເພນີມາເພີ້ມເຂົ້າໃນຂ່າວປະເສີດອັນແທ້ຈິງ ໂປໂລຈຶ່ງມີຄວາມໂມໂຫແລະຄຽດຮ້າຍໃຫ້ຜູ້ປະກາດປອມໄດ້ຖືກປ້ອຍດ່າ.

ຄຳຖາມ

1. ຕາມທັມມະດາໂປໂລຂຽນ ຈ. ມ ທ່ານໄດ້ກ່າວຂອບພຣະຄຸນພຣະເຈົ້າເປັນການເລີ້ມຕົ້ນ, ແຕ່ເປັນຫຍັງຄັ້ງນີ້ໂປໂລຈຶ່ງບໍ່ໄດ້ກ່າວຂອບພຣະຄຸນພຣະເຈົ້າ?.

2. ເປັນຫຍັງໂປໂລຈຶ່ງໃຈຮ້າຍໃຫ້ຄຣິສຕຽນໃນແຂວງຄາລາເຕັຽ? ການຮ້າຍຂອງໂປໂລເປັນການຖືກຕ້ອງບໍ່? ຄຳວ່າປ້ອຍດ່າທີ່ໂປໂລໄດ້ກ່າວສອງຄັ້ງຫມາຍຄວາມວ່າແນວໃດ?

3. ຄຣິສຕຽນໃນແຂວງຄາລາເຕັຽໄດ້ເຮັດຜິດແທ້ຕາມຄວາມເຂົ້າໃຈຂອງເຮົາໃນສມັຍນີ້ ແຕ່ເປັນຫຍັງເຮົາທັງຫລາຍຍັງພາກັນເຮັດຄືຄຣິສຕຽນໃນແຂວງຄາລາເຕັຽຢູ່?

4. ເທື່ອຫນ້າຫາກທ່ານໄດ້ຍິນຄົນອື່ນມາສອນຫລືປະກາດຂ່າວປະເສີດຢ່າງອື່ນທີ່ພຣະຄັມພີບໍ່ໄດ້ບອກໃຫ້ເຮັດ ທ່ານຈະເຮັດແນວໃດ?

5. ເຮັດແນວໃດເຮົາຈຶ່ງຈະຮູ້ແນ່ວ່າຂ່າວປະເສີດນັ້ນມາຈາກພຣະເຢຊູຄຣິດຫລືມາຈາກມະນຸດ?

6. ເຮົາຈະເຮັດແນວໃດເພື່ອປ້ອງກັນເຮົາເອງບໍ່ໃຫ້ຫລົງເຊື່ອຄຣູສອນທີ່ບໍ່ໄດ້ມາຈາກພຣະເຈົ້າ?

## ບົດຮຽນທີ 2
## ປະຕິບັດຕາມຄຳສອນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ຄາລາເຕັຽ 2:1-6,11-21
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ຄາລາເຕັຽ 2
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າເມື່ອເຮົາເຂົ້າໃຈໃນຂ່າວປະເສີດແລ້ວເຮົາຄວນເອົາມາປະຕິບັດ.
ຄຳຖາມເພື່ອການສຳຣວດ: ມີສິ່ງໃດແດ່ທີ່ເຮົາບໍ່ໄດ້ປະພຶດຕາມຫລັກຄຳສອນ?
ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ເຮົາທັງຫລາຍໄດ້ຄົ້ນຫາວ່າສິ່ງໃດແດ່ທີ່ເຮົາບໍ່ໄດ້ປະຕິບັດໃນຊີວິດ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ**

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກຄົນເທົ່າທີ່ເຮົາມີໂອກາດແລະບໍ່ມີໂອກາດ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ.
- ສ້າງຄອບຄົວໃຫ້ເຂັ້ມແຂງໃນຄວາມເຊື່ອໃນພຣະເຈົ້າ ແລະຮັບໃຊ້ໃນພຣະນາມແຫ່ງພຣະເຢຊູຄຣິດ

ສິບສີ່ປີຕໍ່ມາໂປໂລແລະບາຣະນາບາເດີນທາງຂຶ້ນໄປຍັງກຸງເຢຣູຊາເລັມ. ຈຸດປະສົງໃນການເດີນທາງຄັ້ງນີ້ກໍເພື່ອໄປສົນທະນາກັບພວກເຖົ້າແກ່ແລະຜູ້ຮັບໃຊ້ໃນກຸງເຢລູຊາເລັມ ເຣື່ອງການປະຕິບັດຕາມຮີດຄອງປະເພນີແລະກົດບັດຍັດຕ່າງໆຂອງຊາດຢິວ.

**ກົດບັນຍັດມີຢູ່ສາມຢ່າງຂອງຊາດຢິວ**

1. ບັນຍັດເທສການທາງສາສນາ Ceremony Law (ເຮົາຈະເຫັນຕົວຢ່າງໃນ ຣະບຽບພວກ ເລວີ 1:1-13) ຊຶ່ງບັນຍັດຂໍ້ນີ້ແມ່ນຣະບຽບການນະມັສການຂອງຊາດຢິວ. ຄວາມຈິງແລ້ວກົດບັນຍັດຂໍ້ນີ້ແມ່ນແນໃສ່ ພຣະເຢຊູນັ້ນເອງ. ເມື່ອພຣະເຢຊູສະເດັດລົງມາເກີດ ແລະຕາຍແທນຄວາມຜິດບາບຂອງມະນຸດ ທັງປວງແລ້ວພຣະອົງກໍກັບຄືນສູ່ສວັນຮຽບຮ້ອຍແລ້ວ ສນັ້ນກົດໝາຍນີ້ຈຶ່ງບໍ່ຈຳເປັນຕ້ອງຖືຮັກສາອີກຕໍ່ໄປ.

2. ກົດໝາຍບັງຄັບຊີວິດປະຈຳວັນ Civil Law (ຕົວຢ່າງໃນພະບັນຍັດສອງ 24:10-11) ສັງຄົມມີການປ່ຽນແປງທຸກວັນ ດັ່ງນັ້ນຈຳເປັນຕ້ອງມີກົດບັງຄັບ ໃຫ້ທຸກຄົນຢູ່ໄຕ້ກົດໝາຍຂອງບ້ານເມືອງ.

3. ບັດຍັດຊຶ່ງມາຈາກພຣະເຈົ້າ Moral Law ຕົວຢ່າງ (ພຣະບັນຍັດສິບປະການ 20:1-17). ໃນສັງຄົມຂອງຢິວແມ່ນເຄັ່ງຄັດແທ້ໆໃນການປະຕິບັດ. ເຮົາທັງຫລາຍຍັງປະຕິບັດເຊັ່ນດຽວກັນ ແຕ່ໃນການປະຕິບັດກົດບັນຍັດນີ້ບໍ່ແມ່ນເຮັດໃຫ້ເຮົາລອດພົ້ນຈາກຄວາມຜິດບາບ ມີແຕ່ເຮັດໃຫ້ພຣະເຈົ້າຊອບໃຈໃນຕົວເຮົາເພີ້ມເທົ່ານັ້ນ.

**ສາວົກອື່ນໆ ຍອມຮັບການສອນຂອງໂປໂລ** ( 2:1-6)

ໂປໂລແລະບາຣະນາບາ ສຳເຣັດຜົນຈາກການປ່າວປະກາດຖ້ຽວທຳອິດໃນຫົວເມືອງຕ່າງ (ກິຈການ 13:2--14:28). ໃນຂະນະທີ່ໂປໂລເດີນທາງກັບເມືອງອັນຕີໂອເຂັຽ ພວກຄຣິສຕຽນຢິວໄດ້ໂຈມຕີໂປໂລຢ່າງໜັກກ່ຽວກັບການສອນຂອງໂປໂລທີ່ສອນວ່າ ສ່ວນຄົນຕ່າງຊາດນັ້ນບໍ່ຈຳເປັນຕ້ອງຮັບພິທີຕັດ. ແຕ່ສຳລັບຄົນຢິວແລ້ວໄດ້ສອນວ່າ ສ່ວນພວກຄົນຕ່າງຊາດນັ້ນກ່ອນອື່ນຕ້ອງປ່ຽນເປັນຢິວແລະເມື່ອຍອມຮັບເຊື່ອແລ້ວກໍໃຫ້ເຮັດພິທີຕັດ (Circumsised) ແລະຕ້ອງຍອມຢູ່ໃນກົດຣະບຽບທຸກຢ່າງຂອງຊາດຢິວ. ເນື່ອງຈາກການສອນມີຄວາມແຕກຕ່າງກັນ ພວກຄຣິສຕຽນຢິວ ໄດ້ສົ່ງຄົນໄປສອດແນມເບິ່ງການສອນຂອງໂປ ໂລຢູ່ທຸກແຫ່ງໃນແຂວງຄາລາເຕັຽ. "ແຕ່ມີບາງຄົນໃນພວກຟາຣີຊາຍເຊື່ອແລ້ວ ໄດ້ຢືນຂຶ້ນກ່າວວ່າ "ຄົນຕ່າງຊາດນັ້ນ ຕ້ອງໃຫ້ເຂົ້າພິທີຕັດ ແລະສັ່ງໃຫ້ເຂົາຮັກສາພຣະບັນຍັດຂອງໂມເຊ" (ກິຈການ 15:5). ດ້ວຍເຫດນີ້ແຫລະຄຣິສຕຽນ ຢິວຈຶ່ງໂຈມຕີໂປໂລຢ່າງໜັກໜ່ວງ.

ໂປໂລຂຶ້ນໄປປະຊຸມທີ່ກຸງເຢຣູຊາເລັມ ແລະໄດ້ເອົາຕີໂຕຜູ້ຊຶ່ງເປັນຄົນກຣີກເຊື້ອຊາດໂຣມັນທີ່ໄດ້ຮັບເຊື່ອນຳໂປໂລ ໃນຄຸກໂດຍບໍ່ໄດ້ຮັບພິທີຕັດໃດໆຊາວຢິວເຫັນວ່າຖືກຕ້ອງໄປນຳໂປໂລ. ດ້ວຍເຫດວ່າໃນສມັຍນັ້ນແຂວງຄາລາເຕັຽໄດ້ປົກຄອງໂດຍ ຈັກກະພັດໂຣມັນ ດັ່ງນັ້ນຄົນກຣີກຈຶ່ງມີອິດທິພົນ. ເຫດທີ່ໂປໂລເອົາຕີໂຕໄປນຳຄັ້ງນີ້ກໍເພື່ອເປັນຫລັກຖານ ແລະສະແດງ ໃຫ້ຄົນຢິວເຫັນຕີໂຕທີ່ຜູ້ບໍ່ໄດ້ຮັບພິທີຕັດ ແລະຕີໂຕກໍບໍ່ແມ່ນຄົນຢິວອີກ ແຕ່ສາວົກຢິວຫລາຍຄົນເຫັນວ່າຖືກຕ້ອງ. ການຖົກຖຽງ ກັນນັ້ນໂປໂລບໍ່ໄດ້ປະຕິເສດພິທີຕັດຂອງຊາດຢິວ ແຕ່ສິ່ງໂປໂລປະຕິເສດນັ້ນກໍຄືຄົນຊາດອື່ນບໍ່ຈຳເປັນຕ້ອງເປັນຄົນ ຢິວກ່ອນຈຶ່ງເຂົ້າພິທີຕັດໄດ້ຫລືບໍ່ຈຳເປັນຕ້ອງເປັນ ຄົນຢິວກ່ອນຈຶ່ງເປັນຄຣິສຕຽນ ໄດ້. ໂປໂລໄດ້ຖາມພວກຜູ້ຮັບໃຊ້ອື່ນໆໃນກອງປະຊຸມເຖິງສິນທັມ ຄືເຮົາທັງຫລາຍຈຳເປັນຕ້ອງຮັກສາແລະປະຕິບັດກົດບັນຍັດບໍ່ຈຶ່ງກາຍເປັນຄົນສິນທັມໄດ້? ໂປໂລຖາມເຂົາວ່າທ່ານທັງຫລາຍບໍ່ໄດ້ ຂໍໃຫ້ຕີໂຕຮັບພິທີຕັດເມື່ອຕີໂຕເປັນຄົນຊາດອື່ນ ແລະພວກທ່ານທັງຫລາຍກໍຍອມ ຮັບວ່າຕີໂຕຖືກຕ້ອງ. ເປັນດ້ວຍເຫດໃດຈຶ່ງຖືກຕ້ອງ?

ໂປໂລໄດ້ກ່າວຕໍ່ໄປວ່າ "ເພາະພຣະອົງໄດ້ຊົງຊຳຣະຈິດໃຈຂອງ ເຮົາໃຫ້ສະອາດດ້ວຍຄວາມເຊື່ອ" (ກິຈການ 15: 9). ການຖົກຖຽງກັນໃນກອງປະຊຸມຄັ້ງນີ້ໃຊ້ເວລາຍາວນານ. ແລະໃນທີ່ສຸດກອງປະຊຸມຈຶ່ງເຫັນດີໃນຄຳເຫັນຂອງໂປໂລ ແລະຍອມຮັບຮູ້ໂປໂລໃນຖານະຂອງສາວົກຮ່ວມກັບກຸ່ມສາວົກໃນກຸງເຢຣູຊາເລັມ.

<u>ໂປໂລຕໍ່ວ່າເປໂຕ</u> (2:11-14)

ຄຳວ່າເກຟາ ແລະ ເປໂຕ. ເປັນຫຍັງຈຶ່ງເປັນເກຟາ ຫລືວ່າເກຟາ ແລະເປໂຕເປັນຄົນລະຄົນ? ຄຳຖາມນີ້ມີການຖົກຖຽງກັນຕລອດມາຫລາຍສິບປີ. ໃນພາສາກຣີກ ເປໂຕ ອອກສຽງວ່າ "ປີຕຣອສ" ແປວ່າ ຫີນສີລາ. ໃນພາສາເດີມຄືພາສາອາຣາມິກ "ເກຟັສ" ໃນພຣະຄັມພີລາວອອກສຽງວ່າ ເກຟາ ແປວ່າ ຫີນ. ດັ່ງນັ້ນກຸ່ມນັກສາສ ນາສາດຈຶ່ງສັນນິຖານວ່າ ເກຟາເປັນຊື່ນ້ອຍຂອງເປໂຕ ເພາະມີຄວາມໝາຍແປອອກເປັນ ຫີນສີລາຄືກັນ. ຕົວຢ່າງມີຄົນລາວເຮົາປ່ຽນຊື່ເປັນ (James ເຈມ) ຫລັງຈາກເພິ່ນໄດ້ ສັນຊາດອາເມຣິກາ ແລະບາງຄົນກໍຮ້ອງເພິ່ນວ່າ ຢາໂກໂບ ແທນທີ່ຈະຮ້ອງເພິ່ນວ່າ ເຈມ. ທັງນີ້ກໍເພາະວ່າຊື່ພຣະຄັມພີລາວເຮົາມີຊື່ວ່າ ຢາໂກໂບ ສ່ວນພາສາອັງກິດມີຊື່ວ່າ ເຈມ.

ໂປໂລໄດ້ຕໍ່ວ່າເປໂຕ (ເກຟາ) ທີ່ເມືອງອັນຕີໂອເຂັຽ (ໃນຊີເຣັຽ ບໍ່ແມ່ນອັນຕີໂອເຂັຽປີຊີເດັຽ) ເມືອງອັນຕີໂອເຂັຽເປັນເມືອງທີ່ມີການຄ້າຂາຍທີ່ໃຫຍ່ໃນສມັຍນັ້ນ ແລະຍັງເປັນເມືອງທີ່ໄດ້ຊື່ວ່າຄຣິສຕຽນຄັ້ງແຣກອີກ. (ກິຈການ 11:26). ນີ້ແມ່ນຄັ້ງທີ່ສາມທີ່ໂປໂລໄດ້ພົບກັບເປໂຕ. ຄືຄັ້ງທີນຶ່ງໂປໂລພຽງແຕ່ຕິດຕໍ່ພົວພັນ, ຄັ້ງທີສອງໂປໂລໄດ້ຮຽນຮູ້ໃຈເປໂຕ ແລະຄັ້ງທີສາມນີ້ໂປໂລໄດ້ຕຳໜິເປໂຕ ເນື່ອງຈາກຄຳປາໄສຂອງເປໂຕທີ່ກຸງເຢຣູຊາເລັມເຮັດໃຫ້ຄົນນອກສາສນາພໍ

ໃຈ ໃນຊີວິດແລະການຢູ່ກິນຂອງເຂົາທີ່ຜິດຕໍ່ຫລັກຄໍາສອນ. ເປໂຕໄດ້ກ່າວສິ່ງທີ່ທາງໂບດບໍ່ໄດ້ສັ່ງໃຫ້ເປໂຕເວົ້າເຊັ່ນນັ້ນ. ເປໂຕບອກເຂົາວ່າເປັນກົດຫ້າມບໍ່ໃຫ້ ຮ່ວມສະມາຄົມກັບຄົນນອກສາສນາແທ້ ແຕ່ເປໂຕກ່າວຕໍ່ໄປວ່າ "ແຕ່ຝ່າຍເຮົາ ພຣະເຈົ້າໄດ້ຊົງສະແດງວ່າ ບໍ່ຄວນຖື ຄົນນຶ່ງຄົນໃດວ່າເປັນຄົນຕ້ອງຫ້າມຫລືບໍ່ສະອາດ" (ກິຈການ 10:28) ຊຶ່ງໝາຍ ຄວາມວ່າພວກເຂົາສະອາດບໍຣິສຸດ ປາສະຈາກຄວາມບາບ. ຄໍານີ້ທາງໂບດບໍ່ໄດ້ສັ່ງໃຫ້ເປໂຕເວົ້າ ແຕ່ເພິ່ນໄດ້ອ້າງພຣະ ນາມພຣະເຈົ້າວ່າ "ພຣະເຈົ້າໄດ້ຊົງສະແດງວ່າ ບໍ່ຄວນຖືຄົນນຶ່ງຄົນໃດວ່າເປັນຄົນຕ້ອງຫ້າມຫລືບໍ່ສະອາດ" ດັ່ງນັ້ນເປໂຕຈຶ່ງນັ່ງກິນແລະດື່ມກັບຄົນນອກສາສນາເພື່ອໃຫ້ເຂົາພໍໃຈໃນຕົວທ່ານ. ຈົນວັນນຶ່ງຄົນຂອງເພິ່ນເຂົ້າມາ ເພິ່ນຈຶ່ງຄິດ ຢ້ານໃນໃຈແລະຫລົບຖອຍອອກ ເພາະເພິ່ນຮູ້ດີວ່າເພິ່ນໄດ້ ກ່າວຜິດໄປແລ້ວ.

ເຣື່ອງນີ້ກໍເກີດຂຶ້ນກັບພວກເຮົາໃນທຸກວັນນີ້ເຊັ່ນດຽວກັນ ຄືຄຣິສຕຽນເຮົາໄດ້ເຂົ້າພົວພັນສັງຄົມ ກໍດີຢູ່ດອກ ແຕ່ທີ່ຈະໄປຍົກຍ້ອງໃຫ້ເພິ່ນດີໃຈກໍເທົ່າກັບວ່າສົ່ງເສີມເພິ່ນໃຫ້ເຮັດແນວນັ້ນຕໍ່ໄປ. ການເຮັດເຊັ່ນນັ້ນເປັນທີ່ຊອບໃຈມະນຸດແທ້ ເພາະມະນຸດເຮົາມັກເຮັດຕາມໃຈ ແຕ່ການທີ່ເຮັດຕາມໃຈມັກແລ້ວ ສຸດທ້າຍຂ້ອນຂ້າງຈະມີຈຸດຈົບທີ່ບໍ່ດີ. ດັ່ງນັ້ນໃນການພົບກັບສັງຄົມຂອງເຮົານັ້ນຈົ່ງນໍາຂ່າວປະເສີດໄປດ້ວຍຄື ໄປຄືເພິ່ນແລະຢ່າເຮັດຄືເພິ່ນ ຫລືຢ່າໄປຜິດຖຽງກັບເພິ່ນ ແຕ່ໄປດ້ວຍສັນຕິສຸກ ເພື່ອນໍາຄົນທັງຫລາຍໃຫ້ເຫັນພຣະຄຸນຂອງພຣະເຈົ້າຈະດີກວ່າ.

<u>ພົ້ນດ້ວຍຄວາມເຊື່ອ</u> 2:15-16

ໂປໂລໄດ້ກ່າວຕໍ່ໄປກ່ຽວກັບເຣື່ອງຄວາມເຊື່ອແລະການປະຕິບັດຕາມພຣະບັດຍັດ. ທ່ານໄດ້ກ່າວວ່າຈະເປັນຄົນຢິວຊຶ່ງເປັນຊົນຊາດທີ່ພຣະເຈົ້າຊົງເລືອກກໍຕາມ ເຖິງແມ່ນເຮົາປະຕິບັດພຣະບັນຍັດທຸກຂໍ້ແຕ່ບໍ່ມີຄວາມເຊື່ອເຮົາທັງຫລາຍກໍບໍ່ມີຄວາມຊອບທັມ. ຄວາມເຊື່ອເທົ່ານັ້ນເປັນທີ່ມາຂອງຄວາມຊອບທັມ ເພາະວ່າໃນການປະຕິບັດຕາມພຣະບັນຍັດນັ້ນບໍ່ມີມະນຸດຄົນໃດຈະຊົງຖືວ່າເປັນຄົນຊອບທັມໄດ້. ເຮົາທັງຫລາຍໄດ້ຕາຍຈາກພຣະບັດຍັດແລ້ວທີ່ໄມ້ກາງແຂນຂອງພຣະເຢຊູຄຣິດ. ເມື່ອເຮົາໄດ້ຕາຍດ້ວຍກັນກັບພຣະອົງແລ້ວເຮົາກໍໄດ້ຕາຍຈາກພຣະບັນຍັດດ້ວຍ ດັ່ງນັ້ນ ເມື່ອເຮົາຫາກຄິດວ່າການປະຕິບັດຕາມພຣະບັນຍັດເຮັດໃຫ້ເຮົາກາຍເປັນຄົນຊອມທັມແລ້ວ ການຕາຍຂອງພຣະເຢຊູກໍບໍ່ເປັນປໂຍດຫຍັງໝົດ. ພຣະເຢຊູຜູ້ຊົງຮັກພວກເຮົາ ຈົນເຖິງຂັ້ນຕາຍແທນເຮົາທັງຫລາຍທີ່ໄມ້ກາງແຂນ, ດັ່ງນັ້ນເຮົາທັງຫລາຍຈຶ່ງບໍ່ເປັນຂ້ອຍຂ້າພຣະບັນຍັດອີກ ແຕ່ເຮົາຍັງເປັນໜີ້ພຣະຄຸນພຣະເຢຊູທີ່ຊົງຕາຍແທນຄວາມຜິດບາບຂອງເຮົາທັງຫລາຍແທ້.

ບໍ່ວ່າຈະຢູ່ປະເທດຊາດໃດໆໃນໂລກນີ້ຍ່ອມມີກົດໝາຍຂອງບ້ານເມືອງ. ຄົນເຮົາມັກຈະເວົ້າວ່າບ້ານເຮືອນຕ້ອງມີຂື່ມີແປ ຊຶ່ງເພິ່ນໝາຍເຖິງກົດຣະບຽບຂອງບ້ານເມືອງ ແລະກົດໝາຍຂອງປະເທດຊາດ. ໂດຍສະເພາະແລ້ວຢູ່ໃນປະເທດອາເມຣິກາທຸກຄົນຈໍາຕ້ອງຢູ່ໃຕ້ກົດໝາຍ ແມ່ນແຕ່ປະທານາທິບໍດີກໍຍັງຢູ່ໃຕ້ກົດໝາຍເຊັ່ນກັນ. ແຕ່ກົດໝາຍຕ່າງໆນີ້ສາມາດບັງຄັບຄົນເຮົາໃນເມື່ອເຮົາຍັງມີຊີວິດຢູ່ເທົ່ານັ້ນ ຄົນຕາຍໄປແລ້ວກົດໝາຍກໍບໍ່ສາມາດບັງຄັບເຮົາອີກ. ໂປໂລກໍາລັງເວົ້າເຣື່ອງນີ້ເຊັ່ນດຽວກັນ ຄືເມື່ອເຮົາທັງຫລາຍໄດ້ຕາຍແລ້ວຈາກຄວາມຜິດບາບ ແລະຕາຍຈາກທຸກສິ່ງທຸກຢ່າງແມ້ນກະທັ້ງກົດບັນຍັດ ໂດຍທາງຄວາມເຊື່ອຂອງເຮົາໃນພຣະເຢຊູຄຣິດ, ດັ່ງນັ້ນກົດບັນຍັດນັ້ນຈຶ່ງບໍ່ສາມາດບັງຄັບເຮົາອີກຕໍ່ໄປ ຫລືບໍ່ຈໍາເປັນຈະປະຕິບັດພຣະບັນຍັດເພື່ອເປັນຄົນຊອບທັມ. ການທີ່ຈະເປັນຄົນ ຊອບທັມນັ້ນຄືຕ້ອງມີຄວາມເຊື່ອໃນພຣະເຢຊູຄຣິດເທົ່ານັ້ນ. ເພາະການ ເຮັດດັ່ງນີ້ເປັນ ທີ່ນທາງດຽວທີ່ຈະກາຍ ເປັນຄົນຊອບທັມແລະກໍເປັນທີ່ນທາງດຽວທີ່ບໍ່ໃຫ້ພຣະຄຸນພຣະເຈົ້າເປັນໂມຄະ ຫລືໄຮ້ປໂຍດ ເພາະວ່າພຣະເຈົ້າ ໄດ້ສົ່ງພຣະບຸດຂອງພຣະອົງລົງມາຕາຍແທນຄວາມຜິດບາບຂອງເຮົາທັງຫລາຍ ແລ້ວ. ດັ່ງນັ້ນຢ່າ ໃຫ້ການຕາຍຂອງ ພຣະບຸດພຣະເຈົ້າ

ໄຮ້ປໂຍດເລີຍ.    ເມື່ອກ່ອນເຮົາທັງຫລາຍຕາຍໃນຄວາມຜິດບາບ ມາບັດນີ້ເຮົາທັງຫລາຍຕາຍ ແລ້ວຈາກຄວາມຜິດບາບ ດັ່ງນັ້ນຄວາມບາບເກົ່ານັ້ນເຮົາຈຶ່ງບໍ່ມີອີກຕໍ່ໄປ.

<u>ຄໍາຖາມ:</u>

1. ເປັນຫຍັງຄຣິສຕຽນເຮົາຈຶ່ງດໍາເນີນຊີວິດຕາມພຣະບັນຍັດໄດ້ດີກວ່າຄວາມເຊື່ອ? ແຕ່ສ່ວນຄວາມເຊື່ອນັ້ນມີຫລາຍແຕ່ປະຕິບັດໄດ້ນ້ອຍ ເປັນຫຍັງຈຶ່ງເປັນເຊັ່ນນັ້ນ?

2. ການທີ່ໂປໂລໄດ້ຕິຕຽນເປໂຕນັ້ນສອນຫຍັງເຮົາແດ່? ຫາກວ່າສອນ ແມ່ນສອນແນວໃດ? ຕໍ່ໄປຈະຕ້ອງເຮັດແນວໃດເພື່ອບໍ່ໃຫ້ເຮົາຍອມຍ້ອງຍໍຄົນທີ່ເຮັດຜິດບາບ ແລະຮ່ວມຫົວກັບເຂົາເຈົ້າ? ແລະເຮັດແນວໃດເຮົາຈະບໍ່ເວົ້າ ຫລືເຮັດໃຫ້ຄົນອື່ນເສັຽໃຈ?

3. ການເປັນຄົນຊອບທັມດ້ວຍຄວາມເຊື່ອຫມາຍຄວາມວ່າຢ່າງໃດ? ເຊື່ອແລ້ວເຮັດຫຍັງແດ່ ແລະບໍ່ເຮັດຫຍັງແດ່?

4. ເຮົາໄດ້ຕາຍຈາກພຣະບັນຍັດແລ້ວ ຫມາຍຄວາມວ່າແນວໃດ? ໃນສັງຄົມຂອງຄົນຢິວມີບັນຍັດຢູ່ຈັກປະການ? ບັນຍັດອັນໃດທີ່ຊາວຢິວເຄັ່ງຄັດກວ່າຫມູ່?

5. ໂປໂລໄດ້ກ່າວວ່າ " ເຮົາຈຶ່ງມີຊີວິດຢູ່ ແຕ່ແມ່ນພຣະຄຣິດເປັນຜູ້ຊົງມີຊີວິດຢູ່ໃນເຮົາ " (໒:໒໐) ຫມາຍຄວາມວ່າຢ່າງໃດ?

6. ເຮັດໃຫ້ພຣະຄຸນຂອງພຣະເຈົ້າເປັນໂມຄະ (໒:໒໑) ທີ່ໂປໂລກ່າວນັ້ນທ່ານເຂົ້າໃຈແນວໃດ?

7. ໃນຕອນສຸດທ້າຍໂປໂລໄດ້ກ່າວວ່າ " ພຣະຄຣິດຊົງສິ້ນພຣະຊົນໂດຍບໍ່ມີປໂຍດ" ນັ້ນແມ່ນໂປໂລຢາກເວົ້າຫຍັງ? ແລະການຕາຍຂອງພຣະເຢຊູຄຣິດມີປໂຍດອັນໃດສໍາລັບທ່ານ?

# ບົດຮຽນທີ3
# ທາງດຽວເທົ່ານັ້ນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ຄາລາເຕັຽ 3:1-18
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ຄາລາເຕັຽ 3:1-18
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າເຮົາທັງຫລາຍຈະມີສ່ວນໃນພຣະອົງມີແຕ່ທາງຄວາມເຊື່ອເທົ່ານັ້ນ. ບໍ່ແມ່ນມາຈາກການເຮັດດີ ແລະການປະຕິບັດຈາກບົດຍັດຕ່າງໆ.
ຄຳຖາມເພື່ອການສຳຣວດ: ຄົນເຮົາຈະມີຄວາມສັມພັນກັບພຣະເຈົ້າໄດ້ຢ່າງໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ເຮົາທັງຫລາຍຮູ້ວ່າຄວາມເຊື່ອເທົ່ານັ້ນເຮັດໃຫ້ເຮົາມີຄວາມສັມພັນແລະໃກ້ຊິດກັບພຣະເຈົ້າໄດ້.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ**

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກຄົນເທົ່າທີ່ເຮົາມີໂອກາດແລະບໍ່ມີໂອກາດ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ.
- ສ້າງຄອບຄົວໃຫ້ເຂັ້ມແຂງໃນຄວາມເຊື່ອໃນພຣະເຈົ້າ ແລະຮັບໃຊ້ໃນພຣະນາມແຫ່ງພຣະເຢຊູຄຣິດ

ມີເຣື່ອງເລົ່າກັນວ່າ ມີຊາຍນຶ່ງໄດ້ຫລັບຕາລາໂລກໄປ ຕຽມທີ່ຈະເຂົ້າແຜ່ນດິນສວັນຂອງພຣະເຈົ້າ ແຕ່ກ່ອນຈະເຂົ້າໄປນັ້ນ ມີການກວດແລະສັມພາດຈາກນາຍດ່ານປະຕູບອກລ່ວງຫນ້າວ່າ "ຕ້ອງໄດ້ຮ້ອຍຄະແນນຈຶ່ງຜ່ານເຂົ້າໄປໄດ້". ວ່າແລ້ວນາຍປະຕູກໍຖາມຊາຍນັ້ນວ່າ:

ນາຍປະຕູ: ຈົ່ງກ່າວສິ່ງທີ່ດີໃນຊີວິດຂອງເຈົ້າມາເບິ່ງດູ.
ຊາຍນັ້ນ: ຂ້ານ້ອຍແຕ່ງງານກັບຍິງຄົນດຽວແລະຢູ່ນຳກັນຈົນຮອດ 50 ປີບໍ່ເຄີຍປະຮ້າງກັນຈັກເທື່ອ.
ນາຍປະຕູ: ດີຫລາຍ...ໄດ້... ນຶ່ງຄະແນນ. ອັນໃດອີກແດ່?
ຊາຍນັ້ນ: ຂ້ານ້ອຍໄປໂບດທຸກໆອາທິດບໍ່ເຄີຍຂາດ ທັງເຊົ້າແລະແລງ.
ນາຍປະຕູ: ດີ, ໄດ້ອີກນຶ່ງຄະແນນຣວມເປັນສອງ. ເວົ້າຕໍ່ໄປແມ່ນຫຍັງອີກແດ່?
ຊາຍນັ້ນ: ຂ້ານ້ອຍອາສາສມັກຮັບໃຊ້ໃນວຽກງານຕ່າງໆໃນໂບດ ເຊັ່ນ ຊ່ອຍຄົນຍາກຈົນ, ຊ່ອຍເດັກກຳພ້າ, ເອົາເຂົ້າປາອາຫານໃຫ້ຄົນຂາດທີ່ຢູ່ອາສັຍ.
ນາຍປະຕູ: ທັງຫມົດນີ້ກໍສົມຄວນໄດ້ອີກນຶ່ງຄະແນນ.
ຊາຍນັ້ນ: ນຶ່ງຄະແນນ?.... ໃນກົດຣະບຽບຂອງທ່ານບໍ່ມີໃຜໄດ້ຮອດຮ້ອຍຄະແນນດອກ ຄັນບໍ່ແມ່ນດ້ວຍພຣະຄຸນພຣະເຈົ້າ ຈ້າງກະບໍ່ໄດ້ດອກ. ລາວຈົ່ມ
ນາຍປະຕູ: ໄດ້ຮ້ອຍມະແນນ ເຊີນເຂົ້າມາໄດ້.

<u>ສລຸບເຣື່ອງເລົ່າ:</u>
ເຣື່ອງນີ້ໄດ້ວາດພາບໃຫ້ເຮົາເຫັນວ່າ ໃນການເຮັດດີແລະປະຕິບັດຕາມບັດຍັດນັ້ນເປັນໄປບໍ່ໄດ້ທີ່ຈະກາຍເປັນຄົນຊອບທັມ. ໃນບົດຮຽນບົດນຶ່ງແລະບົດສອງທີ່ຜ່ານມາ ໂປໂລມີຄວາມຄຽດຮ້າຍຄຣິສຕຽນໃນແຂວງຄາລາເຕັຽ ກ່ຽວກັບຄວາມເຊື່ອ ຂອງພວກເຂົາບໍ່ແນ່ນອນ. ພວກເຂົາພາກັນຫູເບົາໃຈງ່າຍ ເຊື່ອຟັງຄົນໂດຍບໍ່ໄດ້ພິຈາຣະນາໃຫ້ຖ້ອນທີ່. ພວກເຂົາພາກັນເຂົ້າໃຈວ່າຄວາມລອດພົ້ນມີມາດ້ວຍການປະຕິບັດ. ແນ່ນອນຄວາມເຊື່ອຕ້ອງມີການປະຕິບັດ. ແຕ່ການປະຕິບັດທີ່ ບໍ່ມີຄວາມເຊື່ອກໍບໍ່ມີຄວາມໝາຍຫຍັງໝົດ ແລະຄວາມເຊື່ອທີ່ບໍ່ມີການປະຕິບັດຄວາມເຊື່ອນັ້ນກໍໃຊ້ການບໍ່ໄດ້ ໄຮ້ປໂຍດ (ຢາໂກໂບ 2:20).

<u>ອ່ານ ຄາລາເຕັຽ 3:1-18</u>

1. <u>ເປັນຄົນບໍຣິສຸດທາງຄວາມເຊື່ອເທົ່ານັ້ນ</u> (3:1-5)
<u>ເຣື່ອງເລົ່າ:</u> ໃນສມັຍຂ້າພະເຈົ້າຍັງເປັນເດັກນ້ອຍຢູ່ ຂ້າພະເຈົ້າມັກຫລິ້ນສັບໝາກຄ່າງຕາມພາສາເດັກນ້ອຍຍາກຈົນ. ໃນຂະນະທີ່ຫລິ້ນຢູ່ນັ້ນມີເດັກນ້ອຍຫລາຍຄົນຢູ່ອ້ອມແອ້ມບໍຣິເວນນັ້ນ, ທັມດາການຫລິ້ນເກມໃຜກໍຢາກຊະນະ ພໍໝາກຄ່າງຝ່າຍກົງກັນຂ້າມຫັນລົງເດີ່ນຂ້າພະເຈົ້າບໍ່ໄດ້ລໍຊ້າຟ້າວສັບໝາກຄ່າງຝ່າຍກົງກັນຂ້າມດ້ວຍໝາກຄ່າງໄມ້ດູ່ຂອງຂ້າພະເຈົ້າທັນທີ, ແຕ່ບໍ່ຮູ້ວ່າເປັນດ້ວຍເຫດໃດເຊືອກໝາກຄ່າງນັ້ນຍັງມັດທີ່ຫົວໝາກຄ່າງຂອງຂ້າພະເຈົ້າຢູ່, ອາຈະເປັນເພາະຂ້າພະເຈົ້າຖາກໝາກຄ່າງບໍ່ກ້ຽງດີຈຶ່ງເຮັດໃຫ້ເຊືອກບໍ່ຫລຸດຈາກຫົວໝາກຄ່າງ ມັນຈຶ່ງຢ້ອນມາຕຳໜ້າແຂ່ງຂ້າພະເຈົ້າຈົນໝົດແຮງ. ໜ້າແຂ່ງຂອງຂ້າພະເຈົ້າຈຶ່ງແຕກເຕັມໄປດ້ວຍເລືອດ. ຂ້າພະເຈົ້າຈຶ່ງແລ່ນຮ້ອງໄຫ້ໄປຫາ ແມ່. ແຕ່ແທນທີ່ແມ່ຈະຈອບອອຍເອົາແມ່ພັດຮ້າຍຕື່ມຊ້ຳຕາມທັມດາຜູ້ເຖົ້າບ້ານເຮົາ. ເພິ່ນໄດ້ຮ້າຍວ່າ "ຄົນບໍ່ມີຄວາມ ຄຶດເອີຍ ຫລິ້ນກໍໃຫ້ໂຕເຈັບ" ຂ້າພະເຈົ້າໄດ້ຖຽງແມ່ຄືນວ່າ "ວ່າມີຄວາມຄຶດຢູ່" ແມ່ຂ້າພະເຈົ້າກໍຕອບຂ້າພະເຈົ້າວ່າ "ຄັນຫາກເຈົ້າມີຄວາມຄຶດມັນກໍບໍ່ເປັນແນວນີ້ດອກ".

ໂປໂລໄດ້ເວົ້າໃຫ້ຊາວຄາລາເຕັຽຜູ້ບໍ່ມີຄວາມຄຶດເອີຍ ອາດເປັນດ້ວຍເຫດວ່າພວກເຂົາເຈົ້າບໍ່ໄດ້ຄຶດພິຈາຣະນາກ່ອນທີ່ພວກເຂົາເຈົ້າຈະຫລົງເຊື່ອຜູ້ປະກາດພຣະທັມປອມທີ່ໄດ້ສອນນັ້ນ. ຄົນທີ່ມີຄວາມຄຶດແລະສະຕິປັນຍາສູງພຽງໃດກໍຕາມຫາກຂາດການພິຈາຣະນາຕຶກຕອງ ກໍຍ່ອມຈະຜິດແລະກາຍເປັນຄົນຫູເບົາໃຈງ່າຍໄປກໍອາດເປັນໄດ້. ໂປໂລໄດ້ກ່າວຢ້ຳອີກ ວ່າ "ໃຜໄດ້ສກົດຈິດພວກເຂົາໃຫ້ຫລົງເຊື່ອໄປ". ເພາະໃນສມັຍນັ້ນມີພວກໝໍເວດມົນຄາຖາຢ່າງຫລວງຫລາຍໂດຍສະເພາະໃນແຂວງຄາລາເຕັຽມີທຸກແຈຖນົນຫົນທາງ. ໝໍມົນ ພວກນີ້ສາມາດສກົດຈິດຄົນດ້ວຍ. ເມື່ອກ່ອນເຮົາທັງຫລາຍກໍເຄີຍເຫັນໝໍມົນນີ້ຄືກັນ. ສຳລັບຄຣິສຕຽນໃນແຂວງຄາລາ ເຕັຽບໍ່ແມ່ນພວກເຂົາເຈົ້າໄດ້ຖືກມົນສະກົດຈິດໃຈອັນໃດດອກ ແຕ່ແມ່ນຂາດການພິຈະຣະນາໃນພຣະຄຸນພຣະເຈົ້ານັ້ນເອງ. ບາງຄັ້ງຄົນເຮົາຢາກລື່ນໝູ່ກໍ ເລີຍເຮັດໄປຕາມຄວາມຄຶດແລະຄວາມເຂົ້າໃຈຂອງຕົນເອງເພື່ອຈະໄດ້ດີລື່ນໝູ່ ແຕ່ລືມ ຄຶດພິຈະຣະນາສິ່ງທີ່ເຮັດ ຜົນຕາມມາກໍຄືຜິດຕໍ່ຫລັກຄຳສອນອັນແທ້ຈິງ. ຄົນປະເພດນີ້ໂປໂລໄດ້ຮ້າຍໃນຖານະເປັນພີ່ ນ້ອງຮ່ວມຄວາມເຊື່ອຈຶ່ງໃຊ້ຄຳວ່າ "ຜູ້ບໍ່ມີຄວາມຄຶດເອີຍ" ຊຶ່ງທ່ານໝາຍຄວາມວ່າເປັນຫຍັງທ່ານບໍ່ຄຶດແດ່? ພວກ ທ່ານທັງຫລາຍໄດ້ຮັບພຣະ ວິນຍານນັ້ນໂດຍພຣະຄຸນທາງຄວາມເຊື່ອ ບໍ່ແມ່ນຍ້ອນການປະຕິບັດບັນຍັດຂອງທ່ານບໍ່ແມ່ນບໍ່?.

2. <u>ອັບຣາຮາມເປັນຄົນຊອບທັມຍ້ອນຄວາມເຊື່ອ</u> ( (3: 6-14)

ເຣື່ອງຂອງອັບຣາຮາມເປັນຄຳຕອບໃນ 3:5. ຊຶ່ງໄດ້ບົ່ງບອກວ່າພຣະເຈົ້າບໍ່ໄດ້ໂຜດປະທານພຣະວິນຍານດ້ວຍການປະຕິບັດກົດຣະບຽບ. ເຮົາຈະເຫັນຕົວຢ່າງໃນຊີວິດຂອງອັບຣາຮາມໃນປະຖົມມະການ 15:6 ຊຶ່ງໂປໂລໄດ້ອ້າງມາໃຫ້ຊາວຄາລາເຕັຽເຫັນເປັນຕົວຢ່າງໃນບົດຮຽນບົດນີ້. ໂປໂລໄດ້ກ່າວວ່າ "ເໝືອນ ດັ່ງອັບຣາຮາມນັ້ນແຫລະ ທ່ານໄດ້ເຊື່ອ ພຣະເຈົ້າ ແລະຄວາມເຊື່ອນັ້ນພຣະເຈົ້າຊົງນັບວ່າເປັນຄົນຊອບທັມແກ່ທ່ານ" (3: 6). ໂປໂລກ່າວຕໍ່ໄປວ່າ "ສັນນັ້ນເຈົ້າທັງຫລາຍຈົ່ງຮູ້ວ່າ ຄົນເຊື່ອນັ້ນແຫລະ, ເປັນລູກຂອງອັບຣາຮາມ ( 3:7). ບາງຄັ້ງເຮົາຈະບໍ່ເຂົ້າໃຈ ເປັນຫຍັງໂປໂລຈຶ່ງກ່າວວ່າ ເປັນລູກຂອງອັບຣາຮາມ? ແນ່ນອນເພາະເຮົາມີຄວາມເຊື່ອຄືອັບຣາຮາມ ເຮົາກໍເປັນລູກຂອງອັບຣາຮາມ ຄວາມຈິງແລ້ວເຣື່ອງບໍ່ຫມົດເທົ່ານັ້ນ ຄືວ່າໃນສມັຍຂອງພຣະເຢຊູພວກຄົນຢິວໄດ້ຖົກຖຽງກັນວ່າໃຜເປັນ ໄພ່ພົນຂອງພຣະເຈົ້າກັນແທ້? ຄົນທີ່ເປັນເຊື້ອສາຍຂອງອັບຣາຮາມທີ່ຮ້ອງວ່າເປັນໄພ່ພົນຂອງພຣະເຈົ້ານັ້ນມີບຸກຄະລິລັກສະນະຢ່າງໃດ? ໂປໂລໄດ້ຄຳນວນເຣື່ອງນີ້ຢ່າງຖ້ວນຖີ່ ແລະກໍສລຸບໄດ້ວ່າ ອັບຣາຮາມຜູ້ຊຶ່ງເປັນພຣະບິດາແຫ່ງຄວາມເຊື່ອ ແລະດ້ວຍຄວາມເຊື່ອນັ້ນແຫລະພຣະເຈົ້າຊົງຖືວ່າອັບຣາຮາມເປັນຄົນຊອບທັມ. ຄວາມເຊື່ອຂອງຄົນຊອບທັມມີມາກ່ອນກົດຣະບຽບຂອງໂມເຊບໍ່ແມ່ນບໍ່? ດັ່ງນັ້ນແຫລະການທີ່ຈະເປັນຄົນຊອບທັມນັ້ນຈຶ່ງບໍ່ຂຶ້ນຢູ່ກັບການປະຕິບັດພຣະບັນຍັດ. ພຣະເຢຊູຊົງກ່າວວ່າ "ຢ່າຄຶດວ່າເຮົາມາລຶບລ້າງພຣະບັນຍັດ ແລະຖ້ອຍຄຳຂອງຜູ້ປະກາດພຣະທັມເສັຽ ເຮົາບໍ່ໄດ້ມາລຶບລ້າງ ແຕ່ມາເຮັດໃຫ້ສຳເຣັດຄົບຖ້ວນ" (ມ.ທ 5: 17). ຊຶ່ງເຮົາເຂົ້າໃຈວ່າບັດຍັດທີ່ມີມາແຕ່ຕົ້ນເດີມນັ້ນ ແມ່ນແນ່ໃສ່ພຣະເຢຊູນັ້ນເອງ ຕາບໃດພຣະເຢຊູບໍ່ສະເດັດລົງມາເກີດເປັນມະນຸດ ບັນຍັດກໍບໍ່ສຳເຣັດຫລືຄົບຖ້ວນ ດັ່ງນັ້ນແຫລະ ພຣະເຢຊູຈຶ່ງກ່າວວ່າພຣະອົງມາເຮັດໃຫ້ບັນຍັດຄົບຖ້ວນ. ຄືໃຫ້ທຸກຄົນຖິ້ມໃຈເກົ່າເອົາໃຈໃຫມ່ແລ້ວວາງໃຈເຊື່ອໃນພຣະເຢຊູ ພຣະບຸດອົງດຽວຂອງພຣະຜູ້ເປັນເຈົ້າ, ຄົນທີ່ເຊື່ອເລະວາງໃຈໃນພຣະບຸດນັ້ນຈະກາຍເປັນ ຄົນຊອບທັມທາງ ຄວາມເຊື່ອທາງດຽວເທົ່ານັ້ນ.

ອັບຣາຮາມມີຄວາມເຊື່ອນີ້ ເພິ່ນຈຶ່ງປະຕິບັດຕາມຄຳສັ່ງພຣະເຈົ້າເມື່ອພຣະເຈົ້າສັ່ງເພິ່ນໃຫ້ອອກຈາກບ້ານເກີດເມືອງນອນ, ພັດພາກຈາກພໍ່ແລະອ້າຍນ້ອງຂອງຕົນໄປຕາມພຣະເຈົ້າຊົງສັ່ງເພິ່ນຈຶ່ງໄດ້ຊື່ວ່າ "ຊອບທັມຍ້ອນຄວາມເຊື່ອ". ເມື່ອເວລາເຖົ້າແກ່ແລ້ວເພິ່ນມີລູກຊາຍດຽວພຣະເຈົ້າໄດ້ລອງໃຈເພິ່ນໃຫ້ຂ້າລູກຊາຍຖວາຍພຣະເຈົ້າ ເພິ່ນກໍປະຕິບັດແລະໃນ ທີ່ສຸດເທວະດາຂອງອົງພຣະຜູ້ເປັນເຈົ້າໄດ້ບອກເພິ່ນວ່າ "ຢ່າທຳຮ້າຍຫຼັງແກ່ເດັກຊາຍຜູ້ນີ້ ບັດນີ້ເຮົາຮູ້ແລ້ວວ່າເຈົ້າເຊື່ອຟັງແລະ ຢຳເກງພຣະເຈົ້າຢູ່ສເມີ (ປະຖົມມະການ 21:12ກ). "ບໍ່ມີມະນຸດຄົນໃດທີ່ຊົງຖືວ່າເປັນ ຄົນຊອບທັມຕໍ່ພຣະພັກພຣະເຈົ້າ ໂດຍປະຕິບັດພຣະບັດຍັດ ເພາະວ່າຜູ້ຊົງຖືວ່າເປັນຄົນຊອບທັມເພາະດ້ວຍຄວາມເຊື່ອ ຜູ້ນັ້ນແຫລະ, ຈະໄດ້ຊີວິດ" (ຄາລາເຕັຽ 3:11).

3. <u>ພຣະສັນຍາເຮັດໃຫ້ເຫັນແຈ້ງ ວ່າຄວາມເຊື່ອເປັນທົນທາງສູ່ຄວາມຊອບທັມ</u> (3:15-20).

ພຣະເຈົ້າໄດ້ຊົງສັນຍາກັບອັບຣາຮາມ "ຈົ່ງນັບດວງດາວຢູ່ທ້ອງຟ້າທີ່ເຈົ້າເຫັນຢູ່ນັ້ນເບິ່ງດູ ນັບໄດ້ບໍ່? ເຈົ້າຈະມີເຊື້ອສາຍຫຼາຍຄືກັນກັບດວງດາວເຫຼົ່ານັ້ນ" ອັບຣາຮາມກໍເຊື່ອຟັງພຣະຜູ້ເປັນເຈົ້າ ຍ້ອນຄວາມເຊື່ອນັ້ນ ພຣະອົງຈຶ່ງຊົງຖືວ່າ ເພິ່ນເປັນຜູ້ຊອບທັມ (ປະຖົມມະການ 15: 5-6). ໂປໂລໄດ້ຍົກຕົວຢ່າງເຣື່ອງສຳຄັນມາກ່າວຕໍ່ຊາວຄາລາເຕັຽຄືເຣື່ອງພຣະເຈົ້າສັນຍາກັບອັບຣາຮາມ 430 ປີກ່ອນຫນ້າມີພຣະບັນຍັດ. ໂປໂລໄດ້ອະທິບາຍວ່າ "ພຣະເຈົ້າໄດ້ສັນຍາກັບອັບຣາຮາມໃຫ້ <u>ເຊື້ອສາຍຂອງເພິ່ນ</u> (ບໍ່ແມ່ນເຊື້ອສາຍທັງຫລາຍ) ຫມາຍຄວາມວ່າອອກມາຈາກຄົນຜູ້ດຽວ ແລະຜູ້ນັ້ນແມ່ນພຣະເຢຊູຄຣິດນັ້ນເອງ. ລຳດັບເຊື້ອວົງມີຢູ່ໃນມັດທາຍ 1:1-16. ໂປໂລໄດ້ອະທິບາຍດັ່ງນີ້ກໍເພາະພວກເຂົາເຂົ້າໃຈວ່າ ພຣະເຈົ້າໄດ້ອວຍພອນແກ່ເຊື້ອສາຍທັງຫລາຍຂອງທ່ານ ຊຶ່ງເປັນການເຂົ້າໃຈຜິດຢ່າງແທ້ຈິງ.

ພວກຄົນຢິວພາກັນເຂົ້າໃຈວ່າ ພຣະເຈົ້າໄດ້ສັນຍາກັບອັບຣາຮາມແລະເຊື້ອສາຍທັງຫລາຍຂອງເພິ່ນ ຄຳວ່າເຊື້ອສາຍທັງ ຫລາຍໝາຍເຖິງຊາດຢິວ, ແຕ່ໂປໂລໄດ້ອະທິບາຍໃຫ້ເຂົາຟັງວ່າ ພຣະເຈົ້າໄດ້ສັນຍາກັບອັບຣາຮາມໃຫ້ເຊື້ອສາຍຂອງ ເພິ່ນນັ້ນພວກທ່ານຈົ່ງຟັງໃຫ້ດີ. ພຣະເຈົ້າບໍ່ໄດ້ສັນຍາວ່າເຊື້ອສາຍທັງຫລາຍ ແຕ່ພຣະເຈົ້າສັນຍາວ່າເຊື້ອສາຍຂອງເພິ່ນ ນັ້ນເປັນຈຳນວນນ້ອຍໃນຫລັກວັຍຍະກອນທົ່ວໄປ. "ເຮົາຈະໃຫ້ <u>ເຊື້ອສາຍຂອງເຈົ້າ</u> ທະວີຂຶ້ນຈົນກາຍເປັນປະເທດຕ່າງໆ ແລະຫລາຍຄົນຢູ່ໃນຈຳນວນເຊື້ອສາຍນີ້ເປັນເຖິງຂັ້ນກະສັດ. ເຮົາຈະຖືຮັກສາຄຳໝັ້ນສັນຍາຂອງເຮົາທີ່ມີຕໍ່ເຈົ້າ ແລະຕໍ່ <u>ເຊື້ອສາຍຂອງເຈົ້າໃນເຊັ່ນຄົນຕໍ່ມາ</u> ໃຫ້ເປັນຄຳໝັ້ນສັນຍາອັນຕລອດໄປເປັນນິດ (ປະຖົມມະການ 17:6-7).

ດັ່ງນັ້ນ ເມື່ອເຮົາສລຸບຄວາມທັງໝົດກໍໝາຍຄວາມວ່າເຊື້ອສາຍຂອງອັບຣາຮາມ ແມ່ນຜູ້ມີຄວາມເຊື່ອໃນພຣະເຢຊູທຸກຄົນ ເພາະເຊື້ອສາຍຄົນຕໍ່ມາຂອງອັບຣາຮາມນັ້ນແມ່ນພຣະເຢຊູຜູ້ທີ່ພຣະເຈົ້າຊົງສັນ ຍາໄວ້ກັບເພິ່ນ. ດັ່ງນັ້ນ ຈະເປັນພຣະບັດຍັດແລະກົດຣະບຽບອື່ນທີ່ມີມາກ່ອນນັ້ນຈຶ່ງສິ້ນສຸດລົງເມື່ອພຣະເຢຊູສະເດັດລົງ ມາເກີດເປັນມະນຸດຕາມພຣະສັນຍາຂອງພຣະເຈົ້າທີ່ມີຕໍ່ອັບຣາຮາມ. ພຣະເຢຊູຊົງກ່າວວ່າ "ຢ່າຄຶດວ່າເຮົາມາລຶບລ້າງ ພຣະບັນຍັດແລະຖ້ອຍຄຳຂອງຜູ້ປະກາດ ພຣະທັມເສັຽ ເຮົາບໍ່ໄດ້ມາລຶບລ້າງ ແຕ່ມາເຮັດໃຫ້ສຳເຣັດຄົບຖ້ວນ" (ມ.ທ 5: 17).

<u>ຄຳຖາມ:</u>

1. ເປັນຫຍັງໂປໂລຈຶ່ງເວົ້າໃຫ້ຄຣິສຕຽນໃນແຂວງຄາລາເຕັຽວ່າ "ຊາວຄາລາເຕັຽບໍ່ມີຄວາມຄຶດເອີຍ?).

2. ເປັນຫຍັງໂປໂລຈຶ່ງຍົກຕົວຢ່າງອັບຣາຮາມໃຫ້ຊາວຄາລາເຕັຽຟັງ?

3. ອັບຣາຮາເປັນຄົນຊອບທັມໃນສາຍພຣະເນດພຣະເຈົ້າໄດ້ແນວໃດ?

4. ພຣະສັນຍາຂອງພຣະເຈົ້າຕໍ່ອັບຣາຮາມ ແລະພຣະບັນຍັດມີລະຍະຫ່າງກັນຈັກປີ? ພຣະສັນຍາແລະກົດບັນຍັດແມ່ນແນໃສ່ອັນໃດ?

5. ພຣະເຢຊູຊົງກ່າວວ່າ "ຢ່າຄຶດວ່າເຮົາມາລຶບລ້າງ ພຣະບັນຍັດ ແລະຖ້ອຍຄຳຂອງຜູ້ປະກາດ ພຣະທັມເສັຽ ເຮົາບໍ່ໄດ້ມາລຶບລ້າງ ແຕ່ມາເຮັດໃຫ້ສຳເຣັດຄົບຖ້ວນ" (ມ.ທ 5: 17). ໝາຍຄວາມວ່າແນວໃດ?

6. ເຮັດແນວໃດເຮົາຈຶ່ງຈະບໍ່ເປັນເໝືອນຄຣິສຕຽນໃນແຂວງຄາລາເຕັຽ?

7. ເຮົາຈະປັບປຸງຄວາມເຊື່ອຂອງເຮົາໃນວັນນີ້ຢ່າງໃດ?

# <u>ບົດຮຽນທີ 4</u>
# <u>ເວລາອັນເໝາະສົມ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ຄາລາເຕັຽ 3:19--4:11
<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ຄາລາເຕັຽ 3:19--4:31
<u>ຈຸດສຳຄັນຂອງບົດຮຽນນີ້:</u> ບອກໃຫ້ຮູ້ວ່າພຣະເຈົ້າໄດ້ສົ່ງພຣະບຸດຂອງພຣະອົງລົງມາເກີດຕາມກຳໜົດເວລາ ເພື່ອເຮົາຈະບໍ່ໄດ້ເປັນຂ້ອຍຂ້າຂອງບັນຍັດຕໍ່ໄປ ແຕ່ເປັນລູກຂອງພຣະເຈົ້າ.
<u>ຄຳຖາມເພື່ອການສຳຣວດ:</u> ພຣະບັນຍັດມີໄວ້ເພື່ອຫຍັງ? ຄຣິສຕຽນເຮົາຄວນຖືຮັກສາກົດບັນຍັດຫລືບໍ່?
<u>ຈຸດປະສົງຂອງບົດຮຽນນີ້</u>: ເພື່ອໃຫ້ເຮົາທັງຫລາຍໄດ້ປຽບທຽບຣະຫວ່າງການປະຕິບັດພຣະບັນຍັດແລະການເປັນລູກຂອງພຣະເຈົ້າ ມີຄວາມແຕກຕ່າງກັນຢ່າງໃດ?

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກຄົນເທົ່າທີ່ເຮົາມີໂອກາດແລະບໍ່ມີໂອກາດ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ.
- ສ້າງຄອບຄົວໃຫ້ເຂັ້ມແຂງໃນຄວາມເຊື່ອໃນພຣະເຈົ້າ ແລະຮັບໃຊ້ໃນພຣະນາມແຫ່ງພຣະເຢຊູຄຣິດ

ພຣະຄັມພີພາກພັນທະສັນຍາເດີມມີມາ ເພື່ອການປົກຄອງແລະຍັງເປັນຣະບຽບການຕ່າງໆ ຂອງຄົນໃນສມັຍນັ້ນອີກດ້ວຍ. ຕົວຢ່າງຫາກມີຜູ້ໃດຜູ້ນຶ່ງເຮັດຜິດຕໍ່ກົດບັນຍັດຂອງພຣະເຈົ້າພຣະອົງກໍບໍ່ໄດ້ລໍວັນນັ້ນວັນນີ້ ແມ່ນຕັດສິນລົງໂທດທັນທີ. ໃນສມັຍພຣະຄັມພີໃໝ່ມີຄວາມແຕກຕ່າງກັບພຣະຄັມພີເດີມ, ຊຶ່ງພວກເຮົາໄດ້ເຂົ້າໃຈວ່າເປັນສມັຍພຣະຄຸນພຣະເຈົ້າ. ຄືພຣະອົງໄດ້ຊົງໂຜດປະທານພຣະບຸດອົງດຽວຂອງພຣະອົງລົງມາເກີດເປັນມະນຸດ ແລະຍອມຕາຍແທນຄວາມຜິດບາບຂອງມະນຸດທັງປວງ. ຖ້າຈະເວົ້າໃຫ້ແຈ້ງແລ້ວແມ່ນວ່າໃນພຣະຄັມພີເດີມຍັງບໍ່ມີຄວາມລອດພົ້ນມາເຖິງມະນຸດເຮົາເທື່ອ ເພາະຄວາມລອດພົ້ນນັ້ນໄດ້ມີມາທາງພຣະເຢຊູຄຣິດເທົ່ານັ້ນ. ທີ່ຂ້າພະເຈົ້າກ່າວເຊັ່ນນີ້ບໍ່ໄດ້ໝາຍຄວາມວ່າພຣະຄັມພີເດີມບໍ່ສຳຄັນ. ຫາກເຮົາຈະຮຽນແຕ່ພຣະຄັມພີໃໝ່ເທົ່ານັ້ນເຮົາກໍຈະບໍ່ຮູ້ຈັກການຕີຄວາມໝາຍຂອງພຣະຄັມພີຢ່າງຖືກຕ້ອງ ເພາະເບື້ອງຫລັງຂອງພຣະຄັມພີໃໝ່ແມ່ນຢູ່ທີ່ພຣະຄັມພີເດີມ. ດັ່ງນັ້ນກົດຣະບຽບໃນພຣະຄັມພີເດີມແລະພຣະຄັມພີໃໝ່ໃນສມັຍຂອງພຣະເຢຊູຈຶ່ງໄປຄຽງຄູ່ກັນຕາມການເວລາອັນເໝາະສົມ.

<u>ບັນຍັດຕາມການເວລາ</u> (3:19--4:3)
ໂປໂລວາດພາບເຣື່ອງກົດບັນຍັດນັ້ນເຮັດໜ້າທີ່ເໝືອນຜູ້ຄຸມນັກໂທດໃນຄຸກຜູ້ນຶ່ງ. ດັ່ງນັ້ນເຮົາຈະເຫັນວ່າພຣະເຈົ້າຕັ້ງກົດບັນຍັດໃຫ້ຄົນໃນສມັຍເດີມນັ້ນກໍເພື່ອບັງຄັບ ແລະລົງໂທດການລ່ວງລະເມີດຂອງມະນຸດຕາມການຂອງເຂົາຈົນ ກວ່າເຊື້ອສາຍທີ່ໄດ້ສັນຍານັ້ນມາເຖິງ (3:19-20). ໃນນັ້ນເຮົາສັງເກດເຫັນຄວາມສຳຄັນຢູ່ສອງຢ່າງຄື:

1. ພຣະບັນຍັດມີໄວ້ກໍເພື່ອຜິດບາບຈະປາກົດເປັນການລ່ວງລະເມີດ (3:19ກ) ແປວ່າ ພຣະບັນຍັດມີໄວ້ບັງຄັບ, ລົງໂທດທຸກຄົນທີ່ລ່ວງລະເມີດຕາມການຂອງຜູ້ລ່ວງລະເມີດສຸດແລ້ວແຕ່ການກະທຳຂອງບຸກຄົນນັ້ນ.

2. ຈົນກວ່າເຊື້ອສາຍທີ່ໄດ້ສັນຍານັ້ນຈະມາເຖິງ (3:19ຂ) ແປວ່າ ບັນຍັດນັ້ນຈະໃຊ້ກັນໄປຈົນກວ່າພຣະເຢຊູຜູ້ເປັນເຊື້ອສາຍທີ່ພຣະເຈົ້າໄດ້ສັນຍາໄວ້ກັບອັບຣາຮາມນັ້ນມາເຖິງ.

ມາບັດນີ້ພຣະເຢຊູຜູ້ເປັນເຊື້ອສາຍແຫ່ງພັນທະສັນຍາມາເຖິງແລ້ວກົດບັນຍັດນັ້ນສົມຄວນທີ່ຈະຍົກເລີກເສັຽ. ດ້ວຍເຫດວ່າບັນຍັດທີ່ບົ່ງໄວ້ໃນສມັຍເດີມນັ້ນໄດ້ສຳເຣັດເມື່ອເຊື້ອສາຍແຫ່ງພັນທະສັນຍາມາເຖິງ. ບັນຍັດກໍດີແທ້ ເພາະເປັນກົດບັງຄັບບໍ່ໃຫ້ຄົນທັງຫລາຍເຮັດຕາມໃຈຕົນເອງ ແຕ່ກົດບັນຍັດນັ້ນຈຳເປັນຕ້ອງໃຊ້ໃຫ້ຖືກຕ້ອງຕາມການເວລາສມັຍຂອງໃຜລາວ. ບັນຍັດທີ່ໄດ້ກ່າວມານີ້ໄດ້ຈົບລົງເມື່ອເຊື້ອສາຍພັນທະສັນຍາມາເຖິງຄືຕົວພຣະເຢຊູຄຣິດເອງເປັນຜູ້ທີ່ພຣະເຈົ້າໄດ້ສັນຍາໄວ້ກັບອັບຣາຮາມ.

<u>ພຣະເຢຊູຕາມກຳນົດ</u> (4:4-20)

ເມື່ອຄົບກຳນົດແລ້ວ ພຣະເຈົ້າກໍຊົງໃຊ້ພຣະບຸດຂອງພຣະອົງມາ ຊົງປະສູດຈາກຜູ້ຍິງ, ແລະຊົງຖືກຳເນີດໃຕ້ພຣະບັນຍັດ ເພື່ອຈະຊ່ອຍໄຖ່ເອົາຄົນເຫລົ່ານັ້ນທີ່ຢູ່ໃຕ້ພຣະບັນຍັດກາຍມາເປັນບຸດ "ແລະເພາະເຈົ້າທັງຫລາຍເປັນບຸດພຣະເຈົ້າແລ້ວ ພຣະອົງຈຶ່ງຊົງໃຊ້ພຣະວິນຍານແຫ່ງພຣະບຸດຂອງພຣະອົງເຂົ້າມາໃນໃຈຂອງພວກເຮົາແລ້ວຮ້ອງວ່າ "ອັບບາ" ຄືພຣະບິດາ (4:5-6).

1. ຈົນເຖິງກຳນົດເວລາຫມາຍຄວາມວ່າ ກົດບັນຍັດນັ້ນມີໄວ້ຖ້າພຣະບຸດພຣະເຈົ້າມາເກີດ (ມັດທາຍ 11:11)

2. ກຳນົດເວລາ ຫມາຍຄວາມວ່າພຣະບິດາເປັນຜູ້ຊົງຕັ້ງເວລາໄວ້ກ່ອນແລ້ວ ຄືເວລາພຣະບຸດລົງມາເກີດຊຶ່ງເປັນເວລາແຫ່ງການໄຖ່ໃຫ້ພົ້ນຈາກບາບແລະກົດບັນຍັດຂອງສາສນາ.

3. ຊ່ອຍໄຖ່ເອົາຄົນເລົ່ານັ້ນທີ່ຢູ່ໃຕ້ພຣະບັນຍັດ ຄືໃຫ້ອອກຈາກການເປັນຂ້ອຍຂ້າກາຍມາເປັນບຸດ(ລູກ) ເພາະລູກແລະຂ້ອຍຂ້ານັ້ນຕ່າງກັນ. (4:7) ຖ້າເຮົາຖາມກັນວ່າ ເຮົາຢາກເປັນຂ້ອຍຂ້າຫລືເປັນລູກ? (4:9ຂ). ທ່ານຄົງຕອບວ່າ ຢາກເປັກລູກຫລາຍກວ່າ. ດັ່ງນັ້ນພຣະເຢຊູຈຶ່ງສອນໃຫ້ສາວົກອ້ອນວອນເລີ້ມຕົ້ນດ້ວຍຄຳວ່າ ພຣະບິດາ (ມັດທາຍ 6:9).

4. ຮ້ອງວ່າອັບບາ ເປັນພາສາອາຣາມິກ ແປວ່າ "ພໍ່." ດັ່ງນັ້ນເຮົາທັງຫລາຍບໍ່ແມ່ນຂ້ອຍຂ້າແຕ່ເປັນລູກ. ຕາມທັມມະດາຂ້ອຍຂ້າຈະເຮັດສິ່ງໃດຕໍ່ເຈົ້ານາຍດ້ວຍຄວາມຈຳໃຈ ແລະກໍຫວັງວ່າວັນນຶ່ງຈະຫລຸດພົ້ນການເປັນຂ້ອຍຂ້າ ແຕ່ລູກບໍ່ໄດ້ເຮັດດັ່ງນັ້ນ ເພາະລູກຈະເປັນລູກຕລອດໄປ.

<u>ເປັນລູກຕາມພຣະສັນຍາ</u> ( 4:21-31)

ໂປໂລໄດ້ຍົກເອົາຕົວຢ່າງເຣື່ອງຂອງອັບຣາຮາມມີລູກຊາຍສອງຄົນ ຊຶ່ງຄົນນຶ່ງເກີດຈາກຈາກຄົນໃຊ້ແລະອີກຄົນນຶ່ງເກີດຈາກເມັຽຂອງເພິ່ນອັນແທ້ຈິງ. ເດັກນ້ອຍທັງສອງນີ້ເກີດມາກໍມີຖານະແລະອຳນາດຕ່າງກັນ. ເຊັ່ນລູກຜູ້ທີ່ເກີດຈາກນາງຮາຄານມີຊື່ວ່າ ອິດສະແມວ, ຜູ້ເປັນຂ້ອຍຂ້າກໍເກີດໃນຖານະຂ້ອຍຂ້າຈຶ່ງໄດ້ຄວາມສັນຍາຈາກພູຊີນາຍ (ບ່ອນໂມເຊຮັບພຣະ ບັນຍັດສິບ ປະການ) ພູຊີນາຍທີ່ປະເທດອາຣາເບັຽ ແລະໃນເວລານີ້ອາຣາເບັຽຍັງເປັນຂ້ອຍຂ້າຂອງພຣະບັນຍັດ ນັ້ນຢູ່. ສ່ວນລູກອີກຜູ້ນຶ່ງຄືອີຊາກທີ່ເກີດຈາກນາງຊາຣາຜູ້ເປັນເມັຽຂອງ ອັບຣາຮາມນັ້ນກໍເກີດຕາມພຣະສັນຍາຂອງພຣະເຈົ້າ ຊຶ່ງເວລານີ້ເປັນກຸງເຢຣູຊາເລັມແລະກຸງເຢຣູຊາເລັມກໍພົ້ນຈາກການເປັນຂ້ອຍຂ້າ. ໃນຄາວນັ້ນຜູ້ທີ່ເກີດ ຕາມທັມມະດາ (ເກີດໃນຖານະເປັນຂ້ອຍຂ້າ) ໄດ້ຂົ່ມເຫັງຜູ້ເກີດຕາມພຣະວິນຍານແນວໃດເວລານີ້ກໍເປັນເຊັ່ນນັ້ນ. ສິ່ງສຳຄັນເຮົາຈະເຫັນວ່າລູກຂອງຍິງຂ້ອຍຂ້ານັ້ນຈະບໍ່ໄດ້ຮັບມໍຣະດົກ, ຄືລູກທີ່ຢູ່ໃຕ້ພຣະບັນຍັດຈະບໍ່ໄດ້ ຮັບມໍຣະດົກ. ດັ່ງນັ້ນຄຳຖາມຈຶ່ງມີຢູ່ວ່າເຮົາຢາກເປັນລູກຜູ້ໃດກັນແທ້?

1. ທ້າວອິດສະແມວເກີດຈາກສາວໃຊ້ນາງຮາຄານ ເກີດຕາມທັມະຊາດ ແປວ່າ ພຣະເຈົ້າບໍ່ໄດ້ສັນຍາໃດໆ? ດັ່ງນັ້ນຄົນຂອງອິສະແມວຈຶ່ງຍັງເປັນຂ້ອຍຂ້າຢູ່ເທົ່າທຸກວັນນີ້.

2. ທ້າວອີຊາກ ເກີດຈາກນາງຊາຣາເກີດແບບພິເສດ ຄືພຣະເຈົ້າໄດ້ໃຫ້ຄຳໝັ້ນສັນຍາກັບອັບຣາຮາມໄວ້ລ່ວງໜ້າກໍຖືກຊ່ອຍໃຫ້ພົ້ນຈາກພຣະບັນຍັດ ແລະກາຍມາເປັນລູກ(ປ.ຖ.ກ 10:18). ແລະບໍ່ຈຳເປັນຕ້ອງຢູ່ໃຕ້ກົດບັນຍັດເພາະເປັນລູກ.

3. ໂປໂລສະແດງໃຫ້ເຫັນຕົວຢ່າງໃຫ້ເຫັນລູກຂອງອັບຣາຮາມສອງຄົນໃນຣະວ່າງການເປັນຂ້ອຍຂ້າພຣະບັນຍັດແລະ ການເປັນລູກມີຄວາມແຕກຕ່າງກັນ.

<u>ຄຳຖາມ:</u>

1. ກົດບັນຍັດເຮັດໜ້າທີ່ເໝືອນຜູ້ຄຸມນັກໂທດໃນຄຸກຜູ້ນຶ່ງຢ່າງໃດ?

2. ພຣະເຢຊູແລະກົດບັນຍັດມີຄວາມແຕກຕ່າງກັນຢ່າງໃດ?

3. ເປັນຂ້ອຍຂ້າໃຕ້ອຳນາດສິ່ງສັກສິດທັມະດາແຫ່ງສາກົນຈັກກະວານແປວ່າຫຍັງ? (4:3) ດຽວນີ້ເຮົາຍັງເປັນຂ້ອຍຂ້າອັນໃດອີກແດ່?

4. ຊີວິດການເປັນຂ້ອຍຂ້າ ແລະເປັນລູກມີຄວາມແຕກຕ່າງກັນຢ່າງໃດ?

5. ກົດບັນຍັດມີໄວ້ເພື່ອຫຍັງ? ເປັນຫຍັງກົດບັນຍັດຈຶ່ງຖືກຍົກເລີກ?

## ບົດຮຽນທີ 5
## ມີອິສຣະຈາກຄວາມບາບເພື່ອຮັບໃຊ້

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ຄາລາເຕັຽ 5:1-6, 13-26
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ຄາລາເຕັຽ 5
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະຄຣິດຊົງປົດປ່ອຍພວກເຮົາຈາກການເປັນທາດແລະຈາກຄວາມບາບເພື່ອພວກເຮົາຈະໄດ້ຮັບໃຊ້ພຣະອົງດ້ວຍຄວາມຮັກ ໂດຍການນຳພາຂອງພຣະວິນຍານບໍຣິສຸດ.
<u>ຄຳຖາມເພື່ອການສຳຣວດ:</u> ຖ້າເຮົາມີເສຣີພາບໃນພຣະຄຣິດ, ພວກເຮົາສາມາດເຮັດທຸກຢ່າງໄດ້ຕາມໃຈບໍ່?
<u>ຈຸດປະສົງຂອງບົດຮຽນນີ້:</u> ນຳເສຣີພາບຂອງພຣະຄຣິດມາສູ່ຊີວິດຂອງພວກເຮົາ.

<u>ເຣື່ອງທີ່ກຳລັງເນັ້ນໜັກໃນເທັກຊັດ:</u>

- ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ
- ຮັບໃຊ້ເພື່ອນມະນຸດໃນພຣະນາມພຣະເຢຊູ
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ
- ເສີມສ້າງຄອບຄົວຄຣິສຕຽນ
- ຊ່ວຍຄຣິສຕະຈັກໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກເພີ່ມຂຶ້ນ

### ຄຳນຳ

ບາງຄັ້ງເສຣີພາບກາຍເປັນບໍ່ເກີດຂອງຄວາມກົດດັນ, ຄວາມຮັບຜິດຊອບ, ແລະ ຄວາມສັບສົນ ໃຫ້ກັບສ່ວນບຸກຄົນ. ຊາວຄາລາເຕັຽ ຜູ້ໄດ້ຮັບເສຣີພາບຈາກພຣະບັນຍັດ ກຳລັງຈະນຳຕົວເອງກັບຄືນໄປເປັນຂ້ອຍຂ້າຂອງການຖືກົດ. ແຕ່ກ່ອນທີ່ທຸກຢ່າງຈະສາຍເກີນແກ້, ໂປໂລໄດ້ຮຽກຮ້ອງໃຫ້ພວກເຂົາຈົ່ງຕັ້ງໝັ້ນຄົງຢູ່ໃນອິສຣະພາບທີ່ເຂົາໄດ້ຮັບຈາກພຣະເຢຊູຄຣິດ.

<u>ຈົ່ງຕັ້ງໝັ້ນຄົງຢູ່ໃນເສຣີພາບ</u> (5:1-6)

ພຣະເຢຊູຄຣິດໄດ້ຊົງສະລະພຣະຊົນເພື່ອຊາວຄາລາເຕັຽຈະໄດ້ຮັບເສຣີພາບ. ທຸກຄົນໄດ້ມີອິສຣະຈາກການປະຕິບັດຕາມພຣະບັດຍັດທັງໝົດ ເພາະພຣະເຢຊູຄຣິດໄດ້ຊົງເຮັດໃຫ້ທຸກຢ່າງສຳເຣັດລົງ. ພວກເຂົາໄດ້ຮັບການປົດປ່ອຍຈາກອຳນາດຂອງຄວາມບາບ ເພາະການເຊື່ອຟັງໃນອົງພຣະຄຣິດ. ໂປໂລເຕືອນຊາວຄາລາເຕັຽບໍ່ໃຫ້ໄປຟັງຄຳສອນຂອງພວກຮັບພິທີຕັດ ເພາະພວກນີ້ກຳລັງຈະນຳຄຣິສຕຽນທັງຫລາຍໃຫ້ກັບໄປເປັນຂ້ອຍຂ້າຂອງພຣະບັນຍັດອີກ. ພວກຮັບພິທີຕັດ ຫລືພວກຢູດາອາຍເຊີ ແມ່ນ ພວກຄຣິສຕຽນຊາວຢິວທີ່ພະຍາຍາມບັງຄັບໃຫ້ພວກຄຣິສຕຽນຊາວຕ່າງຊາດໄປຮັບເອົາພິທີຕັດ. ໂປໂລບອກວ່າ ຖ້າຊາວຄາລາເຕັຽຍອມຮັບພິທີຕັດ, ພວກເຂົາຈຳເປັນຕ້ອງປະຕິບັດຕາມພຣະບັນຍັດອື່ນໆທັງໝົດເພາະໄມ້ພົນຂອງພຣະເຈົ້າຈະແຍກພຣະບັນຍັດອອກຈາກກັນບໍ່ໄດ້ (5:2-6). ສະນັ້ນຖ້າພວກເຂົາຈະ

ຖື ພຣະບັນຍັດ, ເຂົາຈະຕ້ອງໄດ້ຖິ້ມຄວາມລອດພົ້ນທີ່ໄດ້ມາເພາະພຣະຄຸນຂອງພຣະເຈົ້າຜ່ານທາງພຣະເຢຊູຄຣິດ ແລະ ປະຕິເສດເສຣີພາບທີ່ພຣະເຈົ້າໄດ້ຊົງມອບໃຫ້.

ໂປໂລເຕືອນວ່າ ຖ້າຜູ້ໃດຢາກໄດ້ຄວາມຊອບທັມໂດຍພຣະບັນຍັດ ຜູ້ນັ້ນກໍຈະຖືກຕັດຂາດຈາກພຣະຄຣິດ ແລະຈະ "ຫລຸດ ຕົກຈາກພຣະຄຸນ" (5:4). ການຫລຸດຕົກຈາກພຣະຄຸນບໍ່ໄດ້ຫມາຍຄວາມວ່າຄົນຜູ້ນັ້ນຈະເສັຽຄວາມລອດພົ້ນ; ເພາະທຸກ ຄົນທີ່ເຊື່ອໃນອົງພຣະຄຣິດຈະບໍ່ເສັຽຄວາມລອດພົ້ນຂອງຕົນ. ການຍອມກັບໄປຢູ່ໃຕ້ພຣະບັນຍັດ ເປັນການ ປະຕິເສດ ຫົນທາງແຫ່ງພຣະຄຸນ. ໂປໂລອະທິບາຍວ່າຄຣິສຕຽນທີ່ແທ້ຈະຕ້ອງໃຊ້ຊີວິດໂດຍອາສັຍຣິດອຳນາດຂອງ ພຣະວິນຍານ (5:5-6); ຄຣິສຕຽນໄດ້ຮັບຣິດອຳນາດໂດຍທາງຄວາມເຊື່ອ. ຄວາມເຊື່ອນີ້ພາໃຫ້ມີຄວາມຮັກ ແລະ ຄວາມປະສົງທີ່ ຈະທຳການດີ. ພິທີຕັດບໍ່ມີປໂຍດສຳລັບຜູ້ເຊື່ອແຕ່ຢ່າງໃດ; ຄວາມເຊື່ອທີ່ສະແດງອອກດ້ວຍຄວາມຮັກ ມີປໂຍດສຳລັບ ໄພ່ພົນຂອງພຣະເຈົ້າ. ເສຣີພາບໃນຊີວິດຄຣິສຕຽນຈະບໍ່ນຳຜູ້ເຊື່ອໄປສູ່ຊີວິດອັນຊົ່ວຊ້າ ແຕ່ຈະນຳຜູ້ ເຊື່ອໃຫ້ຕິດສນິດຢູ່ ກັບພຣະຄຣິດ ແລ້ວຊີວິດຂອງພຣະອົງຈະປາກົດຜ່ານທາງຜູ້ເຊື່ອນັ້ນ.

ໃນຂໍ້ 7-12, ໂປໂລມີຄວາມສົງສັຍວ່າ ຊາວຄາລາເຕັຽຜູ້ຊຶ່ງດຳເນີນຊີວິດໃນຄວາມເຊື່ອຢ່າງເຂັ້ມແຂງເປັນຫຍັງພາ ກັນ ຢາກໄປຢູ່ໃຕ້ກົດບັງຄັບຂອງພວກຢູດາອາຍເຊີ ອີກ (5:7). ໂປໂລປະຕິເສດວ່າເຂົາບໍ່ໄດ້ປະກາດໃຫ້ທາງພິທີຕັດ ເພາະທຸກຄົນກໍໄດ້ເຫັນວ່າການທີ່ເຂົາຖືກຂົ່ມເຫງນັ້ນ ກໍເພາະເຂົາປະກາດເຣື່ອງໄມ້ກາງແຂນຂອງພຣະເຢຊູຄຣິດ (5:11). ເຂົາເຕືອນອີກເທື່ອນຶ່ງວ່າ ຄວາມເຊື່ອທີ່ແທ້ຈະຕ້ອງຕິດຕາມດ້ວຍການປະກອບການກະທຳທີ່ດີ (5:13). ຊາວຄາລາເຕັຽຄວນສຳນຶກວ່າ ເສຣີພາບທີ່ພວກເຂົາໄດ້ຮັບບໍ່ແມ່ນເສຣີພາບເພື່ອຈະເຮັດຄວາມຜິດບາບ; ແຕ່ໃນພຣະ ຄຣິດ, ພວກເຂົາ ໄດ້ຮັບເສຣີພາບຈາກຄວາມຜິດບາບ. ຂ່າວປະເສີດທີ່ໂປໂລທຳການປະກາດບໍ່ໄດ້ຜ່ອນສັ້ນຜ່ອນຍາວ ເຣື່ອງຄວາມບາບ; ເພາະຂ່າວປະເສີດຂອງອົງພຣະເຢຊູຄຣິດບໍ່ເຄີຍປະກາດວ່າ ພຣະເຈົ້າເປັນພຣະເຈົ້າທີ່ລະເຫລີງ ເຣື່ອງຄວາມປະພຶດ.

<u>ໃຊ້ເສຣີພາບເພື່ອຮັບໃຊ້ຄົນອື່ນ</u> (5:13-15)

ເສຣີພາບທີ່ພຣະຄຣິດໄດ້ນຳມາໃຫ້ຜູ້ທີ່ເຊື່ອ ບໍ່ແມ່ນເສຣີພາບເພື່ອພວກເຂົາຈະໄດ້ເຮັດຄວາມຜິດບາບຕາມລຳພັງໃຈ, ສະນັ້ນທຸກຄົນຕ້ອງໃຊ້ອິສຣະພາບຂອງຕົນດ້ວຍຄວາມຣະມັດຣະວັງ. ໂປໂລບອກຊາວຄາລາເຕັຽວ່າພວກເຂົາອາດຈະ ໃຊ້ເສຣີພາບຂອງຕົນໄດ້ສອງວິທີຄື: ນຶ່ງ, ພວກເຂົາສາມາດໃຊ້ເສຣີພາບເພື່ອເຮັດຕາມຕັນຫາຂອງມະນຸດ ເພາະພວກ ເຂົາໄດ້ປະກາດວ່າພວກຕົນມີເສຣີພາບຈາກກົດບັນຍັດແລ້ວ. ສອງ, ພວກເຂົາສາມາດໃຊ້ເສຣີພາບເພື່ອຫາໂອກາດໃນ ການຮັບໃຊ້ຊຶ່ງກັນແລະກັນໃນກຸ່ມຂອງພວກຜູ້ເຊື່ອທັງຫລາຍ. ແຕ່ໂປໂລເນັ້ນວ່າວິທີທີ່ສອງນັ້ນເປັນການໃຊ້ສິດເສຣີທີ່ ຖືກຕ້ອງ. ພວກເຂົາອາດຈະຄິດວ່າການເຮັດຕາມຕັນຫາມະນຸດຈະນຳໄປສູ່ອິສຣະພາບ, ແຕ່ຄວາມຈິງແລ້ວ ຄວາມຜິດ ບາບຂອງພວກເຂົານັ້ນແລະຈະນຳທຸກຄົນໃຫ້ກັບໄປເປັນຂ້ອຍຂ້າອີກເທື່ອນຶ່ງ. ຄົນໃຊ້ຢາເສບຕິດ ກໍເປັນທາດຂອງຢາ ເລົ່ານັ້ນ ແລະ ຄົນມັກຊື້ເຄື່ອງຂອງແພງໂດຍການເປັນຫນີ້ ກໍເປັນທາດຂອງເຈົ້າຫນີ້.

ໃນພຣະຄຣິດ, ພວກເຮົາໄດ້ມີອິສຣະພາບຈາກຄວາມຜິດບາບ ແຕ່ພວກເຮົາບໍ່ມີເສຣີພາບທີ່ຈະເຮັດຄວາມຜິດບາບຕໍ່ໄປ. ແຕ່ກ່ອນພວກເຮົາເປັນຂ້ອຍຂ້າຂອງຄວາມຜິດບາບ, ແຕ່ດຽວນີ້ ພວກເຮົາເປັນຂ້ອຍຂ້າຂອງຄວາມຊອບທັມ. ອິສຣະ ພາບຂອງພວກເຮົາບໍ່ແມ່ນອິສຣະພາບເພື່ອຢາກຫລົບຫນີຈາກພຣະເຈົ້າຫລືອິສຣະພາບຈາກສິ່ງທີ່ພຣະອົງຊົງມີພຣະປະ ສົງໃຫ້ພວກເຮົາເຮັດ. ຄຣິສຕຽນມີເສຣີພາບຈາກກົດຂອງພຣະບັນຍັດ ແລະມີເສຣີພາບທີ່ຈະສະແດງຄວາມຮັກຂອງ

ພຣະຄຣິດໃນຊີວິດຂອງຕົນ. ຕົວຢ່າງ, ຖ້າພວກເຮົາຮັກເພື່ອນບ້ານ (5:14) ພວກເຮົາກໍຈະບໍ່ເຮັດອັນຕະລາຍແກ່ພວກເຂົາ. ຄ ຣິສຕຽນທີ່ຄາລາເຕັຽອາດຈະມີປັນຫາເຣື່ອງຄວາມເວົ້າ (5:15), ເພາະໂປໂລໄດ້ເຕືອນພວກເຂົາໃຫ້ລະວັງເພາະການ "ກັດກັນແລະກິນເນື້ອກັນ" ຈະນຳໄປສູ່ຄວາມຈິບ ຫາຍ. ຄວາມຮັກຄືຢາແກ້, ໂປໂລເວົ້າໃນ ພຣະທັມໂຣມ 13:8 ວ່າ "ຜູ້ທີ່ຮັກເພື່ອນມະນຸດກໍປະຕິບັດຕາມພຣະບັນຍັດຢ່າງຄົບຖ້ວນແລ້ວ." ຄຣິສຕຽນຄົນໃດທີ່ຄິດວ່າຕົນເອງມີເສຣີພາບທີ່ຈະເຮັດຄວາມຜິດບາບໄດ້ຕາມລຳພັງໃຈ ຍັງບໍ່ເຂົ້າໃຈຄວາມໝາຍອັນເລິກເຊິ່ງເຣື່ອງໄມ້ກາງແຂນຂອງພຣະເຢຊູຄຣິດ.

<u>ຈະດຳເນີນຊີວິດແນວໃດ</u> (5:16-26)

ໂປໂລເລີ້ມພຣະຄຳຕອນນີ້ດ້ວຍການຊັກຊວນໃຫ້ຕັ້ງໝັ້ນຢູ່ໃນພຣະເຈົ້າ ໂດຍໃຫ້ພຣະວິນຍານເປັນຜູ້ຊີ້ນຳພາເພື່ອພວກ ເຮົາຈະບໍ່ໄດ້ເຮັດຕາມຕັນຫາຂອງຝ່າຍມະນຸດ. ມະນຸດກຳລັງຕໍ່ສູ້ກັບພຣະວິນຍານ. ຜູ້ທີ່ໃຊ້ຊີວິດຢູ່ໃນກົດບັນຍັດກໍອາສັຍກຳລັງຂອງເນື້ອໜັງ ແຕ່ຜູ້ທີ່ໃຊ້ຊີວິດຢູ່ໃນພຣະຄຸນກໍອາສັຍກຳລັງຂອງພຣະວິນຍານ. ການໃຊ້ຊີວິດໃນພຣະວິນ ຍານຄືການມອບຊີວິດແຕ່ລະມື້ໃຫ້ພຣະອົງເປັນຜູ້ຄວບຄຸມ ຄືການຍອມເຮັດຕາມພຣະຄຳຂອງພຣະເຈົ້າ. ພວກເຮົາມີ ອິສຣະເພາະພຣະຄຸນຂອງພຣະເຈົ້າ; ແຕ່ຝ່າຍມະນຸດ (ເນື້ອໜັງ) ພຍາຍາມຕໍ່ສູ້ກັບເສຣີພາບຂອງເຮົາຕລອດໄປ. "ເນື້ອໜັງ" ໝາຍເຖິງທັມມະຊາດຂອງມະນຸດທີ່ຍັງເຫລືອຢູ່ໃນພວກເຮົາທັ້ງໆທີ່ເຮົາໄດ້ຮັບການເກີດໃໝ່ແລ້ວ.

ໂປໂລໄດ້ໃຫ້ລາຍລະອຽດສຳລັບການງານຂອງມະນຸດທັມມະດາໃນ 5:19-21. ຖ້າເຮົາສັງເກດໃຫ້ດີພວກເຮົາຈະເຫັນຢ່າງແຈ່ມແຈ້ງດັ່ງນີ້: (1) ຄວາມຜິດບາບກ່ຽວກັບເຣື່ອງເພດ (19); (2) ຄວາມຜິດບາບກ່ຽວກັບການໄຫວ້ພຣະທຽມ (20); (3) ຄວາມຜິດບາບກ່ຽວກັບເຣື່ອງຄວາມສັມພັນ (20,21); (4) ຄວາມຜິບບາບອື່ນໆໃນທຳນອງດຽວກັນ (21). ໂປໂລເຕືອນວ່າຜູ້ທີ່ຍັງດຳເນີນຊີວິດດັ່ງກ່າວມານັ້ນຈະບໍ່ມີສ່ວນໃນຣາຊອານາຈັກຂອງພຣະເຈົ້າ (21). ໂປໂລໄດ້ໃຫ້ລາຍລະອຽດສຳລັບຜົນຂອງພຣະວິນຍານ ໃນ 5:22-23. ຜົນຂອງພຣະວິນຍານຄືສິ່ງທີ່ປາກົດໃນຊີວິດຂອງຜູ້ທີ່ເຕັມດ້ວຍພຣະວິນຍານແລະຍອມໃຫ້ພຣະອົງນຳພາ. ໂປໂລປະກາດວ່າ "ແມ່ນແຕ່ກົດໝາຍກໍບໍ່ໄດ້ຫ້າມສິ່ງເຫລົ່ານີ້." ໂປໂລເຕືອນຊາວຄາລາເຕັຽວ່າ ເວລາພຣະເຢຊູຄຣິດຕາຍຢູ່ເທິງໄມ້ກາງແຂນ, ທຸກຄົນທີ່ເຊື່ອໃນພຣະອົງກໍຕາຍຮ່ວມ ກັບພຣະອົງ. ຄວາມປາຖນາ ແລະຕັນຫາຂອງມະນຸດທັມມະດາກໍໄດ້ຖືກຄຶງໄວ້ທີ່ໄມ້ກາງແຂນແລ້ວ; ສະນັ້ນ ຄຣິສຕຽນ ຈະຕ້ອງດຳເນີນຊີວິດທີ່ຈະເປັນພະຍານວ່າພວກເຂົາມີພຣະເຈົ້າຢູ່ໃນຊີວິດຂອງຕົນ (24-25).

<u>ຄຳຖາມ</u>

1. ຖ້າພວກເຮົາໃຊ້ເສຣີພາບເພື່ອເຮັດຄວາມຜິດບາບ, ພວກເຮົາກໍນຳຕົວເອງໄປສູ່ການເປັນທາດອີກແມ່ນຫລືບໍ່?

2. ມີຜູ້ໃດໃນກຸ່ມຄຣິສຕຽນຂອງພວກທ່ານທີ່ມີຊີວິດທີ່ເຕັມໄປດ້ວຍຜົນຂອງພຣະວິນຍານ? ຄົນອື່ນໆສັງເກດເຫັນພຣະເຈົ້າໃນຊີວິດຂອງເຂົາໄດ້ຢ່າງໃດ?

3. ເປັນຫຍັງຄຣິສຕະຈັກຫລາຍແຫ່ງຈຶ່ງເຕັມໄປດ້ວຍການວິວາດຜິດຖຽງກັນ ແລະການອິດສາກັນ? ທ່ານຄິດວ່າຄຣິສຕະຈັກຄວນຈະສອນ ຜູ້ທີ່ເຊື່ອໃໝ່ ຫລື ສະມາຊິກໃໝ່ແນວໃດເພີ້ມເຕີມ?

# ບົດຮຽນທີ 6
# ທາງໄປສູ່ການເປັນຄຣິສຕະຈັກທີ່ສົມບູນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ຄາລາເຕັຽ 6:1-14

ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ຄາລາເຕັຽ 6

ຈຸດສຳຄັນຂອງບົດຮຽນນີ້: ຖ້າເຮົາຮູ້ຈັກຄວາມໝາຍທີ່ວ່າພຣະຄຣິດຊົງຢູ່ໃນຊີວິດພວກເຮົາ, ພວກເຮົາຈະພຍາຍາມໃຊ້ຊີວິດຮ່ວມກັນໃນບັນຍາກາດຂອງຄຣິສຕຽນສັມພັນ.

ຄຳຖາມເພື່ອການສຳຣວດ: ພຣະເຢຊູຈະຍອມຮັບຮູ້ວ່າຄຣິສຕະຈັກທີ່ທ່ານສັງກັດຢູ່ນັ້ນແມ່ນຂອງພຣະອົງບໍ່?

ຈຸດປະສົງຂອງບົດຮຽນນີ້: ເພື່ອຈະໄດ້ນຳຄວາມສັມພັນທີ່ແທ້ຈິງຂອງຄຣິສຕຽນໄປປະຕິບັດໃນຄວາມສັມພັນຂອງທ່ານ ກັບສະມາຊິກໃນຫ້ອງຮຽນ ແລະເພື່ອນສະມາຊິກໃນຄຣິສຕະຈັກ.

ເຣື່ອງທີ່ກຳລັງເນັ້ນໜັກໃນເທັກຊັດ:

- ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ
- ຮັບໃຊ້ເພື່ອນມະນຸດໃນພຣະນາມພຣະເຢຊູ
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ
- ເສີມສ້າງຄອບຄົວຄຣິສຕຽນ
- ຊ່ວຍຄຣິສຕະຈັກໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກເພີ້ມຂຶ້ນ

## ຄຳນຳ

ໃນບົດສຸດທ້າຍຂອງພຣະທັມຄາລາເຕັຽນີ້, ໂປໂລຂໍຮ້ອງໃຫ້ຄຣິສຕຽນທີ່ ເມືອງຄາລາເຕັຽຈົ່ງພາກັນສ້າງຄຣິສຕະຈັກໃຫ້ສົມບູນຂຶ້ນ. ທ່ານໄດ້ໃຫ້ລັກສະນະຕ່າງໆຂອງຄຣິສຕະຈັກທີ່ສົມບູນແລ້ວ, ໂດຍສະເພາະແມ່ນເຣື່ອງການຊ່ວຍຄົນທີ່ໜີຈາກຄຣິສຕະຈັກໃຫ້ກັບຄືນດີ, ການຊ່ອຍແບກພາຣະຂອງກັນແລະກັນ, ແລະການເຮັດການດີໃນຄນະທີ່ລໍຖ້າລະດູແຫ່ງການເກັບກ່ຽວ.

ຄຣິສຕະຈັກທີ່ສົມບູນຊ່ວຍຄົນໃຫ້ຄືນດີດ້ວຍວິທີທີ່ຖືກຕ້ອງ (6:1)

ອິສຣະພາບຈາກກົດບັນຍັດບໍ່ໄດ້ໝາຍຄວາມວ່າຄຣິສຕຽນຈະຢູ່ແບບເອກຣາຊຈາກຜູ້ທີ່ເຊື່ອຄົນອື່ນໆ. ພວກເຮົາເປັນພີ່ນ້ອງກັນໃນຄອບຄົວຂອງພຣະຄຣິດ ແລະພວກເຮົາມີໜ້າທີ່ດູແລຮັບໃຊ້ຊຶ່ງກັນແລະກັນ. ເມື່ອມີຄົນໃດຄົນນຶ່ງໄດ້ຫລົງເຮັດຜິດແລະອອກໜີຈາກໂບດ, ພວກເຮົາບໍ່ຄວນປະນາມເຂົາ. ແຕ່ຜູ້ທີ່ຢູ່ຝ່າຍວິນຍານ ຫລື ຜູ້ທີ່ດຳເນີນຊີວິດໃນພຣະເຈົ້າ ແລະມີຜົນຂອງຝ່າຍວິນຍານໃນຊີວິດມີໜ້າທີ່ໃນການໄປນຳຄົນທີ່ຫລົງໄປໃຫ້ກັບຄືນມາ. ຄຣິສຕຽນທຸກຄົນເປັນພາກສ່ວນຂອງພຣະກາຍ; ຄຣິສຕຽນຄົນນຶ່ງທີ່ຕົກຢູ່ໃນຄວາມບາບຈະເຮັດໃຫ້ພຣະກາຍອ່ອນແອລົງ. ໂປໂລສອນເຣື່ອງວິນັຍໃນຄຣິສຕະຈັກດັ່ງນີ້: (1) ຄຣິສຕະຈັກພົບຄົນຫລົງຜິດ (6:1); (2) ການໄປນຳຄົນໃຫ້ກັບຄືນດີເປັນໜ້າທີ່

ຂອງຜູ້ທີ່ຢູ່ຝ່າຍວິນຍານ (6:1); (3) ຈຸດປະສົງຂອງວິນັຍໃນຄຣິສຕະຈັກຄືການນໍາຄົນທີ່ຫລົງຜິດໃຫ້ກັບຄືນມາ; (4) ຫລັງຈາກການນໍາຄົນໃຫ້ກັບຄືນດີແລ້ວ, ພວກເຮົາທຸກຄົນຈະຕ້ອງຮູ້ຕົວວ່າເຮົາເອງກໍອາດຈະເຮັດຄວາມຜິດບາບເຊັ່ນນັ້ນໄດ້ເຫມືອນກັນ. ຄຣິສຕະຈັກທີ່ສົມບູນດີຈະໃຊ້ວິນັຍໃນຄຣິສຕະຈັກເພື່ອນໍາຄົນທີ່ຫລົງຜິດໃຫ້ກັບຄືນດີເພື່ອເຂົາຈະໄດ້ຮັບການອົບຮົມໃຫ້ເປັນສາວົກທີ່ເຂັ້ມແຂງ. ໃນກໍຣະນີທີ່ຜູ້ຫລົງຜິດບໍ່ຍອມກັບຄືນດີ, ຄຣິສຕະຈັກຈະຕ້ອງປະຕິບັດຕາມຣະບຽບວິນັຍທີ່ບົ່ງໄວ້ໃນພຣະທັມ ມັດທາຍ 18 ແລະ 1 ໂກຣິນໂທ 5.

<u>ຄຣິສຕະຈັກສົມບູນຊ່ອຍແບກພາຣະຂອງກັນແລະກັນ</u> (6:2-5)

ພວກເຮົາມີຫນ້າທີ່ຊ່ອຍຮັບພາຣະອັນຫນັກຂອງກັນແລະກັນ ແຕ່ໃນຄນະດຽວກັນນັ້ນພວກເຮົາທຸກຄົນຈະຕ້ອງຮັບຜິດຊອບຕໍ່ພາຣະຂອງຕົນເອງ. ໂປໂລບອກວ່າ ມີພາຣະບາງຢ່າງທີ່ເຮົາສາມາດໃຫ້ຄົນອື່ນແບກຊ່ອຍ ແລະມີພາຣະບາງຢ່າງທີ່ເຮົາຕ້ອງແບກເອົາເອງ. ການປະຖິ້ມຄວາມຮັບຜິດຊອບຂອງຕົນໄປໃຫ້ຄົນອື່ນເຮັດແທນ ເປັນການເຮັດຄວາມຜິດບາບ. ເວລາພວກເຮົາຊ່ອຍຄົນທີ່ກໍາລັງມີພາຣະຫນັກຈາກສິ່ງຕ່າງໆເຊັ່ນ: ການເສັຽຊີວິດ, ການຢ່າຮ້າງ, ການຖືກວ່າງງານ, ການຜິດພາດເຣື່ອງສັງຄົມ, ຫລື ຄວາມທໍ້ຖອຍໃນຊີວິດ ພວກເຮົາກໍໄດ້ເຮັດໃຫ້ກົດເຣື່ອງຄວາມຮັກຊຶ່ງກັນແລະກັນຂອງພຣະຄຣິດໄດ້ສໍາເຣັດຜົນ.

<u>ຄຣິສຕະຈັກສົມບູນ "ດູແລຜູ້ສອນພຣະທັມ"</u> (6:6)

ໂປໂລສົ່ງເສີມໃຫ້ຊາວຄາລາເຕັຽໄດ້ດູແລເບິ່ງແຍງພວກຜູ້ສອນພຣະທັມ. ສິດຍາພິບານ ແລະຜູ້ສອນອື່ນໆໃນຄຣິສຕະຈັກ ທີ່ໃຊ້ເວລາເພື່ອຈັດຕຽມຕົວເອງໃນການສອນພຣະຄໍາຂອງພຣະເຈົ້າສົມຄວນຈະໄດ້ຮັບຄ່າຈ້າງສໍາລັບແຮງງານຂອງພວກເຂົາຈາກພວກຜູ້ຟັງ. ພຣະຄໍາຂອງພຣະເຈົ້າໃນ ໂຣມ 15:27, 1 ໂກຣິນໂທ 9:14, ແລະ 1 ຕີໂມທຽວ 5:17-18 ກໍໄດ້ສອນໃນເຣື່ອງການອຸປຖັມຜູ້ສອນພຣະທັມເຫມືອນກັນ (ໂປໂລບໍ່ເຄີຍໃຊ້ສິດຂອງຕົນໃນເຣື່ອງນີ້--1 ໂກ ຣິນໂທ 9: 12, 15-18). ຄຣິສຕະຈັກມີຫນ້າທີ່ຈ່າຍເງິນເດືອນທີ່ເຫັນວ່າເນາະສົມສໍາລັບການຄອງຊີພຂອງຜູ້ຮັບໃຊ້.

<u>ຄຣິສຕະຈັກສົມບູນຍອມຮັບກົດຂອງການປູກຝັງ</u> (6:7-10)

ກົດເຣື່ອງການປູກຝັງມີບົດຮຽນສໍາຄັນສໍາລັບການເຮັດວຽກໃນຄຣິສຕະຈັກຂອງພຣະເຈົ້າ. ໂປໂລເຕືອນຜູ້ທີ່ກໍາລັງຈະເມື່ອຍລ້າໃນການເຮັດດີໃຫ້ເບິ່ງກົດເຣື່ອງການປູກຝັງຄື: (1) ພວກເຮົາຈະເກັບກ່ຽວສິ່ງທີ່ເຮົາໄດ້ຫວ່ານ ລົງໄປ (ໂຢບ 4:8; ສພສ 22:8; ໂຮເຊອາ 8:7; 10:12-13; 2 ໂກຣິນໂທ 9:6). ຊີວິດຂອງຄົນເຮົາກໍເປັນໄປຕາມກົດ ເຣື່ອງການຫວ່ານ ແລະການເກັບກ່ຽວນີ້ເຫມືອນກັນ. ຜົນໃນຊີວິດບັ້ນປາຍຈະເຫັນໄດ້ຈາກສິ່ງທີ່ພວກເຮົາໄດ້ຫວ່ານໄວ້. (2)ຊາວຄາລາເຕັຽຈະຕ້ອງອົດທົນລໍຄອຍເວລາຂອງການເກັບກ່ຽວ (6:9). ທຸກຢ່າງຕ້ອງໃຊ້ເວລາ ໂດຍສະເພາະແລ້ວແມ່ນການເກັບກ່ຽວຝ່າຍຈິດວິນຍານ. (3) ຊາວຄາລາເຕັຽທຸກຄົນຈະຕ້ອງຫມັ່ນພຽນໃນການຫວ່ານ ແລະຫາໂອກາດໃນການເຮັດດີກັບທຸກໆຄົນ, ໂດຍສະເພາະແລ້ວແມ່ນຄົນໃນຄອບຄົວຂອງພຣະເຈົ້າ (6:10).

<u>ຄຣິສຕະຈັກສົມບູນຮູ້ສິ່ງທີ່ເຂົາສາມາດໂອ້ອວດໄດ້</u> (6:12-16)

ຄຣິສຕຽນທີ່ອາສັຍພຣະຄຸນຂອງພຣະເຈົ້າຜ່ານພຣະວິນຍານບໍຣິສຸດຈະນໍາກຽດມາໃຫ້ພຣະເຈົ້າ; ພວກຮັກສາກົດບັນຍັດ (ພວກຮັບພິທີຕັດ) ຖືສາສນາເພື່ອຈະໄດ້ຮັບການຮັບຮູ້ຈາກມະນຸດດ້ວຍກັນ. ພວກເຂົາພາກັນເຜີຍແຜ່ສາສນາທີ່ເຮັດໃຫ້ຄົນທີ່ເຊື່ອມີຄວາມສວຍງາມທາງພາຍນອກ, ແທນທີ່ຈະເຜີຍແຜ່ສາສນາທີ່ສາມາດປ່ຽນແປງຈິດໃຈ. ພວກເຂົາ

ຊັກຊວນໃຫ້ຄຣິສຕຽນທີ່ຄາລາເຕັຽກັບໄປຮັບພິທີຕັດເພື່ອພວກເຂົາຈະມີແນວອວດອ້າງ (6:13). ໂບດບັບຕິດ ຫລາຍແຫ່ງໃນປັດຈຸບັນມັກຈະອວດອ້າງຈຳນວນຄົນທີ່ໄດ້ຮັບບັບຕິສະມາແຕ່ລະປີ; ຫລາຍໂບດໃຊ້ຈຳນວນຄົນຮັບບັບຕິສະມາ ເພື່ອອວດອ້າງເຖິງຄວາມສຳເຣັດຂອງການຮັບໃຊ້. ຄຣິສຕະຈັກບາງບ່ອນໄດໃຊ້ການອອກຫວຍເພື່ອຊັກຊວນຄົນທີ່ ຍັງຫລົງຢູ່ໃຫ້ເຂົ້າໂບດ. ພວກຢູດາຍອາຍເຊີ ໃຊ້ພິທີຕັດເປັນຂອງອວດອ້າງ, ແຕ່ໂປໂລບອກວ່າສິ່ງດຽວທີ່ເຂົາສາມາດ ອວດອ້າງໄດ້ຄືໄມ້ກາງແຂນຂອງອົງພຣະຄຣິດຜູ້ເປັນພຣະເຈົ້າຂອງເຮົາ. ພ ວກເຮົາບໍ່ຄວນຈະອວດອ້າງໃນສິ່ງທີ່ເຮົາໄດ້ເຮັດເພື່ອພຣະເຈົ້າ, ແຕ່ພວກເຮົາຄວນຈະອວດອ້າງຢູ່ສເມີໄປໃນສິ່ງທີ່ພຣະເຈົ້າໄດ້ຊົງກະທຳໃຫ້ກັບພວກເຮົາ, ໂດຍ ສະເພາະແລ້ວແມ່ນເຣື່ອງໄມ້ກາງແຂນຂອງອົງພຣະເຢຊູຄຣິດ.

<u>ຄຣິສຕະຈັກສົມບູນເຕັມໄປດ້ວຍຜູ້ເຊື່ອທີ່ພຣະຄຣິດໄດ້ປະທັບຕາໄວ້ແລ້ວ</u> (6:17-18)
ພວກຢູດາຍອາຍເຊີ(ພວກຮັບພິທີຕັດ) ພາກັນສແວງຫາຄວາມປອດພັຍແລະຄວາມໝັ້ນຄົງສຳລັບຕົວເອງ, ແຕ່ໂປໂລຕ້ອງຕໍ່ສູ້ກັບການຖືກຂົ່ມເຫງ. ໂປໂລປະກາດກັບທຸກຄົນວ່າເຂົາເປັນຂ້ອຍຂ້າຂອງພຣະຄຣິດ. ຖ້າພວກເຂົາຖືວ່າການຮັບພິທີຕັດເປັນຕາປະທັບວ່າເຂົາເປັນຂອງພຣະຄຣິດນັ້ນ ພວກເຂົາກຳລັງເຂົ້າໃຈຜິດ. ການຖືກຂົ່ມເຫງເພາະຂ່າວປະເສີດສະແດງເຖິງຄວາມຈົ່ງຮັກພັກດີຕໍ່ອົງພຣະເຢຊູຄຣິດຜູ້ເປັນພຣະເຈົ້າ, ນັ້ນຄືຕາປະທັບທີ່ແທ້ຈິງຂອງໂປໂລ.

<u>ຄຳສລຸບກ່ຽວກັບຄຣິສຕະຈັກສົມບູນ</u>
ອ້າງຕາມຄຳສອນຂອງ ໂປໂລ, ຄວາມສົມບູນຂອງຄຣິສຕະຈັກປະກອບດ້ວຍສິ່ງເຫລົ່ານີ້:

(1) ໃຊ້ກົດຣະບຽບວິນັຍເພື່ອຊ່ວຍຜູ້ທີ່ຫລົງຜິດໄປໃຫ້ກັບຄືນດີ
(2) ຊ່ວຍແບກພາຣະໜັກຂອງກັນແລະກັນ
(3) ໃຫ້ຄ່າຈ້າງແກ່ຜູ້ຮັບໃຊ້ແບບເໝາະສົມ
(4) ບໍ່ເມື່ອຍລ້າໃນການເຮັດດີ
(5) ອວດອ້າງເຣື່ອງໄມ້ກາງແຂນຂອງພຣະຄຣິດ
(6) ໄດ້ຮັບຕາປະທັບຈາກຜູ້ເປັນນາຍ

ຄຣິສຕຽນທີ່ຄາລາເຕັຽຈະສາມາດເຮັດສິ່ງເຫລົ່ານີ້ໄດ້ຖ້າພວກເຂົາປະຕິເສດການບັງຄັບໃຫ້ໄປປະຕິບັດ ຫລື ຖືກົດບັນຍັດ ຂອງພວກຢູດາຍອາຍເຊີ (ເຊັ່ນ ພິທີຕັດ ແລະກົດເກນເຣື່ອງອາຫານຕ່າງໆ) ແລ້ວຕັ້ງໃຈໃນເສຣີພາບໃໝ່ທີ່ພວກເຂົາໄດ້ ຮັບດ້ວຍພຣະຄຸນຂອງພຣະເຈົ້າຜ່ານທາງຄວາມເຊື່ອໃນອົງພຣະເຢຊູຄຣິດ.

<u>ຄຳຖາມ:</u>

1. ນອກຈາກລາຍລະອຽດຂ້າງເທິງນີ້, ມີຫຍັງອີກແດ່ທີ່ທ່ານຄິດວ່າຄວນຈະເປັນລັກສນະຂອງຄຣິສຕະຈັກທີ່ສົມບູນ?
2. ຄຣິສຕະຈັກຂອງທ່ານມີກົດຣະບຽບເພື່ອການນຳຄຣິສຕຽນທີ່ຫລົງຜິດໃຫ້ກັບຄືນດີບໍ່? ຖ້າບໍ່ມີ, ເປັນຫຍັງຈຶ່ງບໍ່ມີ?
3. ທ່ານຄິດວ່າຄຣິສຕະຈັກມີຫຍັງແດ່ທີ່ຈະໜູນໃຈສິດຍາພິບານຂອງທ່ານ? ຕົວຢ່າງ: ຄຣິສຕະຈັກບາງແຫ່ງຊື້ປີ້ຍົນໃຫ້ສິດຍາພິບານແລະຄອບຄົວໄປພັກຜ່ອນ.
4. ຄຣິສຕະຈັກຈະໃຊ້ວິທີໃດເພື່ອຈະນຳຄົນມາຫາພຣະຄຣິດ ໂດຍບໍ່ຕ້ອງເປັນຫ່ວງເຣື່ອງຈຳນວນຈົນເກີນໄປ?

# ບົດຮຽນທີ 7
# ພຣະເຈົ້າກຳລັງເຮັດຫຍັງຢູ່

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເອເຟໂຊ 1:1-14

ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ເອເຟໂຊ 1

ຈຸດສຳຄັນຂອງບົດຮຽນນີ້: ຜ່ານອົງພຣະເຢຊູຄຣິດ, ພຣະເຈົ້າກຳລັງຈະນຳທຸກຢ່າງໃຫ້ມາຢູ່ໃຕ້ອຳນາດການປົກຄອງຂອງພຣະຄຣິດ; ທຸກຢ່າງຫມາຍເຖິງມະນຸດທຸກຄົນບໍ່ວ່າເຂົາຈະເປັນໃຜ, ແລະກໍຫມາຍເຖິງຕົວທ່ານດ້ວຍ.

ຄຳຖາມເພື່ອການສຳຣວດ: ແມ່ນຫຍັງຄືຈຸດປະສົງຂອງຊີວິດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອຈະໄດ້ເຂົ້າໃຈວ່າພຣະປະສົງຂອງພຣະເຈົ້າແມ່ນຫຍັງແທ້ ແລະຈຸດປະສົງເຫລົ່ານັ້ນກ່ຽວ ຂ້ອງກັບເຮົາຢ່າງໃດ.

| ເຣື່ອງທີ່ກຳລັງເນັ້ນຫນັກໃນເທັກຊັດ: |
|---|
| • ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ |
| • ຣັບໃຊ້ເພື່ອນມະນຸດໃນພຣະນາມພຣະເຢຊູ |
| • ຈັດຕຽມຄຣິສຕຽນເພື່ອຣັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ |
| • ເສີມສ້າງຄອບຄົວຄຣິສຕຽນ |
| • ຊ່ວຍຄຣິສຕະຈັກໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກເພີ້ມຂຶ້ນ |

## ຄຳນຳ

ພຣະປະສົງຂອງພຣະເຈົ້າໃນປະວັດສາດຂອງການໄຖ່ມະນຸດຄືການນຳທຸກຢ່າງໃຫ້ມາຢູ່ໃຕ້ອຳນາດການປົກຄອງຂອງອົງພຣະຄຣິດເພື່ອກຽດ ແລະຄຳສັລເສີນຂອງພຣະອົງ. ໂປໂລຂຽນໄວ້ໃນ ເອເຟໂຊ 1:2 ວ່າ "ຂໍໃຫ້ພຣະຄຸນແລະສັນຕິສຸກ ຊຶ່ງມາຈາກພຣະບິດາເຈົ້າຂອງເຮົາທັງຫລາຍ ແລະຈາກພຣະອົງເຈົ້າເຢຊູຄຣິດ ສະຖິດຢູ່ກັບທ່ານທັງຫລາຍເທີນ." "ພຣະຄຸນ" ຫມາຍເຖິງຄວາມຮັກອັນບໍ່ປ່ຽນແປງຂອງພຣະເຈົ້າກັບມະນຸດທັງຫລາຍ, ແລະ "ສັນຕິສຸກ" ຫມາຍເຖິງຄວາມສັມພັນອັນມີຄ່າລະຫວ່າງຜູ້ເຊື່ອຊຶ່ງເກີດມາຈາກພຣະຄຸນຂອງພຣະເຈົ້າ. ໂປໂລເປັນຜູ້ຮັບໃຊ້ພຣະຄຣິດດ້ວຍອຳນາດທີ່ມາຈາກພຣະເຈົ້າ. ເຂົາຖືກສົ່ງໃຫ້ໄປປະກາດຂ່າວປະເສີດກັບຄົນຕ່າງຊາດ; ພຣະທັມເອເຟໂຊ ແມ່ນຈົດຫມາຍຂອງໂປໂລສົ່ງໄປເຖິງຄົນທັງຫລາຍທີ່ໄດ້ຮັບຄວາມຣອດພົ້ນຈາກການໄປປະກາດຄັ້ງທີສອງ ແລະ ທີສາມຂອງເຂົາ. ເຂົາສົ່ງຈົດຫມາຍນີ້ໄປເຖິງຄອບຄົວຝ່າຍຈິດວິນຍານຂອງເຂົາ, "ຜູ້ທີ່ສັດຊື່ຢູ່ໃນພຣະຄຣິດ," ເຣື່ອງການຕຽມການຂອງພຣະເຈົ້າສຳລັບພຣະປະສົງອັນເປັນນິດ ໃນປະວັດສາດ.

ພຣະກະຣຸນາຂອງພຣະເຈົ້າເຣື່ອງພຣະພອນ (1:3)
ໂປໂລເລີ້ມຕົ້ນຈົດຫມາຍດ້ວຍການສັຣເສີນພຣະເຈົ້າຜູ້ຊົງປະທານພຣະພອນຝ່າຍວິນຍານ ໃຫ້ແກ່ຜູ້ທີ່ສັດຊື່ທັງຫລາຍ ແລະຜູ້ທີ່ໄດ້ມີສ່ວນຮ່ວມໃນວຽກງານຂອງພຣະອົງໃນສມັຍຜ່ານມາ(1:3). ພຣະພອນຂອງພຣະເຈົ້າແມ່ນສໍາລັບຜູ້ທີ່ຢູ່ໃນອົງພຣະຄຣິດ. ຜູ້ເຊື່ອທຸກຄົນສາມາດຫມັ້ນໃຈໄດ້ວ່າພຣະເຈົ້າຈະປະທານພຣະພອນໃຫ້ແກ່ຜູ້ທີ່ມີສ່ວນຮ່ວມໃນແຜນການໄຖ່ມະນຸດຂອງພຣະອົງ. ພຣະພອນນີ້ເລີ້ມດ້ວຍການຊົງປະທານພຣະບຸດ ແລະການປະທານຄວາມຮັກອັນອຸດົມສົມບູນໃຫ້ຫລັ່ງໄຫລມາເຖິງພວກເຮົາ (ໂຣມ 8:32).

ພຣະປະສົງຂອງພຣະເຈົ້າເຣື່ອງການຊົງເລືອກ (1:4-6)
ພຣະເຈົ້າໄດ້ຊົງເລືອກພວກເຮົາໄວ້ກ່ອນພຣະອົງຈະຊົງສ້າງໂລກນີ້ເພື່ອພຣະປະສົງຂອງພຣະອົງໃນປະວັດສາດ. ຫລັກຄວາມເຊື່ອເຣື່ອງການຊົງເລືອກເປັນເຣື່ອງທີ່ພວກເຮົາບໍ່ສາມາດຈະອະທິບາຍໄດ້ແບບບໍຣິບູນ. ແຕ່ພວດເຮົາພໍເຂົ້າໃຈໄດ້ວ່າ "ການຊົງເລືອກ" ຫມາຍເຖິງການຊົງຕັ້ງພຣະທັຍໄວ້ກ່ອນວ່າພຣະເຈົ້າຈະນໍາຜູ້ທີ່ເຊື່ອໃຫ້ໄປເຖິງຊີວິດທີ່ບໍຣິສຸດ, ຊີວິດທີ່ບໍ່ມີຂໍ້ຕໍາອງຕິ, ແລະໃຫ້ຊີວິດຢູ່ໃນຄອບຄົວຂອງພຣະອົງ. "ບໍຣິສຸດ" ຫມາຍເຖິງການຖືກແຍກອອກມາ. ຄຣິສຕຽນ ຈະຕ້ອງດໍາເນີນຊີວິດໃຫ້ບໍຣິສຸດສົມກັບເປັນໄພ່ພົນຂອງພຣະເຈົ້າຜູ້ຊົງບໍຣິສຸດ. ຊີວິດທີ່ບໍ່ມີຂໍ້ຕ້ອງຕິຫມາຍເຖິງຄວາມ ສົມບູນໃນທາງສິລທັມ.

ພຣະເຈົ້າມີສິດອໍານາດທີ່ຈະເລືອກຄົນໄວ້ສໍາລັບພຣະອົງ; ໃນພຣະສັນຍາເດີມ, ພຣະເຈົ້າ ຊົງເລືອກຊົນຊາດອິສຣາເອັນໃຫ້ມາເປັນໄພ່ພົນຂອງພຣະອົງ; ພຣະເຈົ້າຊົງເລືອກ ອາບຣາຮາມເພື່ອຄົນທຸກຊາດໃນໂລກຈະໄດ້ຮັບພຣະພອນ (ປຖກ 18:18-19). ການຊົງເລືອກຂື້ນຢູ່ກັບພຣະປະສົງຂອງພຣະເຈົ້າ. ພຣະເຈົ້າຊົງເລືອກພວກເຮົາໃຫ້ມາເປັນຜູ້ເຊື່ອ ແລະຊົງຄາດຫມາຍໄວ້ລ່ວງຫນ້າວ່າຈະໃຫ້ຈຸດປະສົງບາງຢ່າງໃນຊີວິດເຮົາໄດ້ສໍາເຣັດ (ໂຣມ 8:28). ໂດຍພຣະຄຣິດພວກເຮົາໄດ້ກາຍເປັນບຸດທີ່ພຣະເຈົ້າພໍພຣະທັຍ. ພຣະເຈົ້າຊົງເລືອກພວກເຮົາໄວ້ເພື່ອຊີວິດຂອງເຮົາຈະໄດ້ສັລເສີນ ແລະຖວາຍກຽດແກ່ພຣະອົງ.

ພຣະປະສົງຂອງພຣະເຈົ້າເຣື່ອງການຖວາຍບູຊາ (1:7-12)
ພຣະເຈົ້າໄດ້ຊົງໄຖ່ພວກເຮົາ (1:7). ໂດຍການຖວາຍຊີວິດຂອງພຣະອົງທີ່ໄມ້ກາງແຂນ, ພຣະເຢຊູໄດ້ຊື້ພວກເຮົາຈາກການປັນທາດຂອງຄວາມຜິດບາບ. ພຣະເຈົ້າໄດ້ປົດປ່ອຍພວກເຮົາຈາກໂທດ ແລະອໍານາດຂອງຄວາມບາບ. ພຣະອົງໄດ້ໃຫ້ອະພັຍພວກເຮົາ. ພຣະເຈົ້າຊົງເອົາຄວາມຜິດບາບຫນີອອກຈາກພວກເຮົາ ເວລາເຮົາມາເຊື່ອໃນອົງພຣະເຢຊູ. ຄວາມຜິດບາບຄືນ້ໍາຫນັກໃນຊີວິດ; ແຕ່ພຣະເຢຊູຄຣິດໄດ້ແບກນ້ໍາຫນັກຂອງເຮົານັ້ນໄປຕອກໄວ້ທີ່ໄມ້ກາງແຂນ (1 ເປໂຕ 2:24).

ພຣະເຢຊູຄຣິດໄດ້ຊົງເປີດເຜີຍນ້ໍາພຣະທັຍຂອງພຣະເຈົ້າໃຫ້ພວກເຮົາຮູ້. ພຣະເຈົ້າມີສິ່ງເລິກລັບຫລາຍໆຢ່າງທີ່ຄົນທົ່ວໄປຈະບໍ່ສາມາດຮູ້ແລະເຂົ້າໃຈ; ແຕ່ພຣະເຢຊູໄດ້ຊົງເປີດເຜີຍ "ຄວາມລັບເລິກ" ຊຶ່ງເປັນຄວາມຈິງ ໃຫ້ກັບຜູ້ທີ່ເປັນໄພ່ພົນຂອງພຣະເຈົ້າ (1:8). ໂດຍພຣະຄຣິດ, ພວກເຮົາໄດ້ມີສ່ວນໃນພຣະເຈຕນາຂອງພຣະເຈົ້າເພື່ອຈະ "ຮວບຮວມສິ່ງສາຣະພັດທັ່ງທີ່ມີໃນຟ້າສວັນແລະແຜ່ນດິນໂລກໄວ້ໃນອົງພຣະຄຣິດ" (1:10). ໂລກນີ້ກໍາລັງກ້າວໄປສູ່ຄວາມພິນາດເພາະສົງ

ຄາມ, ການຕໍ່ສູ້ກັນ, ແລະຄວາມຜິດບາບ. ແຕ່ໃນວັນນຶ່ງຂ້າງໜ້າ, ພຣະເຈົ້າຈະຊົງສ້າງທຸກຢ່າງຂຶ້ນໃໝ່ແລະຈະຮວບຮວມທຸກຢ່າງໄວ້ໃນອົງພຣະເຢຊູຄຣິດ.

ພຣະອົງຊົງໃຫ້ພວກເຮົາເປັນມໍຣະດົກ (1:11). ພຣະເຈົ້າໄດ້ຊົງມອບມໍຣະດົກໄຫ້ພວກເຮົາໃນອົງພຣະຄຣິດ (1 ເປໂຕ 1:3-4); ນອກນັ້ນ, ພຣະອົງຍັງໄດ້ໃຫ້ພວກເຮົາເປັນມໍຣະດົກເພື່ອພຣະຄຣິດ. ຄຣິສຕະຈັກຄືພຣະກາຍ, ພຣະວິຫານ, ແລະເຈົ້າສາວຂອງພຣະເຢຊູຄຣິດ; ວັນນຶ່ງໃນບໍ່ຊ້າພວກເຮົາກໍຈະໄດ້ມີສ່ວນຮ່ວມໃນພຣະສງ່າຣາສີຂອງພຣະອົງ.

<u>ພຣະປະສົງຂອງພຣະເຈົ້າຜ່ານພຣະວິນຍານ</u> (1:13-14)
ພຣະເຈົ້າໄດ້ຊົງທັບຕາໝາຍຜູ້ທີ່ເຊື່ອດ້ວຍພຣະວິນຍານບໍຣິສຸດຂອງພຣະອົງ (1:13). ພຣະທັມ 1:13 ໄດ້ໃຫ້ລາຍລະອຽດເຣື່ອງພື້ນທາງແຫ່ງຄວາມຣອດພົ້ນດັ່ງນີ້: (1) ຄົນບາບໄດ້ຍິນພຣະທັມຄວາມຈິງ; (2) ເຂົາເກີດມີຄວາມເຊື່ອໃນອົງພຣະຄຣິດ; (3) ໄດ້ຮັບພຣະວິນຍານບໍຣິສຸດ; (4) ໄດ້ຖືກຊົງປະທັບຕາໄວ້ຈົນຊົ່ວນິຣັນດອນ. ພຣະວິນຍານບໍຣິສຸດຊົງສະເດັດເຂົ້າມາຢູ່ໃນຈິດໃຈຂອງຜູ້ເຊື່ອໃນເວລາທີ່ເຂົາເລີ້ມເຊື່ອໃນອົງພຣະຄຣິດ. ການຊົງປະທັບຕາ ໝາຍເຖິງພຣະ ເຈົ້າເປັນເຈົ້າຂອງຊີວິດຂອງພວກເຮົາ ແລະພຣະອົງຈະເປັນຜູ້ຮັກສາພວກເຮົາ; ແລະບໍ່ມີຜູ້ໃດທີ່ຈະສາມາດມ້າງຕາປະ ທັບຂອງພຣະເຈົ້າໄດ້.

ພຣະເຈົ້າໄດ້ມອບເຄື່ອງມັດຈຳເພື່ອປະກັນຄວາມຣອດພົ້ນຂອງພວກເຮົາ (1:14). ພຣະເຢຊູຄຣິດໄດ້ຊື້ອະນາຄົດໃນຟ້າສວັນໄວ້ໃຫ້ພວກເຮົາ, ແຕ່ພວກເຮົາຍັງບໍ່ໄດ້ເຂົ້າໄປເຖິງພຣະພອນແຫ່ງນັ້ນ. ສນັ້ນພຣະຜູ້ເປັນເຈົ້າຈຶ່ງໄດ້ມອບພຣະວິນຍານບໍຣິສຸດໃຫ້ກັບພວກເຮົາເພື່ອເປັນເຄື່ອງມັດຈຳວ່າມື້ນຶ່ງພວກເຮົາຈະໄດ້ຮັບການຊົງໄຖ່ອັນຄົບບໍຣິບູນ ແລ້ວເຮົາຈະໄດ້ຮັບພຣະສງ່າຣາສີ ຄືພຣະພອນທີ່ພຣະເຈົ້າໄດ້ຊົງສັນຍາ.

ໂປໂລໄດ້ບອກຢ່າງແຈ່ມແຈ້ງໃນບົດຮຽນນີ້ວ່າເປັນຫຍັງພຣະເຈົ້າພຣະບິດາ, ພຣະບຸດ, ແລະພຣະວິນຍານຈຶ່ງປະທານພຣະພອນເຫລົ່ານີ້ໃຫ້ແກ່ພວກເຮົາ; ພວກເຮົາໄດ້ເຫັນເຫດຜົນຢູ່ໃນ 1:6, 12, 14 ວ່າ "ເພື່ອຈະໃຫ້ເປັນທີ່ສັລເສີນພຣະຄຸນ ອັນຮຸ່ງເຮືອງຂອງພຣະອົງ."

<u>ຄຳຖາມ</u>

1. ເມື່ອທ່ານໄດ້ຮູ້ຄວາມຈິງວ່າພຣະເຈົ້າໄດ້ຊົງເລືອກທ່ານໄວ້ເພື່ອໃຫ້ໄດ້ຮັບຄວາມຣອດພົ້ນແລ້ວ ທ່ານມີຄວາມຮູ້ສຶກແນວໃດກ່ຽວກັບການປະກາດ ແລະ ການເປັນພະຍານ?
2. ໂປໂລໝາຍຄວາມວ່າແນວໃດເວລາທ່ານເວົ້າວ່າ ພວກເຮົາຈະຕ້ອງໃຊ້ຊີວິດເພື່ອຖວາຍກຽດແດ່ພຣະເຈົ້າ?
3. ແຜນການຕ່າງໆໃນຊີວິດຂອງທ່ານ ກ່ຽວພັນແນວໃດແດ່ກັບ ຄວາມມຸ້ງໝາຍ ແລະ ແຜນການຂອງພຣະເຈົ້າສຳລັບມະນຸດ?
4. ແຜນການຂອງພຣະເຈົ້າສຳລັບມະນຸດ ມີສ່ວນຫຍັງກັບການຕັດສິນໃຈຂອງທ່ານແຕ່ລະມື້?
5. ເຮົາຈະເຮັດແນວໃດແດ່ເພື່ອໃຫ້ຊີວິດ ແລະ ຄຳພະຍານຂອງຜູ້ເຊື່ອໃນ ຄຣິສຕະຈັກທ້ອງຖິ່ນມີສ່ວນສົ່ງເສີມຊື່ສຽງຂອງພຣະເຈົ້າ?
6. ອີງຕາມພຣະທັມ ເອເຟໂຊ 1:1-14 ທີ່ຮຽນມາ, ທ່ານພໍຈະຕອບໄດ້ບໍ່ວ່າ ແມ່ນຫຍັງຄືຈຸດປະສົງຂອງຊີວິດ?

# ບົດຮຽນທີ 8
# ພົ້ນເພື່ອຊີວິດໃໝ່

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ເອເຟໂຊ 2:1-16

ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ: ເອເຟໂຊ 2

ຈຸດສໍາຄັນຂອງບົດຮຽນນີ້: ເວລາພວກເຮົາຕອບຮັບພຣະຄຸນຂອງພຣະເຈົ້າດ້ວຍຄວາມເຊື່ອ, ພຣະອົງປະທານຊີວິດໃໝ່ໃຫ້ພວກເຮົາຜ່ານທາງອົງພຣະຄຣິດ.

ຄໍາຖາມເພື່ອການສໍາຣວດ: ພວກເຮົາໄດ້ຖືກຊ່ອຍໃຫ້ພົ້ນວິທີໃດ, ແລະຄວາມພົ້ນສ້າງຄວາມແຕກຕ່າງຫຍັງແດ່?

ຈຸດປະສົງຂອງບົດຮຽນນີ້: ເພື່ອອະທິຍາຍວ່າຄວາມພົ້ນເກີດຂຶ້ນໄດ້ຢ່າງໃດ ແລະ ຄວາມພົ້ນຈະນໍາຄວາມແຕກຕ່າງແນວໃດແດ່ມາສູ່ຊີວິດເຮົາ.

**ເຣື່ອງທີ່ກໍາລັງເນັ້ນໜັກໃນເທັກຊັດ:**

- ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ
- ຮັບໃຊ້ເພື່ອນມະນຸດໃນພຣະນາມພຣະເຢຊູ
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ
- ເສີມສ້າງຄອບຄົວຄຣິສຕຽນ
- ຊ່ວຍຄຣິສຕະຈັກໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກເພີ້ມຂຶ້ນ

## ຄໍານໍາ

ພຣະຄຸນພຣະເຈົ້າທໍາງານໃນການໄຖ່ພວກເຮົາໂດຍການປ່ຽນແປງພວກເຮົາ ແລະນໍາເຮົາໃຫ້ໄປສູ່ຊີວິດໃໝ່ຊຶ່ງເຕັມໄປດ້ວຍສັນຕິສຸກ ແລະໂອກາດເພື່ອການຮັບໃຊ້ພຣະອົງ. ພຣະທັມ ເອເຟໂຊ 2 ຈະເນັ້ນເຖິງຖານະຂອງພວກເຮົາໃນອົງພຣະຄຣິດ. ຖານະ ຫລື ຕໍາແໜ່ງ ຂອງເຮົາຈະບອກເຖິງກໍາມົດເຣື່ອງສົມບັດ ແລະສິດອໍານາດຂອງພວກເຮົາ. ບໍ່ວ່າທ່ານປະທານາທິບໍດີຂອງສະຫະຣັດຈະຢູ່ໃສ ຫລື ໄປໃສ, ເພິ່ນຈະມີສິດອໍານາດສເມີໄປ ເພາະຕໍາແໜ່ງຂອງເພິ່ນ. ພວກ ເຮົາມີສິດອໍານາດທາງຝ່າຍຈິດວິນຍານ ເພາະຖານະ ຫລື ຕໍາແໜ່ງຂອງພວກເຮົາໃນອົງພຣະຄຣິດ.

## ຊີວິດກ່ອນເປັນຄຣິສຕຽນ (2:1-3)

ໂປໂລໃຊ້ຄໍາອຸປມາຂອງການຕາຍເພື່ອອະທິບາຍຊີວິດຂອງຜູ້ເຊື່ອກ່ອນທີ່ຈະມາພົບພຣະເຢຊູ. ມະນຸດທຸກຄົນເປັນຄົນຜິດບາບ; ຄວາມບາບເຮັດໃຫ້ຄົນຕ້ອງຕາຍໄປຝ່າຍຈິດວິນຍານ. ຊີວິດທາງໃນຂອງເຂົາໄດ້ຕາຍແລ້ວ ແລະ ເຂົາບໍ່ສາມາດທີ່ຈະຕອບຮັບສິ່ງໃດສິ່ງນຶ່ງຝ່າຍຈິດວິນຍານເລີຍ. ຄົນບາບບໍ່ພຽງແຕ່ຕ້ອງຕາຍເທົ່ານັ້ນ, ພວກເຂົາຍັງຕ້ອງໃຊ້ຊີວິດຢູ່ໃນຄວາມເປັນຂ້າທາດ ແລະຢູ່ໃນຄວາມສນຸກສນານ ແລະວິທີການຂອງໂລກ. ຖ້າຄຣິສຕຽນໄປບອກຄົນບາບທັງຫລາຍວ່າໂລກນີ້ກໍາລັງຈະຖືກພຣະເຈົ້າລົງໂທດ ແລະໂລກທັງໝົດກໍາລັງຈະພິນາດ, ພວກເຂົາຈະພາກັນຫົວ

ເຍາະເຍີ້ຍແນ່ນອນ.  ຫລາຍໄປກວ່ານັ້ນ,  ມານຊາຕານ ກໍາລັງທໍາງານໃນຊີວິດຂອງຄົນທີ່ບໍ່ຮູ້ພຣະເຈົ້າ.  ແຕ່ກໍບໍ່ໄດ້ໝາຍຄວາມວ່າຊາຕານຈະເຮັດໃຫ້ທຸກໆຄົນກາຍເປັນຄົນຂີ້ເມົາ ຫລື ເປັນຄາດຕະກອນ; ກົນອຸບາຍສໍາຄັນຂອງຊາຕານຄືການສ້າງຄວາມໝັ້ນຄົງແບບຈອມປອມ ໂດຍເຮັດໃຫ້ຄົນບາບທັງຫລາຍຄິດວ່າພວກເຂົາມີຄວາມຊອບທັມຢູ່ໃນຕົວເອງ.  ພຣະເຢຊູຄຣິດຊົງເອີ້ນພວກຟາຣີຊາຍ ວ່າ "ລູກຂອງມານ" (ໂຢຮັນ 8:44);  ເພາະພວກເຂົາຖືຕົວເອງວ່າເຂົາເປັນນັກສາສນາແລະເປັນພົລເມືອງຜູ້ມີກຽດ.

ພວກເຮົາທຸກຄົນເກີດມາໃນທັມມະຊາດຂອງມະນຸດທີ່ປາສຈາກພຣະຄຣິດແລະຈະຕ້ອງຖືກພິພາກສາ.  ຖ້າພວກເຮົາປະຕິເສດແລະບໍ່ຍອມຮັບພຣະຄຣິດ ຫລັງຈາກເຮົາມີອາຍຸພໍຮູ້ດີຮູ້ຊົ່ວແລ້ວ, ພວກເຮົາກໍຈະກາຍເປັນ "ລູກຜູ້ບໍ່ເຊື່ອຟັງ" ໂດຍຄວາມສມັກໃຈ.  ແຕ່ຖ້າພວກເຮົາຍອມຮັບເຊື່ອແລະໄວ້ໃຈໃນອົງພຣະເຢຊູຄຣິດ, ພວກເຮົາກໍຈະກາຍມາເປັນລູກຂອງພຣະເຈົ້າ.

## <u>ຄວາມເປັນຈິງຂອງຄຣິສຕຽນໃນປັດຈຸບັນ</u> (2:4-10)

"ແຕ່ພຣະເຈົ້າຜູ້ຊົງປະກອບດ້ວຍພຣະກະຣຸນາອັນອຸດົມ" ບໍ່ຍອມໃຫ້ພວກເຮົາດໍາເນີນຊີວິດໃນຄວາມຜິດບາບອີກຕໍ່ໄປ, ແລະພຣະອົງບໍ່ຍອມໃຫ້ພວກເຮົາໄປດໍາເນີນຊີວິດຢູ່ກັບພະຍາມານທີ່ບຶງໄຟນາຮົກຊົ່ວນິດນິຣັນ, ສະນັ້ນພຣະອົງຈຶ່ງໄດ້ຊົງເລືອກພວກເຮົາໃຫ້ໄດ້ຮັບຄວາມຣອດພົ້ນ.  ພຣະອົງຊົງປະທານຊີວິດໃຫ້ພວກເຮົາ, ພຣະອົງຊົງດຶງພວກເຮົາອອກຈາກ ຄວາມຜິດບາບ,  ແລະພຣະອົງຊົງນໍາພວກເຮົາອອກຈາກຫລຸມຝັງສົບ.   ຫລາຍກວ່ານັ້ນ, ພຣະອົງຊົງໃຫ້ພວກເຮົາໄດ້ ເປັນສະມາຊິກໃນຄອບຄົວຂອງພຣະຄຣິດ.  ພວກເຮົາໄດ້ຟື້ນຄືນມາໃໝ່ກັບພຣະອົງ ແລະຈະໄປໃຊ້ຊີວິດກັບພຣະອົງທີ່ ເມືອງຟ້າສວັນ.    ພຣະເຈົ້າໄດ້ຊົງກະທໍາທຸກຢ່າງນີ້ ກໍເພາະພຣະອົງຊົງເປັນພຣະເຈົ້າທີ່ອຸດົມໄປດ້ວຍພຣະເມດຕາ ແລະ ຄວາມຮັກອັນໃຫຍ່ຫລວງ. ພຣະເມດຕາ ໝາຍເຖິງພຣະເຈົ້າບໍ່ໄດ້ລົງໂທດເຮົາ ທີ່ພວກເຮົາສົມຄວນຈະໄດ້ຮັບ.  ພຣະຄຸນ ໝາຍເຖິງພຣະເຈົ້າຊົງປະທານທຸກສິ່ງໃຫ້ເຮົາເກີນກວ່າເຮົາຄວນຈະໄດ້ຮັບ.

ບັດນີ້, ພວກເຮົາກາຍເປັນສິ່ງພຣະຫັດຂອງພຣະເຈົ້າ,  ພວກເຮົາເປັນຜູ້ທີ່ພຣະອົງຊົງສ້າງຂຶ້ນໃໝ່ (2 ໂກຣິນໂທ 5:7). ອ່ານ ພຣະທັມຟີລິປອຍ 2:12-13, ທ່ານຈະໄດ້ເຫັນວຽກງານທີ່ພຣະເຈົ້າກໍາລັງເຮັດຢູ່ໃນຕົວທ່ານ. ຈະມີຫຍັງເກີດຂຶ້ນໃນອະນາຄົດ? ພວກເຮົາບໍ່ຮູ້, ແຕ່ພວກເຮົາຮູ້ວ່າອະນາຄົດຢູ່ໃນພຣະຫັດຂອງພຣະເຈົ້າ. ພຣະເຈົ້າແຫ່ງຄວາມຮັກ ຜູ້ຊົງເລືອກພວກເຮົາໄວ້,  ຜູ້ຊົງເອີ້ນພວກເຮົາ,  ແລະຜູ້ຊົງໂຜດພວກເຮົາໃຫ້ພົ້ນ ໄດ້ວາງແຜນໄວ້ທຸກຢ່າງສໍາລັບຊີວິດຂອງເຮົາ.  ພວກເຮົາເປັນໜີ້ຢ່າງອັນມະຫາສານສໍາລັບພຣະຄຸນຂອງພຣະອົງ.

## <u>ຍ້ອນຄືນເບິ່ງຊີວິດກ່ອນການເປັນຄຣິສຕຽນ</u> (ເອເຟໂຊ 2:11-13)

ໃນພາກຕົ້ນຂອງບົດຮຽນນີ້,  ໂປໂລໄດ້ບອກພວກເຮົາເຖິງສິ່ງທີ່ພຣະເຈົ້າໄດ້ກະທໍາສໍາລັບຄົນບາບທົ່ວໆໄປ;  ຕໍ່ໄປນີ້ທ່ານຈະເວົ້າເຣື່ອງຄົນຊາວຢິວ (ຝ່າຍພິທີຕັດ) ແລະຄົນຕ່າງຊາດໂດຍສະເພາະ.  ພຣະເຈົ້າບໍ່ໄດ້ມີພຣະສັນຍາກັບຄົນຕ່າງ ຊາດກ່ຽວກັບເຣື່ອງພຣະຜູ້ໂຜດ ແຕ່ພຣະອົງໄດ້ຊົງພຣະສັນຍາວ່າຈະປະທານຣາຊອານາຈັກໃຫ້ກັບຊົນຊາວຢິວ. ຊົນ ຊາດຢິວ ແລະ ຄົນຕ່າງຊາດກໍາລັງຢູ່ໃນສະພາບໃດ ໃນແຜນການຂອງພຣະເຈົ້າໃນປັດຈຸບັນ?

ພຣະເຈົ້າຊົງແຍກພວກຢິວ ແລະພວກຕ່າງຊາດອອກຈາກກັນ (1 ກຣທ 10:32),ແຕ່ພຣະອົງບໍ່ໄດ້ຊົງແຍກສະເພາະບຸກ

ຄົນ ເພາະພຣະເຈົ້າບໍ່ຊົງຖືວ່າພວກຢິວແລະພວກຕ່າງຊາດນັ້ນຕ່າງກັນ (ໂຣມ 10:11-13). ພວກຕ່າງຊາດບໍ່ເຄີຍມີພຣະຄຣິດ ເພາະພຣະເຈົ້າບໍ່ໄດ້ໃຫ້ສັນຍາກັບພວກເຂົາ. ພວກເຂົາບໍ່ໄດ້ເປັນພົລເມືອງອິສຣາເອນ. ແທນທີ່ຈະໄດ້ເປັນ "ໄພ່ພົນຂອງພຣະເຈົ້າ," ພວກຕ່າງຊາດໄດ້ກາຍເປັນຜູ້ພັກອາສັຍຊົ່ວຄາວ. ພວກເຂົາເປັນຄົນແປກໜ້າ ຊຶ່ງຢູ່ໃນໂລກໂດຍບໍ່ມີຄວາມຫວັງ ແລະບໍ່ມີພຣະເຈົ້າ (2:12). ແຕ່ພວກຢິວຊຶ່ງເປັນພົລເມືອງອິສຣາເອນໄດ້ຮັບສິດພິເສດທຸກຢ່າງ (ໂຣມ 9:4-5). ພຣະທັມຂໍ້ 2:13 ບອກສະພາບຕົວຈິງຂອງພວກຕ່າງຊາດວ່າ "ຢູ່ຫ່າງໄກ." ພວກຕ່າງຊາດເຄີຍຢູ່ຫ່າງໄກຈາກພຣະເຈົ້າແລະຫ່າງໄກຈາກພຣະພອນ. ພວກເຮົາສາມາດສັງເກດໄດ້ວ່າ ເວລາໃດພຣະເຢຊູຄຣິດຊົງຊ່ວຍພວກຕ່າງຊາດ, ພຣະອົງຈະຢູ່ຫ່າງໄກຈາກພວກເຂົາ (ມັດທາຍ 8:5-13; 15:22-28).

<u>ສັນຕິສຸກຂອງຄຣິສຕຽນໃນປັດຈຸບັນ</u> (2:14-16)

"ແຕ່ບັດນີ້" ພຣະເຢຊູຄຣິດໄດ້ຊົງສະລະພຣະຊົນທີ່ເທິງໄມ້ກາງແຂນ; ພຣະອົງຊົງໄດ້ຮື້ຝາກຳແພງທີ່ເປັນສິ່ງກີດຂັ້ນລະຫວ່າງພວກຢິວແລະພວກຕ່າງຊາດ. ໃນວິຫານຂອງຄົນຢິວ, ເຄີຍມີກຳແພງສຳລັບຂັ້ນເຂດໄວ້ໃຫ້ສະເພາະພວກຕ່າງຊາດ ແລະຈະມີປ້າຍເຕືອນວ່າ "ຄົນຕ່າງຊາດຜູ້ໃດລ່ວງເຂດຈະຖືກປະຫານ." ຂອບຄຸນພຣະເຈົ້າ ທີ່ພຣະເຢຊູໄດ້ທຳລາຍກຳແພງເຫລົ່ານັ້ນ (2:14); ໃນພຣະຄຣິດ, ຄົນທັງສອງຝ່າຍໄດ້ເຂົ້າມາເປັນອັນດຽວກັນ (2:15). ພຣະເຢຊູບໍ່ພຽງແຕ່ໄດ້ເຮັດໃຫ້ຄົນບາບໄດ້ມີສັນຕິສຸກກັບພຣະເຈົ້າເທົ່ານັ້ນ ແຕ່ພຣະອົງໄດ້ໃຫ້ມີສັນຕິສຸກລະຫວ່າງພວກຢິວ ແລະພວກ ຕ່າງຊາດດ້ວຍ. ຜ່ານໄມ້ກາງແຂນຂອງພຣະເຢຊູ, ພຣະເຈົ້າໄດ້ຊົງນຳເອົາຄົນບາບທີ່ເປັນຝ່າຍຢິວ ແລະຄົນບາບທີ່ເປັນຝ່າຍຄົນຕ່າງຊາດໃຫ້ມາເປັນ "ຄົນໃຫມ່" ໃນພຣະເຢຊູຄຣິດ. ເນື່ອງຈາກພຣະເຈົ້າໄດ້ຊົງແຍກຄົນຢິວ ແລະຄົນ ຕ່າງຊາດອອກຈາກກັນເປັນເວລາຫລາຍສັດຕະວັດ, ຄົນຢິວເລີຍພາກັນຄິດວ່າ "ຄົນຕ່າງຊາດຈະຕ້ອງມາເປັນຄົນຢິວກ່ອນ ເຂົາຈະເຂົ້າມາເຖິງພຣະເຈົ້າໄດ້." ແຕ່ບັດນີ້, ໂດຍໄມ້ກາງແຂນຂອງ ພຣະເຢຊູຄຣິດ ພວກຢິວ ແລະພວກຕ່າງຊາດໄດ້ ກາຍມາເປັນກາຍອັນດຽວກັນ ແລະພຣະຄຣິດໄດ້ເຮັດໃຫ້ຄົນບາບທຸກຄົນໄດ້ຄືນດີກັບ ພຣະເຈົ້າ (2:16).

<u>ຄຳຖາມ</u>

1. ອະທິບາຍຄວາມຮູ້ສຶກຂອງທ່ານເມື່ອທ່ານມອງເບິ່ງສະມາຊິກຄອບຄົວ, ເພື່ອນບ້ານ, ເພື່ອນຮ່ວມງານ, ຫລື ມິດສະຫາຍທີ່ຍັງບໍ່ຮູ້ພຣະເຈົ້າ.
2. ທ່ານໃຊ້ເວລາຂອງທ່ານຫລາຍປານໃດເພື່ອຄົນທີ່ຍັງບໍ່ເປັນຄຣິສຕຽນ? ທ່ານເກີດຄວາມລຳຄານບໍ່ເວລາທ່ານຢູ່ຮ່ວມກັບພວກເຂົາ? ສະພາບຂອງຄົນບາບທີ່ ໂປໂລອະທິບາຍໃນບົດຮຽນນີ້ ເຮັດໃຫ້ທ່ານຮູ້ສຶກແນວໃດສຳລັບຜູ້ທີ່ຍັງບໍ່ເປັນຄຣິສຕຽນ?
3. ເວລາທ່ານເບິ່ງຣິດອຳນາດຂອງພຣະເຈົ້າທີ່ເຮັດໃຫ້ພຣະເຢຊູ ຜູ້ທີ່ຕາຍແລ້ວໃຫ້ກັບຄືນມາມີຊີວິດ ທ່ານຄິດເຖິງຣິດອຳນາດນີ້ບໍ່ເວລາທ່ານວາງແຜນຕ່າງໆໃນຊີວິດ? ມີ <u>ການດີ</u> ແນວໃດທີ່ພຣະເຈົ້າໄດ້ຊົງຕຽມໄວ້ສຳລັບທ່ານ?
4. ມີຫຍັງແດ່ທີ່ທ່ານສາມາດເຮັດເພື່ອໃຫ້ຜູ້ເຊື່ອໃຫມ່ມີຄວາມອົບອຸ່ນໃນຄອບຄົວຂອງຜູ້ເຊື່ອ? ທ່ານຈະເຮັດແນວໃດເພື່ອໃຫ້ທຸກຄົນມີຄວາມຮູ້ສຶກວ່າເຂົາເອງກໍເປັນພາກສ່ວນຂອງຄອບຄົວໃນເຊົ້າວັນອາທິດທີ່ໂບດ?
5. ພຣະຄຸນ, ການງານ, ແລະຄວາມເຊື່ອ ມີສ່ວນກ່ຽວຂ້ອງກັນແນວໃດໃນເຣື່ອງຄວາມຣອດພົ້ນ?
6. ການສິ້ນພຣະຊົນທີ່ໄມ້ກາງແຂນຂອງພຣະເຢຊູເພື່ອໃຫ້ມີການຄືນດີກັນ ຈະຊ່ວຍແກ້ໄຂຂໍ້ຂັດແຍ່ງໃນຄອບຄົວ, ໃນຄຣິສຕະຈັກ, ແລະໃນຄວາມສັມພັນຕ່າງໆໄດ້ຢ່າງໃດ?

# ບົດຮຽນທີ 9
# ສິ່ງທີ່ພຣະເຈົ້າຕ້ອງການ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເອເຟໂຊ 3:14-21

ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ເອເຟໂຊ 3

ຈຸດສຳຄັນຂອງບົດຮຽນນີ້: ພຣະເຈົ້າຊົງມີພຣະປະສົງໃຫ້ພວກເຮົາໄດ້ພົບກັບ ກຳລັງ, ຄວາມພໍໃຈ, ຄວາມຮັກ, ຄວາມ ໃກ້ຊິດ ແລະ ຄວາມສັມພັນອັນເຂັ້ມແຂງ ຢູ່ໃນພຣະອົງ ຊຶ່ງຄວາມເຊື່ອໃນອົງ ພຣະຄຣິດໄດ້ນຳມາໃຫ້.

ຄຳຖາມເພື່ອການສຳຣວດ: ພຣະເຈົ້າຊົງຕ້ອງການສິ່ງໃດສຳລັບທ່ານ?

ຈຸດປະສົງຂອງບົດຮຽນນີ້: ເພື່ອສຳຣວດເບິ່ງຄວາມຕ້ອງການຂອງທ່ານສຳລັບຕົນເອງແລະຄົນອື່ນໆໃນຄຳອ້ອນ ວອນຂອງໂປໂລ.

ເຣື່ອງທີ່ກຳລັງເນັ້ນໜັກໃນເທັກຊັດ:

- ແບ່ງປັນຂ່າວປະເສີດຂອງພຣະເຢຊູກັບທຸກໆຄົນໃນເທັກຊັດ, ໃນສະຫະຣັຖ, ແລະໃນທົ່ວໂລກ
- ຮັບໃຊ້ເພື່ອນມະນຸດໃນພຣະນາມພຣະເຢຊູ
- ຈັດຕຽມຄຣິສຕຽນເພື່ອຮັບໃຊ້ໃນຄຣິສຕະຈັກ ແລະທົ່ວໂລກ
- ເສີມສ້າງຄອບຄົວຄຣິສຕຽນ
- ຊ່ວຍຄຣິສຕະຈັກໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກເພີ່ມຂຶ້ນ

## ຄຳນຳ

ສິ່ງພິເສດທີ່ພຣະເຈົ້າໄດ້ຊົງປະທານໃນຄວາມລອດພົ້ນຂອງພວກເຮົາ ຜູ້ທີ່ຮັບເຊື່ອ ຄື ກຳລັງ, ຄວາມພໍໃຈ, ຄວາມຮັກ, ຄວາມໃກ້ຊິດ ແລະ ຄວາມສັມພັນອັນເຂັ້ມແຂງກັບພຣະອົງ. ນອກນັ້ນຄວາມເຊື່ອໃນອົງພຣະຄຣິດ ຍັງເປັນພື້ນທາງໄປ ສູ່ພຣະພອນທັງຫມົດ ເພື່ອການດຳເນີນຊີວິດຢ່າງຜູ້ມີໄຊຊະນະ.

"ເພາະເຫດນີ້" (3:14-15)

ໂປໂລ ໃຊ້ຄຳວ່າ "ເພາະເຫດນີ້" ເພື່ອປຣົມເຣື່ອງທີ່ຈະເວົ້າຕໍ່ໄປ. "ເພາະເຫດນີ້" ອ້າງເຖິງ ພຣະຄຳທີ່ໄດ້ກ່າວມາແລ້ວ ໃນ ເອເຟໂຊ 2:19-22. ຄຳອ້ອນວອນຂອງໂປໂລ ໃນພຣະທັມ ເອເຟໂຊ 1:15-23 ແມ່ນຄຳອ້ອນວອນເພື່ອຂໍສະຕິ ປັນຍາແລະຄວາມຮູ້, ແຕ່ ໃນຕອນນີ້, ໂປໂລ ກຳລັງອ້ອນວອນຂໍກຳລັງ ແລະຄວາມສາມາດ. ໂປໂລຕ້ອງການໃຫ້ຊາວ ເອເຟໂຊໄດ້ຮຽນຮູ້ເຖິງ ທຸກຢ່າງທີ່ພວກເຂົາມີຢູ່ໃນພຣະຄຣິດ ແລະໃຫ້ດຳເນີນຊີວິດໄປຕາມສິ່ງທີ່ພວກເຂົາໄດ້ຮຽນຮູ້.

ໂປໂລອ້ອນວອນເພື່ອຄອບຄົວຂອງພຣະເຈົ້າທີ່ຢູ່ໃນຟ້າສວັນແລະແຜ່ນດິນໂລກ.  ເຂົາອ້ອນວອນໃຫ້ແຕ່ລະຄົນໄດ້ຮູ້ກໍາລັງອັນເຂັ້ມແຂງຝ່າຍ ຈິດວິນຍານ.

<u>ກໍາລັງເພື່ອການດໍາເນີນຊີວິດ</u> (3:16-17)

ພຣະເຈົ້າຊົງປະສົງໃຫ້ຄຣິສຕຽນທຸກຄົນໄດ້ມີກໍາລັງໃນການດໍາເນີນຊີວິດ. ພຣະວິນຍານບໍຣິສຸດເປັນຜູ້ໃຫ້ກໍາລັງພາຍໃນຜ່ານພຣະທັມ ແລະການອ້ອນວອນອະທິຖານ. ໃນ ເອເຟໂຊ 3:20-21, ໂປໂລບອກວ່າ, ເວລາພວກເຮົາອະທິຖານ ພຣະວິນຍານເລີ່ມທໍາງານພາຍໃນເຮົາ ແລະພຣະອົງຈະສອນ ພວກເຮົາຜ່ານພຣະທັມຂອງພຣະເຈົ້າ (ໂກໂລຊາຍ 3:6; 1 ເທຊະໂລນິດ 2:13). ຄຣິສຕຽນໃນສມັຍແລກໄດ້ພາກັນໃຊ້ເວລາໃນການອ້ອນວອນ ແລະໃນການສຶກສາພຣະຄໍາຂອງພຣະເຈົ້າເປັນປະຈໍາ; ພວກເຂົາໄດ້ເຫັນຣິດອໍານາດອັນຍິ່ງໃຫຽ່ຂອງພຣະ ເຈົ້າປາກົດຢູ່ໃນວຽກງານການຮັບໃຊ້ ແລະໃນຊີວິດຂອງເຂົາຢູ່ສເມີ.

ໂປໂລອ້ອນວອນຂໍໃຫ້ພຣະຄຣິດໄດ້ຊົງຕັ້ງຢູ່ໃນໃຈຂອງຜູ້ທີ່ເຊື່ອທຸກຄົນ (3:17). ໂປໂລບໍ່ໄດ້ໝາຍເຖິງວ່າຜູ້ທີ່ເຊື່ອຍັງບໍ່ໄດ້ມີພຣະເຢຊູຄຣິດຢູ່ນໍາພວກເຂົາ; ເພາະພວກເຮົາຮູ້ວ່າ, ພຣະຄຣິດຊົງສະຖິດຢູ່ນໍາຄຣິສຕຽນທຸກໆຄົນໂດຍຣິດຂອງພຣະວິນຍານບໍຣິສຸດຂອງພຣະເຈົ້າ. ແຕ່ໂປໂລ ຢາກໃຫ້ຄຣິສຕຽນນໍາເອົາພຣະລັກສະນະແລະວຽກງານຂອງອົງພຣະ ຄຣິດ ມາເປັນຕົວຢ່າງໃນການດໍາເນີນຊີວິດຂອງພວກເຂົາ.  ໂປໂລ ຢາກເຫັນຣິດເດດຂອງພຣະວິນຍານປາກົດຢູ່ໃນທຸກຢ່າງທີ່ຄຣິສຕຽນກະທໍາ.

<u>ກໍາລັງເພື່ອການຮຽນຮູ້</u> (3:17-19)

ເວລາພວກເຮົາວາງຮາກລົງຢ່າງໝັ້ນຄົງໃນຄວາມຮັກຂອງພຣະເຈົ້າ, ພວກເຮົາຈະສາມາດຮຽນຮູ້ ແລະເຂົ້າໃຈເຖິງຄວາມຮັກອັນໝັ້ນຄົງຂອງພຣະຄຣິດທີ່ມີຕໍ່ພວກເຮົາ. ຄຣິສຕຽນຫລາຍຄົນຢາກໄດ້ຜົນຂອງພຣະວິນຍານໂດຍບໍ່ຍອມວາງຮາກໃຫ້ໝັ້ນຄົງໃນເຣື່ອງຈິນວິນຍານ.  ຄວາມຮັກຂອງພຣະເຈົ້າຄືພື້ນຖານສໍາລັບການເຕີບໃຫຍ່ໃນຊີວິດຄຣິສຕຽນ.  ເພາະຄວາມຮັກຂອງພຣະເຈົ້າທີ່ມີຢູ່ໃນຊີວິດເຮົາ, ພວກເຮົາຈຶ່ງສາມາດຮັກຄົນອື່ນໆໄດ້.  ມີໃຜບໍ່ໃນຊີວິດຂອງທ່ານທີ່ທ່ານບໍ່ສາມາດຈະຮັກເຂົາໄດ້? ມີໃຜບໍ່ທີ່ມາຈາກເຊື້ອຊາດທີ່ແຕກຕ່າງກັບທ່ານ ແລະທ່ານບໍ່ສາມາດຈະຮັກເຂົາໄດ້? ເຖິງເວລາແລ້ວທີ່ທ່ານຈະຕ້ອງພິຈາຣະນາເບິ່ງຄວາມຮັກຂອງພຣະເຈົ້າສໍາລັບຕົວທ່ານ.

ໂປໂລ ອ້ອນວອນຂໍໃຫ້ຊາວເອເຟໂຊໄດ້ສາມາດເຂົ້າໃຈເຖິງຄວາມຮັກຂອງພຣະຄຣິດຊຶ່ງເຕັມຄົບບໍຣິບູນດ້ວຍທຸກຢ່າງ; ເພື່ອພວກເຂົາຈະໄດ້ຮັບພຣະພອນອັນປະເສີດຂອງພຣະເຈົ້າ.  ໂດຍຄວາມເຊື່ອພວກເຮົາສາມາດໄດ້ຮັບພຣະສັນຍາທຸກຢ່າງຂອງພຣະເຈົ້າ.  ພຣະປະສົງອັນຍິ່ງໃຫຍ່ຂອງພຣະເຈົ້າ ຄືໃຫ້ຊີວິດຄຣິສຕຽນ ໄດ້ຮັບຄວາມເຕັມບໍຣິບູນຂອງ ພຣະອົງທຸກປະການ" (3:19).  ພຣະທັມ ໂຢຮັນ 1:16 ແລະ ພຣະທັມ ໂກໂລຊາຍ 2:9-10 ປະກາດວ່າ ຄຣິສຕຽນທຸກຄົນມີຊີວິດຄົບບໍຣິບູນໃນພຣະເຈົ້າ.  ເປັນຫຍັງຄຣິສຕຽນສ່ວນຫລາຍຍັງໃຊ້ຊີວິດເໝືອນຄົນໝົດຄວາມຫວັງທັງໆທີ່ຮູ້ວ່າພຣະເຈົ້າໄດ້ຊົງປະທານຄວາມບໍຣິບູນຂອງພຣະອົງໃຫ້ພວກເຂົາແລ້ວ?  ຊີວິດທີ່ບໍ່ມີຄວາມບໍຣິບູນຂອງພຣະເຈົ້າເປັນຊີວິດທີ່ຍັງຫວ່າງເປົ່າ.  ຊີວິດຫວ່າງເປົ່າເປັນຊີວິດທີ່ໝົດຫວັງ, ເປັນຊີວິດທີ່ອັນຕະລາຍ ເພາະເປັນຊີວິດທີ່ຈະກ້າວໄປສູ່ຄວາມຜິດບາບ ແລະຄວາມຕາຍ (ເອເຟໂຊ 2:2).

## ກຳລັງເພື່ອຄວາມຮັກ ແລະຄວາມຝັນ (3:20-21)

ບໍ່ມີມະນຸດ ຫລື ເທວະດາຕົນໃດທີ່ຈະຄິດຝັນໄດ້ວ່າ ພວກຢິວແລະພວກຕ່າງຊາດຈະສາມາດຢູ່ຮ່ວມກັນໄດ້ ຫລືວ່າຈະສາມາດຮັກກັນໄດ້. ບໍ່ມີສິ່ງໃດໃນໂລກນີ້ ທີ່ຈະເຮັດໃຫ້ມະນຸດຜູ້ຊຶ່ງມີເບື້ອງຫລັງ, ວັທນະທັມ, ແລະເຊື້ອຊາດຕ່າງກັນສາມາດຮັກກັນໄດ້ແບບບໍ່ມີເງື່ອນໄຂນອກຈາກຄຣິສຕະຈັກຂອງພຣະຄຣິດ. ມະນຸດບໍ່ສາມາດຈະເຮັດໃຫ້ມະນຸດຮັກກັນໄດ້ປາສຈາກການນຳພາຂອງພຣະເຈົ້າ. ສິ່ງເຫລົ່ານີ້ເຮັດໃຫ້ ໂປໂລຕ້ອງສັຣເສີນແລະຖວາຍກຽດແດ່ພຣະເຈົ້າໃນພຣະທັມຕອນນີ້. ໃນຕອນສຸດທ້າຍຂອງຄຳອ້ອນວອນຂອງໂປໂລ, ເຂົາໄດ້ປ່ຽນຈາກການເວົ້າເຖິງກຳລັງທີ່ມີໄວ້ສຳລັບຜູ້ທີ່ເຊື່ອ ໄປສັຣເສີນພຣະຜູ້ເປັນເຈົ້າຜູ້ເຕັມໄປດ້ວຍຣິດອຳນາດແລະກຳລັງ. ໂປໂລເວົ້າວ່າພຣະເຈົ້າຊົງປະທານ "ຣິດອຳນາດທີ່ກຳລັງດຳເນີນຢູ່ພາຍໃນຕົວເຮົາທັງຫລາຍ" (3:20). ຣິດອຳນາດຂອງພຣະເຈົ້າບໍ່ມີຂອບເຂດ ແລະພຣະອົງຊົງສາມາດກະທຳໄດ້ຫລາຍກວ່າສິ່ງທີ່ພວກເຮົາກຳລັງອ້ອນວອນຂໍ ແລະ ຫລາຍກວ່າສິ່ງພວກເຮົາສາມາດຄິດໄວ້ກ່ອນ. ມີຫຍັງແດ່ທີ່ທ່ານໃຈກ້າພໍທີ່ຈະຂໍນຳພຣະເຈົ້າ? ມີຫຍັງແດ່ທີ່ທ່ານຄິດວ່າພຣະເຈົ້າອາດຈະໃຊ້ທ່ານໃຫ້ເຮັດເພື່ອຣາຊອານາຈັກຂອງພຣະອົງ? ຖ້າທ່ານຮູ້ວ່າພຣະເຈົ້າສາມາດເຮັດໄດ້ທຸກຢ່າງ, ມີຫຍັງແດ່ທີ່ທ່ານຢາກເຮັດ? ທ່ານອາດຈະຕອບຄຳຖາມເຫລົ່ານີ້ໄດ້ຫລາຍແບບ, ແຕ່ສິ່ງນຶ່ງທີ່ທ່ານຕ້ອງຈົດຈຳໄວ້ຄື ພຣະເຈົ້າສາມາດເຮັດໄດ້ເກີນກວ່າສິ່ງທີ່ທ່ານຄາດຫມາຍໄວ້.

ໂປໂລປິດການອ້ອນວອນໂດຍການເວົ້າເຖິງ "ອຳນາດທີ່ກຳລັງດຳເນີນຢູ່ພາຍໃນຕົວເຮົາ" ກັບການສັຣເສີນ, ຄວາມຮັກ ແລະການຍ້ອງຍໍພຣະເຈົ້າ. ພຣະເຈົ້າຊົງທຳງານຢູ່ໃນພວກເຮົາ; ພຣະອົງຊົງທຳງານຜ່ານພວກເຮົາ; ພຣະອົງໄດ້ຮັບພຣະກຽດໃນຕົວພວກເຮົາ. ຣິດອຳນາດຂອງພຣະເຈົ້າເລີ້ມທຳງານໃນຊີວິດພວກເຮົາເວລາເຮົາພວກເປີດໃຈໃຫ້ພຣະຄຣິດ, ເວລາພວກເຮົາຕິດສນິດຢູ່ກັບພຣະອົງ, ເວລາພວກເຮົາອ້ອນວອນອະທິຖານ, ແລະເວລາພວກເຮົາຍອມເຮັດຕາມພຣະຄຳຂອງພຣະເຈົ້າ.

ພຣະເຈົ້າຊົງຕ້ອງການສິ່ງໃດສຳລັບທ່ານ? ພຣະອົງຕ້ອງການໃຫ້ທ່ານໄດ້ມີປະສົບການກັບຣິດອຳນາດທີ່ພຣະອົງມີໄວ້ສຳລັບທ່ານໃນການດຳເນີນຊີວິດ. ພຣະອົງຊົງປະສົງໃຫ້ທ່ານໄດ້ມີປະສົບການແລະໄດ້ຮູ້ຄວາມຮັກອັນບໍ່ມີຂອບເຂດຂອງພຣະອົງ. ພຣະອົງຊົງປະສົງໃຫ້ທ່ານໄດ້ສາມາດຮັກຄົນອື່ນໆທີ່ແຕກຕ່າງກັບຕົວຂອງທ່ານ, ແລະພຣະອົງຊົງຕ້ອງການໃຫ້ທ່ານໄດ້ມີເສຣີພາບໃນການໄຝ່ຝັນເຖິງສິ່ງທີ່ທ່ານຢາກຈະເຮັດເພື່ອພຣະອົງ. ຄວາມເຊື່ອໃນອົງພຣະເຢຊູຄຣິດ ຈະນຳຜູ້ທີ່ເຊື່ອທຸກຄົນໃຫ້ໄປເຖິງພຣະພອນເຫລົ່ານີ້ສຳລັບຊີວິດຂອງພວກເຂົາ.

### ຄຳຖາມ

1. ທ່ານຈົດຈຳຄາວສຸດທ້າຍທີ່ທ່ານໄດ້ມີປະສົບການເຣື່ອງຣິດເດດຂອງພຣະເຈົ້າບໍ່?
2. ພຣະເຈົ້າໄດ້ປ່ຽນແປງອຸປະນິສັຍຂອງທ່ານແນວໃດແດ່? ທ່ານກຳລັງເຕີບໃຫຍ່ດ້ານໃດ?
3. ມີຫຍັງແດ່ທີ່ທ່ານສາມາດເຮັດໃນອາທິດນີ້ ເພື່ອສະແດງຄວາມຮັກຂອງທ່ານທີ່ມີຕໍ່ຜູ້ເຊື່ອອື່ນໆ?
4. ເບິ່ງຄະແນນແຕ່ 1 ເຖິງ 10 (10 ແມ່ນຄະແນນສູງສຸດ), ທ່ານຄິດວ່າຄຣິສຕະຈັກຂອງທ່ານໄດ້ຄະແນນສູງຫລາຍປານໃດໃນການຕ້ອນຮັບຜູ້ຄົນທີ່ມາຈາກເຜົ່າພັນອື່ນໆ?
5. ມີຫຍັງແດ່ທີ່ທ່ານໄດ້ໄຝ່ຝັນໄວ້ສຳລັບຄຣິສຕະຈັກຂອງທ່ານ? ມີຫຍັງແດ່ທີ່ທ່ານຢາກຈະຮ້ອງຂໍນຳພຣະເຈົ້າກ່ຽວກັບຄອບຄົວຂອງທ່ານ? ກ່ຽວກັບຜົວແລະເມັຽ? ກ່ຽວກັບລູກ?

# ບົດຮຽນທີ 10
# ຈະຊອກຫາໜ້າທີ່ຢ່າງໃດໃນຄຣິສຕະຈັກ?

---

<u>ຂໍ້ພຣະຄັມພີສຳຫລັບບົດຮຽນນີ້:</u> ເອເຟໂຊ 4:1-16

<u>ຂໍ້ພຣະຄັມພີສຳຫລັບເບື້ອງຫລັງ:</u> ເອເຟໂຊ 4:1-16

<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເຈົ້າຕ້ອງການຢາກນຳພາຊີວິດຂອງພວກເຮົາໃຫ້ມີຊີວິດທີ່ດີ ສົມກັບຄຳທີ່ວ່າເປັນຄຣິສຕຽນ, ຝຶກຝົນຂອງພຣະຣາຊທານ ທີ່ມີຢູ່ເພື່ອເສີມສ້າງຄຣິສຕະຈັກ ແລະສັນຍາວ່າຈະຮັບໃຊ້ທຸກຢ່າງຕາມທີ່ພຣະວິນ ຍານບໍລິສຸດຕ້ອງການ.

<u>ຄຳຖາມເພື່ອການສຳຫລວດ:</u> ປັດຈຸບັນນີ້ ທ່ານກຳລັງເຮັດ ສິ່ງທີ່ພຣະເຈົ້າຕ້ອງການໃຫ້ທ່ານເຮັດຫລືບໍ່?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຈະໄດ້ຊີ້ໃຫ້ເຫັນ ຫົນທາງ ທີ່ພຣະເຈົ້າຕ້ອງການນຳພາຊີວິດຂອງພວກເຮົາໄປສູ່ຊີວິດຄຣິສຕຽນທີ່ດີ ແລະ ເພື່ອຈະໄດ້ເສີມສ້າງຄຣິສຕະຈັກ.

## <u>ບົດຮຽນ</u>

<u>ຄຳນຳ:</u>

ຄຣິສຕຽນຊາວເອເຟໂຊ ເປັນກຸ່ມນ້ອຍໆກຸ່ມນຶ່ງ ຊຶ່ງປະປົນຢູ່ນຳພວກບູຊາພຣະປອມ. ພວກເຂົາເຈົ້າຖືກຫົວເຢາະເຢີ້ຍ ແລະຖືວ່າເປັນຄົນທີ່ມີຄຸນຄ່າຕໍ່າ. ໂປໂລໜູນໃຈເຂົາເຈົ້າບໍ່ໃຫ້ຢ້ານກົວຕໍ່ຄຳເຢາະເຢີ້ຍແລະຄຳດູຖູກເຫລົ່ານັ້ນ, ໃຫ້ຕັ້ງໝັ້ນຄົງໃນຄວາມເຊື່ອ ໂດຍການດຳເນີນຊີວິດ. ທຸກວັນນີ້ ກໍເຊັ່ນກັນ ພວກເຮົາຕ້ອງສະແດງວ່າ ຄວາມເຊື່ອຂອງພວກເຮົາແມ່ນຂອງຈິງ. ແຕ່ກໍຍັງມີບາງຄົນ ທີ່ມີຄວາມຫຍຸ້ງຍາກໃນການເຊື່ອຖື--ໂດຍສະເພາະ ໃນສອງສັຕວັດຜ່ານມາ (ສັຕວັດ=10ປີ) ຄຣິສຕຽນວາງຕົວບໍ່ເປັນທີ່ໜ້າເຊື່ອຖືໄດ້. ພວກທີ່ບໍ່ເປັນຄຣິສຕຽນຈຶ່ງຍັງຫົວເຣາະເຢາະເຢີ້ຍໂບດຕລອດມາ. ໂດຍສະເພາະແລ້ວກໍແມ່ນນິກາຍບັບຕິສຂອງພວກເຮົາ ດຽວນີ້ເໝືອນກັບເຮືອທີ່ຖືກປະປ່ອຍຢູ່ກາງດອນ. ຜູ້ໄປພົບເຫັນໄດ້ເປີດເຜີຍວ່າ ລາວໄດ້ສ້າງກະຕູບນ້ອຍໆ ສາມອັນດ້ວຍໃບຕານ. " ຕູບສາມອັນນັ້ນມີຄວາມໝາຍວ່າຢ່າງໃດ?" ພວກໄປຄົ້ນພົບຖາມ.ໝໍບັບຕິສທີ່ຢູ່ໂດດດ່ຽວນັ້ນຈຶ່ງຕອບວ່າ " ເອີ້, ຕູບທຳອິດນັ້ນ ແມ່ນບ່ອນຂ້ອຍພັກເຊົາ, ແລະອີກອັນນຶ່ງນັ້ນແມ່ນ ບ່ອນຂ້ອຍໄປໂບດ." "ອັນທີ ສາມນັ້ນເດແມ່ນບ່ອນໃດ? " "ອັນທີສາມນັ້ນແມ່ນບ່ອນໂບດເກົ່າຂອງຂ້ອຍ " ນີ້ຄືຄຳຕອບຂອງລາວຄຣິສຕຽນເຮົາບາງຄັ້ງກໍບໍ່ເຫັນພ້ອມກັບຊີວິດຂອງຕົວເອງ. ພຣະເຈົ້າຫວັງໜຍັງແດ່ໃນຊີວິດຂອງເຮົາ ເພື່ອຄຣິສຕະຈັກ.ມາພິຈາຣະນາ ສາມ ຢ່າງທີ່ໂປໂລກ່າວໄວ້:

1. ພຣະເຈົ້າຫວັງຢາກໃຫ້ຄຣິສຕຽນໃນໂບດມີຊີວິດເປັນອັນນຶ່ງອັນດຽວກັນ (4:1-6)
2. ພຣະເຈົ້າຫວັງຢາກໃຫ້ຄຣິສຕຽນໃນໂບດຊອກຫາ ແລະໃຊ້ຂອງພຣະຣາຊທານທີ່ມີ (4:7-11)
3. ພຣະເຈົ້າຫວັງຢາກໃຫ້ຄຣິສຕຽນໃນໂບດມີຄວາມຈະເຣີນຂຶ້ນເປັນຜູ້ໃຫຍ່ (4:12-16)

## <u>ພຣະເຈົ້າຫວັງຢາກໃຫ້ຄຣິສຕຽນໃນໂບດເປັນອັນນຶ່ງອັນດຽວກັນ</u> (4:1-6)

ຕັ້ງແຕ່ຂໍ້ 1 ຫາຂໍ້ 6 ຄຳທີ່ເຕືອນເຮົາໃຫ້ເປັນອັນນຶ່ງອັນດຽວກັນມີຫລາຍເທື່ອສົມຄວນ ແລະແຕ່ລະເທື່ອກໍໄດ້ມີຄຳເຕືອນຕິດຕາມມາ ຄືຄຳວ່າພຽນອົດທົນ, ພຽນພະຍາຍາມ, ຮັກສາ,.... ສັງເກດເບິ່ງໃນພຣະຄຳຂອງພຣະເຈົ້າໃຫ້ດີໆ ພວກເຮົາບໍ່ໄດ້ຖືກບອກໃຫ້ສ້າງຄວາມເປັນອັນນຶ່ງອັນດຽວກັນ. ພວກເຮົາຖືກວິງວອນ, ຂໍຮ້ອງໃຫ້ຮັກສາມັນໄວ້. ໃຫ້ອົດທົນພາກພຽນທະນຸຖນອມມັນໄວ້(4:3). ຜູ້ທີ່ມີຄວາມເຊື່ອແຕ່ລະຄົນຄວນລະນຶກຢູ່ສເມີ ຕ້ອງເສີມຂຍາຍນິສັຍຂອງພຣະເຢຊູອອກມາ ເພື່ອຄວາມເປັນນ້ຳນຶ່ງໃຈດຽວກັນຂອງໂບດ. ຕ້ອງຖ່ອມຕົວ ແທນທີ່ຈະຍົກສູງຕົວເອງ ແລະຄິດວ່າຕົວມີແນວຄິດສູງກວ່າໝູ່.

- ຕ້ອງສຸພາບອ່ອນໂຍນ ແທນທີ່ຈະມີນິສັຍອັນຕະພານ
- ຕ້ອງອົດທົນ ແທນທີ່ ຈະເປັນຄົນໂມໂຫງ່າຍ ແລະ ຫາທາງແກ້ແຄ້ນ
- ຕ້ອງອົດກັ້ນ ແທນທີ່ ຈະເປັນຄົນເອົາແຕ່ໃຈຕົວເອງ
- ຕ້ອງມີຄວາມຮັກ (ອາກາເປ) ເໝືອນ ໃນ 1 ໂກຣິນໂທ ບົດ13

ທີ່ຈະມີຄວາມເປັນອັນນຶ່ງອັນດຽວກັນໄດ້, ໂປໂລໄດ້ວາງຮາກຖານໄວ້ 7 ຢ່າງດັ່ງນີ້: ຮ່າງກາຍດຽວ, ພຣະວິນຍານອົງດຽວ, ຄວາມຫວັງໃຈອັນດຽວ, ພຣະເຈົ້າອົງດຽວ, ຄວາມເຊື່ອດຽວ, ບັບຕິສະມາດຽວ, ພຣະເຈົ້າພຣະບິດາອົງດຽວ. ໃນເມື່ອຄຣິສຕຽນ ຫາກມີທຸກສິ່ງຢ່າງ ເປັນອັນນຶ່ງອັນດຽວດັ່ງນີ້ ຄົງຈະບໍ່ມີອັນໃດຈະເຮັດໃຫ້ມີການບໍ່ເຂົ້າໃຈກັນ. ນອກຈາກວ່າຄຣິສຕຽນຈະມີຄວາມເຊື່ອປອມ ແລະມີພຣະເຈົ້າປອມ.

## <u>ພຣະເຈົ້າຫວັງຢາກໃຫ້ຄຣິສຕຽນໃນໂບດຊອກຫາ ແລະໃຊ້ຂອງພຣະຣາຊທານທີ່ມີ</u>(4:7-11)

ພຣະເຈົ້າຫວັງຢາກໃຫ້ມີຄວາມເປັນອັນນຶ່ງອັນດຽວກັນໃນໂບດ ບໍ່ແມ່ນຈະໃຫ້ຄືກັນໝົດດອກ. ພາຍໃນໂບດພຣະອົງໄດ້ຕຽມຂອງປະທານໃຫ້ແຕ່ລະຄົນໄວ້ແລ້ວ ຊຶ່ງໂປໂລໄດ້ໄລ່ຊື່ອອກມາ (4:11-12) ຂໍ້ຄວາມຕອນນີ້ ເຕືອນໃຫ້ພວກຄິດເຖິງຂໍ້ພຣະຄຳ 1ໂກຣິນໂທ <u>12:4-5 " ຂອງພຣະຣາຊທານນັ້ນມີຕ່າງໆກັນ ແຕ່ມີພຣະເຈົ້າອົງດຽວ. ງານຮັບໃຊ້ມີຕ່າງໆກັນ ແຕ່ມີພຣະຜູ້ເປັນເຈົ້າອົງດຽວກັນ</u>" ພຣະເຈົ້າຕ້ອງການໃຫ້ພວກເຮົາໄດ້ໃຊ້ຂອງປະທານທີ່ພວກເຮົາມີຢູ່ຢ່າງຊົມຊື່ນຍິນດີ.

ສຳຫລັບທ່ານເດ ທ່ານໄດ້ຮັບຫຍັງແດ່? ຂໍ້ທີ 7 ກ່າວວ່າ "ທຸກໆຄົນ" ແມ່ນການສຳແດງຂອງການປະທານ. ທ່ານເອງກໍເປັນຄົນນຶ່ງທີ່ສຳຄັນບໍ່ໜ້ອຍກວ່າໃຜທັງນັ້ນ ເພື່ອຈະໃຫ້ມີປໂຍດຮ່ວມກັນ. ຍັງບໍ່ພໍທໍ່ນັ້ນພວກເຮົາຍັງໄດ້ຮັບພຣະຄຸນທຸກໆຄົນ ຕາມທີ່ພຣະຄຣິດໄດ້ຊົງກຳນົດໄວ້. (ເອເຟໂຊ 4:7)

ຂໍ້ 9 ແລະ 10 ໄດ້ເລີ່ມຕົ້ນດ້ວຍວົງເລັບ. ໃນວົງເລັບນີ້ ສະແດງເຖິງນິສັຍຂອງໂປໂລ ທີ່ເປັນຄົນມັກແບ່ງປັນ. ໃນນີ້ກໍເຊັ່ນດຽວກັນ ໃນເມື່ອລາວກ່າວເຖິງຂອງປະທານ, ຖ້າໂປໂລໄດ້ຮັບອັນໃດພວກເຮົາກໍໄດ້ຮັບດ້ວຍ ແລະຖ້າພຣະເຢຊູຄຣິດຢູ່ສະຖານທີ່ໃດພວກເຮົາກໍຢູ່ດ້ວຍ.

ຂອງພຣະຣາຊທານທີ່ພຣະເຈົ້າຊົງປະທານໃຫ້ນັ້ນຄ້າຍໆຄືກັນ ແຕ່ບໍ່ໄດ້ສະເພາະເຈາະຈົງເໝືອນ ຢູ່ໃນ 1ໂກຣິນໂທ 12:28 ສິ່ງທີ່ໂປໂລກ່າວໃນ ເອເຟໂຊ 4:11 ມີດັ່ງນີ້: "ອັຄສາວົກ" ໝາຍເຖິງ 12 ຄົນທີ່ພຣະເຢຊູຊົງເລືອກ ແລະຕໍ່ມາ

ກໍແມ່ນພວກ ໂປໂລ, ຢາໂກໂບ, ບາຣະນາບັດ, ສີລາວານ. ຜູ້ປະກາດພຣະທັມ" ໝາຍເຖິງພວກຜູ້ຍິງແລະຜູ້ຊາຍທີ່ສິດສອນ ອອກໄປປ່າວປະກາດໃນພຣະນາມພຣະເຢຊູ. ຖ້າເວລາມີເຫດການສຳຄັນພວກເຂົາເຈົ້າກໍໄດ້ເຂົ້າຮ່ວມກັບບັນດາອັຄສາວົກ. "ຜູ້ປະກາດຂ່າວປະເສີດ" ໝາຍເຖິງ ມິດຊັນເນຣີ ພວກທີ່ນຳພຣະກິຕິຄຸນອອກໄປເຜີຍແຜ່. ໃນນີ້ໂປໂລ ປຽບໃສ່ຕີໂມທຽວ ເພາະລາວມີຂອງປະທານທາງດ້ານນີ້. 2 ຕີໂມທຽວ 4:5 "ສິດຍາພິບານແລະອາຈານ" ສອງຄວາມນີ້ ມີຄວາມໝາຍອັນດຽວກັນ (ສິດຍາພິບານ/ຄຣູສອນ) ສຳຫລັບກຸ່ມບັບຕິສຂອງພວກເຮົາແລ້ວ ມັກໃຊ້ຄຳວ່າຜູ້ປົກຄອງ, ເຖົ້າແກ່, ຜູ້ລ້ຽງແກະ, ຜູ້ດູແລ ຊຶ່ງກໍແມ່ນໜ້າທີ່ດຽວກັນ. (ກຈ 20: 17, 28).

<u>ພຣະເຈົ້າຫວັງຢາກໃຫ້ຄຣິສຕຽນໃນໂບດຈະເຣີນຂຶ້ນເປັນຜູ້ໃຫຍ່</u> (4:12-16)
ຈະເຣີນຂຶ້ນແມ່ນສິ່ງສຳຄັນທີ່ສຸດຂອງຊີວິດໃນຈັກວານອັນນີ້. ເວລາຂ້າພະເຈົ້ານຳພາຄຣິສຕະຈັກຢູ່ຣັດຄາລີຟໍເນັຍ, ຂ້າພະເຈົ້າໄດ້ມີໂອກາດໄປ ໂຢເຊມິດຕີ້ (Yosemite Park) ແລະໄດ້ເຫັນຕົ້ນໄມ້ໃຫຍ່ ຊຶ່ງລວງອ້ອມນັ້ນຄົນຊາວຄົນຕໍ່ແຂນກັນວາກໍຍັງບໍ່ຮຸ້ມ, ຄວາມສູງມີປະມານ ຮ້ອຍກວ່າແມັດ (ຖ້າຈະເອົາມານອນໃສ່ເດີ່ນເຕະບານແລ້ວແມ່ນຍາວກວ່າ) ຜູ້ຮັກສາສວນສາທາລະນະນີ້ ກ່າວວ່າ ຕົ້ນໄມ້ນີ້ແມ່ນອອກມາຈາກ ເມັດນ້ອຍໆນຶ່ງຊຶ່ງມີຄວາມໃຫຍ່ບໍ່ເຖິງນຶ່ງມິນລີແມັດຊ້ຳ. ນີ້ຄືຄວາມຈະເຣີນທາງດ້ານວັດຖຸ. ແຕ່ວ່າໃນເອເຟໂຊ 4:15 ບໍ່ໄດ້ກ່າວເຖິງວັດຖຸ ແຕ່ກ່າວເຖິງຈິດວິນຍານ. "ແຕ່ໃຫ້ພວກເຮົາຍຶດເອົາຄວາມຈິງດ້ວຍໃຈຮັກ ເພື່ອຈະໄດ້ຈະເຣີນຂຶ້ນທຸກຢ່າງຈົນເຖິງພຣະອົງຜູ້ເປັນສີສະ ຄືພຣະຄຣິດ."

ທ່ານຈະບອກໄດ້ຢ່າງໃດວ່າທ່ານຈະເຣີນຂຶ້ນຝ່າຍຈິດວິນຍານແລ້ວ? ເວລາທ່ານໄປຫາໝໍ, ນາງພະຍາບານຈະວັດແທກຄວາມສູງຂອງທ່ານ. ແຕ່ເວລາທ່ານຢາກຮູ້ວ່າທ່ານສູງຂຶ້ນສ່ຳໃດທາງດ້ານຈິດວິນຍານ ໃຜຈະວັດແທກທ່ານ? ຄວາມເຊື່ອຂອງທ່ານຈະເຣີນຂຶ້ນບໍ່? ຈະເຣີນຂຶ້ນແລ້ວ, ຖ້າຫາກຄວາມເຊື່ອຂອງທ່ານ:

(1) <u>ຕັ້ງໝັ້ນຢູ່ໃນຄວາມຈິງຂອງພຣະຄັມພີ</u> (4:14,15) ຄຣິສຕຽນທີ່ບໍ່ໃຫຍ່ ແມ່ນເຂົາຍັງຖືກມັດດ້ວຍເລ້ກົນ ດ້ວຍລົມປາກຂອງມະນຸດຢູ່. ກົງກັນຂ້າມ ຄຣິສຕຽນທີ່ເຕີບໂຕຂຶ້ນແມ່ນຕັ້ງໝັ້ນຄົງຢູ່ໃນພຣະຄັມພີ. ເຂົາຈະສາມາດຕໍ່ສູ້ການທົດລອງຈາກລົມປາກ, ແລະເລ້ກົນຂອງນັກຮຽນຮູ້ຂອງໂລກນີ້ໄດ້. (ຂໍ້ 14)

(2) <u>ຕັ້ງໝັ້ນຢູ່ໃນຄວາມຮັກຂອງພຣະເຢຊູ</u> (4:15) ໂປໂລຕັກເຕືອນຕລອດເວລາວ່າ ຢ່າໄດ້ໃຊ້ສາສນາ ເປັນສິ່ງທີ່ຈອບອອຍເປັນຫ່ວງເປັນໃຍ ແຕ່ນຳຂໍ້ພຣະຄັມພີ ແຕ່ບໍ່ມີຄວາມຮັກ. ຄຣິສຕຽນທີ່ໃຫຍ່ແລ້ວ ຕ້ອງສົນໃຈນຳຄົນອື່ນດ້ວຍຄວາມຮັກ. ຢ່າລືມວ່າພຣະເຢຊູຕັກເຕືອນໃຫ້ເອົາທ່ອນໄມ້ອອກຈາກຕາຂອງຕົວເອງເສັຽກ່ອນ ເພື່ອຈະໄດ້ເຫັນຂີ້ເຫຍື້ອໃນຕາຂອງຄົນອື່ນແຈ້ງຂຶ້ນ.

(3) <u>ຕັ້ງໝັ້ນຢູ່ໃນຄຣິສຈັກ ແລະ ຖວາຍຕົວເອງ</u> (4:12,16) ພວກເຮົາສາມາດເປັນຄຣິສຕຽນແບບບໍ່ມີໂບດກໍໄດ້. ແຕ່ພຣະຄັມພີໄດ້ບອກພວກເຮົາຢ່າງຈະແຈ້ງແລ້ວວ່າ ຄຣິສຕຽນຕ້ອງມີໂບດ ແລະ ໃຫຍ່ໃນໂບດ. ຄຣິສຕຽນໂດດດ່ຽວຈະບໍ່ໃຫຍ່ຈັກເທື່ອ, ດັ່ງນັ້ນລະ ຄຣິສຕຽນຈຶ່ງໃຫຍ່ເປັນກຸ່ມ, ຈະເຣີນຂຶ້ນເປັນໝວດ, ແລະກ້າວໄປເປັນຄຣິສຕະຈັກ. ໂບດທີ່ຈະເຣີນແລ້ວຈະສາມາດຊ່ວຍໂບດອື່ນໄດ້. ຄົນທີ່ຈະເຣີນແລ້ວກໍຈະສາມາດຊ່ວຍຄົນອື່ນໄດ້. ຄົນທີ່ຈະເຣີນແລ້ວເທົ່ານັ້ນຈຶ່ງສາມາດຖວາຍຕົວໃຫ້ຄຣິສຕະຈັກ, ໃຫ້ສັງຄົມ ແລະໃຫ້ປະເທດຊາດບ້ານເມືອງໄດ້.

(4) <u>ຕັ້ງຫມັ້ນໃຫ້ພຣະຄຣິດເປັນສູນກາງ</u> (4:13,16) ຫລາຍຄົນກ່າວວ່າ ຂໍ້ທີ 13 ນີ້ ແມ່ນຫມາກຫົວໃຈຂອງເອເຟໂຊ ເພາະເປັນຈຸດຣວມເຮັດໃຫ້ພວກເຮົາປະສົມປະສານກັບພຣະເຢຊູຄຣິດ. ໂປໂລຮູ້ວ່າຊີວິດຂອງເພິ່ນ ຖ້າຂາດຈາກພຣະເຢຊູແລ້ວ ຮູ້ສຶກເປົ່າປ່ຽວອ້າງວ້າງ, ຮູ້ສຶກເບື່ອຫນ່າຍລຳຄານ, ຮູ້ສຶກຂາດເປົ້າຫມາຍແລະບໍ່ກະຕືລືລົ້ນ. ເມື່ອມີພຣະເຢຊູ ເປັນສູນກາງຊີວິດແລ້ວ ລາວຮູ້ສຶກວ່າ ສິ່ງຕ່າງໆໄດ້ກັບເຂົ້າມາຕໍ່ເຂົ້າກັນ ແລະກໍຮູ້ສຶກວ່າມີສັນຕິສຸກຢ່າງບອກບໍ່ຖືກ.

ຂ້າພະເຈົ້າໄດ້ມີໂອກາດສັງເກດເບິ່ງຄຣູສອນໂຮງຮຽນວັນອາທິດ, ຄຣູໄດ້ຍົກຮູບນຶ່ງຂຶ້ນມາ ໂດຍຮູບນັ້ນບໍ່ມີອັນໃດຕິດຕໍ່ກັນເລີຍ. ຄຣູຖາມນັກຮຽນວ່າ " ນີ້ແມ່ນຮູບຫຍັງ? " ປາກົດວ່າ ບໍ່ມີນັກຮຽນຄົນໃດສາມາດຕອບໄດ້ ແລະ ກໍບໍ່ມີຄົນໃດສາມາດເດົາເລີຍວ່າເປັນຮູບຫຍັງ. ຫລັງຈາກນັ້ນຄຣູກໍແປງຮູບນັ້ນໃຫມ່ ໂດຍເອົາຕິດຕໍ່ເຂົ້າກັນ ແລະກໍເຫັນຮູບນັ້ນຢ່າງຈະແຈ້ງ. ນັກຮຽນທັງຫລາຍຈຶ່ງກ່າວພ້ອມກັນວ່າ ໂອ!!!!!!!!ນີ້ແມ່ນຮູບຂອງພຣະເຢຊູ.

ນີ້ລະຄືສິ່ງທີ່ພຣະເຢຊູກຳລັງກະທຳ ເມື່ອພຣະອົງເຂົ້າມາໃນຊີວິດຂອງພວກເຮົາ. ພຣະອົງນຳຊີວິດຂອງເຮົາແຕ່ລະສ່ວນມາຮ່ວມກັນ ເພື່ອໃຫ້ມີຄວາມຫມາຍຢ່າງເຕັມສ່ວນ. ຖ້າມີພຣະອົງ ຊີວິດຈະລາບລື້ນເປັນສຸກ.

<u>ຄຳຖາມ:</u>

1. ທ່ານຈະວັດແທກຄຣິສຕຽນທີ່ໃຫຍ່ແລ້ວຢ່າງໃດ?

2. ຄົນໆນຶ່ງຈະຖວາຍຕົວໃຫ້ກັບຄຣິສຕະຈັກໄດ້ນັ້ນ ຄົນນັ້ນຕ້ອງເປັນຢ່າງໃດ?

3. ຄວາມຮັກ ອາກາເປ ແມ່ນຄວາມຮັກປະເພດໃດ?

4. ແມ່ນຫຍັງຄືຄວາມແຕກຕ່າງລະຫວ່າງ ສ້າງຄວາມເປັນອັນນຶ່ງອັນດຽວກັນ ແລະ ຮັກສາຄວາມເປັນອັນນຶ່ງອັນດຽວກັນ? (ເອເຟໂຊ 4:3)

## ບົດຮຽນທີ 11
## ຈະເດີນຢ່າງໃດ ແລະ ຈະເວົ້າຢ່າງໃດ?

---

ຂໍ້ພຣະຄັມພີສຳຫລັບບົດຮຽນນີ້: ເອເຟໂຊ 4: 17- 15:11

ຂໍ້ພຣະຄັມພີສຳຫລັບເບື້ອງຫລັງ: ເອເຟໂຊ 4: 17 ຫາ 5:20

ຈຸດສຳຄັນຂອງບົດຮຽນນີ້: ຄຣິສຕຽນຕ້ອງສຳແດງຊີວິດໃຫມ່ໃນພຣະຄຣິດ ໃນທຸກໆການກະທຳ ແລະທຸກໆ ການພົວພັນທີ່ເກີດຂື້ນໃນຊີວິດ.

ຄຳຖາມເພື່ອການສຳຫລວດ: ຄົນທັງຫລາຍຈະເຫັນຫຍັງໃນຕົວທ່ານ ເພື່ອເປັນເຄື່ອງຫມາຍວ່າທ່ານເປັນຄຣິສຕຽນ?

ຈຸດປະສົງຂອງບົດຮຽນນີ້: ເພື່ອຊ່ວຍທ່ານທັງຫລາຍໃຫ້ໃຊ້ຊີວິດຢ່າງຄຣິສຕຽນຢ່າງເຕັມສ່ວນ ແລະ ດ້ວຍຄວາມເຊື່ອຢ່າງແທ້ຈິງ

### ບົດຮຽນ

ຄຳນຳ:
ສິດຍາພິບານຄົນນື່ງປ່າວປະກາດຢູ່ແຖບຫມູ່ບ້ານທີ່ມີໂຮງເລື່ອຍໄມ້. ຄົນງານໃນເຂດນັ້ນກໍທຳງານຕັດໄມ້ເກືອບທຸກຄົນ ເມື່ອຕັດໄມ້ແລ້ວກໍລ່ອງນ້ຳລົງໄປຫາໂຮງເລື່ອຍ. ລາວຮູ້ວ່າມີການລັກໄມ້ກັນເວລາລ່ອງລົງມາ, ແລະຍັງຮູ້ອີກວ່າຜູ້ທີ່ມັກລັກໄມ້ຂອງຄົນອື່ນນັ້ນກໍແມ່ນຄຣິສຕຽນດ້ວຍ. ຂ່າວກໍເລົ່າລືຈົນດັງໄປຫມົດໃນແຖບນັ້ນ. ສິດຍາພິບານກໍຊອກຫາຫົວຂໍ້ເທດເພື່ອໃຫ້ຄົນຮູ້ສຶກຕົວ "ຢາກໃຫ້ຄົນອື່ນກະທຳຢ່າງໃດກັບເຮົາ ຈົ່ງກະທຳແກ່ຄົນອື່ນຢ່າງນັ້ນ" ເມື່ອເທສນາສິ້ນສຸດລົງຫມົດໂບດກໍກ່າວວ່າ "ອາແມນ" ແຕ່ການລັກໄມ້ຍັງສືບຕໍ່ມີຢູ່. ອາທິດຕໍ່ມາ ອາຈານກໍຫາຫົວຂໍ້ເທດທີ່ຄັກກວ່າເກົ່າ "ຢ່າລັກຂອງຄົນອື່ນ" ເມື່ອເທສນາສິ້ນສຸດລົງອີກຫມົດທຸກຄົນກໍບອກວ່າ "ສັນເສີນພຣະເຈົ້າ" ແຕ່ການລັກໄມ້ກໍຍັງມີຕໍ່ໄປ. ອາຈານກໍໃຈຮ້າຍຫລາຍ ອາທິດຕໍ່ມາລາວເທສນາອີກ "ຢ່າລັກໄມ້ຂອງຄົນອື່ນ" ເມື່ອລາວກຳລັງເທສນາຢູ່ ທີ່ປະຊຸມກໍຢຸດລາວ, ຫາວ່າລາວເສືອກເຂົ້າໄປຫຍຸ້ງກ່ຽວໃນເຣື່ອງຂອງຄົນອື່ນ, ແລ້ວກໍໄລ່ລາວອອກ ໃນເວລານັ້ນເລີຍ.

ໂປໂລເອງເພິ່ນກໍບໍ່ຢາກສອດເຣື່ອງຂອງຄົນອື່ນດອກ, ແຕ່ເພິ່ນເປັນຫ່ວງຄົນທີ່ຄວາມບາບມັນທຳລາຍຊີວິດຄຣິສຕຽນ, ມັນທຳລາຍການເປັນພະຍານຂອງຄຣິສຕຽນ ເພິ່ນຈິ່ງໄດ້ຕັກເຕືອນ ວ່າໃຫ້ມີຄວາມເຊື່ອຢ່າງແທ້ຈິງ.

ພຣະຄຣິດເຮັດຫຍັງໃຫ້ແຕກຕ່າງ (4:17-24)
ໃນບົດທີ 4 ຂໍ້ 17:24 ຖ້າຫາກຈະຣິຍະທັມຂອງມະນຸດຫາກວັດແທກໄດ້ ເຫມືອນກັບບັນຊີການເງິນ ລາຍຮັບລາຍຈ່າຍແຕ່ລະຫ້ອງ ຄົງຈະມີເຄື່ອງຫມາຍບອກໄວ້ແຕກຕ່າງກັນ. ໂປໂລເພິ່ນກໍອາດຈະຫມາຍແຕ່ລະຫ້ອງແຕກຕ່າງກັນຢ່າງນີ້ "ມະນຸດເກົ່າ" (4:22), "ຄົນຕ່າງຊາດ" (4:17), "ວິຖີຊີວິດເກົ່າ" (4:22), "ຜູ້ບໍ່ເຊື່ອຟັງ" (5:6) ກົງກັນຂ້າມກັບຫ້ອງ

ເຫລົ່ານີ້ກໍຈະມີ "ມະນຸດໃຫມ່" (4:24) "ແບບຢ່າງພຣະເຈົ້າ" (5:1) "ໄພ່ພົນຂອງພຣະເຈົ້າ" (5:3) ຫລືວ່າ "ຝ່າຍຄວາມສວ່າງ" (5:8). ໃນຂໍ້ 20 ໄດ້ເນັ້ນຫນັກໃສ່ຄໍາວ່າ "ທ່ານ" ແມ່ນເພື່ອຈະເນັ້ນໃຫ້ເຫັນວ່າທ່ານໄດ້ກົງກັນຂ້າມກັບ "ເຂົາ" ໃນຂໍ້ທີ 18 ແລະ19. "ເຂົາ" ແລະ "ທ່ານ" ຢູ່ຄົນລະຫ້ອງ ຄົນລະແຖວ, ໂປໂລເຊື່ອວ່າສອງລະດັບນີ້ ແມ່ນແຕກຕ່າງກັນຢ່າງຂາດຂັ້ນ ຄື ຄຣິສຕຽນ ແລະ ບໍ່ແມ່ນຄຣິສຕຽນ.

ໂປໂລກ່າວວ່າ "ຈົ່ງຖອດຖິ້ມສະພາບມະນຸດເກົ່າ" (4:22) ຊຶ່ງຫມາຍຄວາມວ່າ ມະນຸດເກົ່າທີ່ຍັງບໍ່ທັນໄດ້ຮັບເຊື່ອແລະກໍຍັງເປັນຊີວິດແບບຄົນຕ່າງຊາດ. ເພິ່ນເຕືອນຄຣິສຕຽນເມືອງເອເຟໂຊ ໃນ 4:17-24 ວ່າມັນຄືແນວໃດແດ່ຄວາມຄິດທີ່ໄຮ້ປໂຍດ ຈົ່ງເອົາອອກ, ດໍາເນີນຊີວິດໃນຄວາມມືດ ຈົ່ງເອົາອອກ, ດໍາເນີນຊີວິດແບບບໍ່ມີພຣະເຈົ້າຈົ່ງເອົາອອກ (ຈິດວິນຍານຕາຍ, ຂາດຈາກພຣະເຈົ້າ, ບໍ່ມີຄວາມຫວັງໃນຊີວິດຂ້າງຫນ້າ, ໃຈໂງ່, ໃຈແຂງກະດ້າງ, ບໍ່ຮູ້ສຶກຢ້ານບາບ, ບໍ່ຮຽນຮູ້......)

ຂໍ້ 20 ໂປໂລຍັງທົບທວນຄວາມຮູ້ສຶກຂອງທ່ານວ່າ ຖ້າແມ່ນວ່າທ່ານໄດ້ຍິນ ແລະໄດ້ຮັບຄໍາສັ່ງສອນຕາມຄວາມຈິງໃນພຣະເຢຊູແລ້ວ ກໍຈົ່ງຖອດຖິ້ມສະພາບຊີວິດເກົ່າ ທີ່ຄຽງຄູ່ກັບການດໍາເນີນຊີວິດເກົ່າ ທີ່ກໍາລັງຈະເສື່ອມສູນນັ້ນເສັຽ. ໂປໂລໃຊ້ຄໍາວ່າ "ຖອດ" ກໍຫມາຍຄວາມວ່າໃຫ້ເອົາອອກ, ຖອດອອກ ແລ້ວກໍບໍ່ໃຫ້ຮັກສາໄວ້, ໃຫ້ເອົາຖິ້ມ ເພາະມັນຈະພາໃຫ້ເຮົາເສື່ອມເສັຽ. ຂໍ້ 23 ໂປໂລກ່າວວ່າ "ຈົ່ງໃຫ້ວິນຍານຈິດຂອງທ່ານຖືກຕັ້ງຂຶ້ນໃຫມ່" ແລະຂໍ້ 24 ຍັງໄດ້ຍໍ້າອີກ ເຖິງການສວມສະພາບມະນຸດໃຫມ່. (4:24).

## <u>ເຮັດຈັ່ງຊີ້, ບໍ່ແມ່ນຈັ່ງຊັ້ນ (4:25--5:20)</u>

ໂປໂລໄດ້ກ່າວປໂຍກທີ່ຍືດຍາວ ກ່ຽວກັບຊີວິດສອງຢ່າງ ຄືຊີວິດໃຫມ່ແລະຊີວິດເກົ່າ ແລະກໍໄດ້ຫນູນໃຈໃຫ້ຄຣິສຕຽນສ້າງຄວາມດີ ເພື່ອເອົາຊະນະຄວາມຊົ່ວຮ້າຍ, ສໍາແດງຄວາມແຕກຕ່າງ ໃຫ້ຈະແຈ້ງ. ຄຣິສຕຽນ ບໍ່ແມ່ນເວົ້າລ້າງແຕ່ຕ້ອງເຮັດດ້ວຍ. 6 ຢ່າງທີ່ພວກເຮົາຄວນຈະເດີນຄື:

### <u>(1)ເດີນດ້ວຍຄວາມສັດຊື່, ບໍ່ແມ່ນດ້ວຍຄວາມຫລອກລວງ (4:25)</u>

ພວກເຮົາອາດຈະຄິດເຖິງ ຊາຄາຣີຢາ 8:16 ໃນຄໍາເຕືອນໃຫ້ເວົ້າຄວາມຈິງ. ໂປໂລກໍຍັງມີເປົ້າຫມາຍເຫມືອນກັນທີ່ວ່າ ຄວາມບໍ່ຈິງນັ້ນສົມຄວນທີ່ຈະໃຫ້ອອກໄປຈາກຊີວິດຂອງພວກເຮົາ, ແລະໃຫ້ພ້ອມກັນ ມາປູກສ້າງຊີວິດຄຣິສຕຽນພ້ອມກັນ ເພາະວ່າພວກເຮົາມີຄວາມສໍາພັນຊຶ່ງກັນແລະກັນ. ມີເຣື່ອງເກົ່າໆເລົ່າມາ ວ່າ: ຖ້າຕາເຫັນສັດຕຣູ ຕາຈະບໍ່ຕົວະຕີນ ໃຫ້ເດີນໄປຫາຄວາມພິນາດ. ແຕ່ຕາຕ້ອງເຕືອນພັຍທັນທີ ເພື່ອຕີນ ແລະ ທຸກໆສ່ວນຈະບໍ່ມີບັນຫາ.

### <u>(2) ເດີນດ້ວຍການກໍ່ສ້າງ, ບໍ່ແມ່ນດ້ວຍການທໍາລາຍ (4:26-30)</u>

ເພັງສັລເສີນ ບົດ 4:4 ກ່າວວ່າ "ຈະຮ້າຍກໍຮ້າຍໄດ້ ແຕ່ຢ່າກະທໍາບາບ ຈົ່ງຄຶດໃນໃຈ ນອນຢູ່ເທິງຕຽງແລະງຽບຢູ່" ໂປໂລກໍກ່າວເຖິງຄວາມໂກດຮ້າຍ ແຕ່ຢ່າທໍາບາບເຫມືອນກັນ. ຄຣິສຕຽນ ບໍ່ໄດ້ບອກວ່າ ບໍ່ໃຫ້ໂກດຮ້າຍ ແຕ່ໃຫ້ການໂກດຮ້າຍນັ້ນເປັນການກໍ່ສ້າງ ແລະ ຄວບຄຸມໃຫ້ໄດ້. ຖ້າຫາກການໂກດຮ້າຍເຮັດໃຫ້ເສັຽຄຸນນະທັມ ສິ່ງນັ້ນມັນກໍຈະນໍາໄປສູ່ການເຫັນແກ່ຕົວ ແລະ ກໍຈະເປັນໂອກາດໃຫ້ແກ່ ຊາຕານທີ່ຈອບຄອຍ. ຂໍ້ 27 ໄດ້ເຕືອນເຮົາວ່າ "ຢ່າປ່ອຍໂອກາດໃຫ້ມານ" ຢ່າລືມວ່າມານຈະເຮັດຫຍັງໃຫ້ຄຣິສຕຽນບໍ່ໄດ້ຢ່າງເດັດ ຖ້າພວກເຮົາຫາກບໍ່ປ່ອຍໂອກາດໃຫ້ກັບມັນ.

ຖ້າເຮົາຫາກສາມາດຄວບຄຸມການໂກດຮ້າຍແລ້ວ, ຄວາມສັດຊື່ກໍຍັງເປັນການຊ່ວຍໃນການກໍ່ສ້າງ. ສິ່ງນີ້ຂັດກັບການ ຂີ້ລັກຢ່າງຂາດຂັ້ນ. (4:28) ພວກເຮົາສາມາດອອກແຮງງານເພື່ອຈະໄດ້ເງິນມາ ແລະຊ່ວຍເຫລືອຄົນອື່ນຕໍ່ໄປ. ບໍ່ ແມ່ນຈະໄປຊອກຫາລັກເລັກຂໂມຍນ້ອຍຈາກຂອງຄົນອື່ນ. 1 ເທຊະໂລນິກ 4:11; 2 ເທຊະໂລນິກ 4:13. ຄໍາເວົ້າຂອງ ເຮົາ (ກໍຄື ເງິນຄໍາທີ່ເຮົາຫາມາໄດ້) ຄວນຈະເປັນສິ່ງທີ່ກໍ່ສ້າງຂຶ້ນ, ບໍ່ແມ່ນມ້າງເພ. (4:29) ນັກເທດລົ້ນທອງຄົນນຶ່ງ ໃນສັຕວັດທີ 4, ກ່າວວ່າ ຕ້ອງເອົາຄໍາອະທິບາຍຂອງໂປໂລໃນບ່ອນນີ້ ໄປປະກອບກັບ ຢາໂກໂບ 3: 1-12.

ການທໍາລາຍຕ່າງໆ ບໍ່ວ່າຈະເປັນການທໍາລາຍປະເພດໃດກໍແລ້ວແຕ່, ເປັນສິ່ງທີ່ເຮັດໃຫ້ພຣະວິນຍານບໍຣິສຸດເສັຽນໍ້າ ພຣະທັຍຢ່າງຫລວງຫລາຍ. (4:30) ບາງເທື່ອທ່ານອາດຈະບໍ່ເຫັນຄວາມສໍາຄັນໃນການເຮັດໃຫ້ພຣະວິນຍານຊົງເສັຽ ພຣະທັຍ. ຈົ່ງຮູ້ເຖີດວ່າທ່ານໄດ້ຖືກປະທັບຕານັ້ນ ກໍແມ່ນໂດຍພຣະວິນຍານນັ້ນເອງ.

<u>(3)ເດີນດ້ວຍຄວາມເມດຕາ, ບໍ່ແມ່ນດ້ວຍຄວາມໂຫດຮ້າຍ (4:31-32)</u>
ພວກເຮົາມີບັນຫາຫລາຍໃນຄອບຄົວຄຣິສຕຽນ ກ່ຽວກັບເຣື່ອງນີ້. ທັ້ງນີ້ກໍຍ້ອນວ່າບາງຄົນໃນພວກເຮົາ ບໍ່ເຫັນຄວາມ ສໍາຄັນຂອງຄໍາວ່າ ເມດຕາກະຣຸນາ. ພວກເຮົາອາດຈະທ່ອງຈໍາ ຂໍ້ພຣະຄັມພີນີ້ໄດ້ກັບປາກ (ຂໍ້ 32) "ຈົ່ງມີໃຈເມດຕາ ມີໃຈເອັນດູກັນ, ແລະອະພັຍໂທດໃຫ້ກັນ ເຫມືອນດັ່ງພຣະເຈົ້າໄດ້ຊົງໂຜດອະພັຍໂທດໃຫ້ແກ່ພວກທ່ານໃນອົງພຣະຄຣິດ ນັ້ນ" ແຕ່ຫນ້າເສັຽໃຈຫລາຍຄົນແບກພຣະຄັມພີ ທ່ອງຈໍາຂໍ້ພຣະຄັມພີ ແຕ່ບໍ່ຍອມໃຫ້ພຣະຄັມພີມີຄວາມຫມາຍເລີຍ. ເຂົາຊໍ້າພັດຫວ່ານສິ່ງກົງກັນຂ້າມຄື: ຄວາມຂົມຂື່ນ, ຄວາມເສື່ອມຊາມ, ຄວາມໂກດຮ້າຍ, ຄວາມອຶກທຶກ, ຄວາມຫມິ່ນ ປມາດ, ຄວາມຈອງຮ້າຍ, ຄວາມສຽດສີ, ຄວາມຢ້ານລີ່ນ ຢ້ານເຫລືອ (4:31) ບາງເທື່ອພວກເຮົາອາດຈະລືມຄໍາເວົ້າ ຂອງພຣະເຈົ້າໃນຕອນນີ້. ຂໍໃຫ້ພວກເຮົາ ສ້າງຄວາມເມດຕາ ກະຣຸນາເຖີດ.

<u>(4) ເດີນດ້ວຍຄວາມຮັກ, ບໍ່ແມ່ນດ້ວຍການລາມົກ (5:1-7)</u>
ອາກາເປ (ພາສາກຣີກ) ແປວ່າຄວາມຮັກ. ບໍ່ແມ່ນຮັກດ້ວຍຄວາມຮູ້ສຶກ ຫລືມີອັນໃດອັນນຶ່ງມາກະຕຸ້ນໃຫ້ຮັກ, ແຕ່ ເປັນຄວາມຮັກທີ່ພິເສດ, ບໍ່ເຫັນແກ່ຕົວ, ສແວງຫາການທໍາດີໃຫ້ແກ່ຄົນອື່ນ, ເຮັດສິ່ງທີ່ດີທີ່ສຸດໃຫ້ຄົນອື່ນ. ທ່ານຄວນ ເຮັດຢ່າງນີ້ ເຖິງແມ່ນວ່າເຂົາຈະເປັນສັດຕູ ຫລື ເປັນຄົນທີ່ເຮົາບໍ່ພໍໃຈກໍຕາມ. ອາກາເປ ແມ່ນການມອບຖວາຍຊີວິດ ເພື່ອຄົນອື່ນ. ພຣະຄຣິດຮັກເຮົາຫລາຍສໍ່າໃດ ພຣະອົງສແວງຫາສິ່ງທີ່ດີທີ່ສຸດເພື່ອພວກເຮົາ, ເຖິງແມ່ນເຮົາເປັນຄົນ ບາບ ພຣະອົງກໍຍັງຮັກ. (ຣມ 5:8). ຖ້າພວກເຮົາໄດ້ຮັບ ອາກາເປ ຈາກພຣະເຈົ້າ ເຮົາກໍຄວນເປັນອາກາເປ ເພື່ອຄົນ ອື່ນດ້ວຍ.

ຂໍ້ 3 ຫາຂໍ້ 7 ແມ່ນກ່າວເຖິງການຫລິ້ນຊູ້, ການຊົ່ວຮ້າຍ, ການໂລພະຕັນຫາ. ຂໍຢ່າໃຫ້ເກີດມາໃນພວກທ່ານ, ເຫມືອນ ເກີດກັບພວກໄຫວ້ພຣະທຽມ.
ຂໍ້ 4 ກ່າວວ່າ ການກ່າວຄໍາຫຽາບຊ້າ, ການເວົ້າບໍ່ມີແກ່ນສານ, ການເວົ້າຕລົກຫລິ້ນແບບລາມົກ ຊຶ່ງບໍ່ເປັນການສົມ ຄວນ. ເພາະສິ່ງທັງຫມົດເຫລົ່ານີ້ແມ່ນການທີ່ຈະນໍາພາທ່ານໃຫ້ຫ່າງໄກຈາກແຜ່ນດິນຂອງພຣະເຈົ້າ.

<u>(5) ເດີນໃນຄວາມສວ່າງ, ບໍ່ແມ່ນໃນຄວາມມືດ (5:8-14)</u>
ໂປໂລໄດ້ອະທິບາຍເຖິງຄວາມແຕກຕ່າງລະຫວ່າງຄົນທີ່ມີຄວາມເຊື່ອ ແລະຄົນທີ່ບໍ່ມີຄວາມເຊື່ອ. ລາວຍົກຮູບພາບ ຂອງຊີວິດຂຶ້ນມາວ່າ ຖ້າປາສຈາກພຣະຄຣິດແລ້ວ ກໍແມ່ນຢູ່ໃນຄວາມມືດ. ພຣະເຢຊູເປັນແສງສວ່າງ ເມື່ອທ່ານໄດ້

ຮັບແສງສວ່າງຈາກພຣະອົງແລ້ວທ່ານກໍຄວນຈະມີແສງສວ່າງ. ພຣະເຢຊູຊົງກ່າວວ່າ " ພວກທ່ານຄືແສງສວ່າງຂອງໂລກ" (ມທ 5:14) . ພວກເຮົາເປັນແສງສວ່າງ ພວກເຮົາກໍຄວນຈະຍ່າງ ເຫມືອນລູກແຫ່ງຄວາມສວ່າງ, ເກີດຫມາກຂອງຄວາມສວ່າງ, ເກັບກ່ຽວຜົນເຫມືອນຢ່າງຢູ່ໃນຄວາມສວ່າງ. ຜົນຂອງຄວາມສວ່າງຄື: "ຄວາມດີ, ຄວາມຊອບທັມ ແລະຄວາມຈິງ" (ອຟ 5:9)

ຂໍ້ 14 ຊຶ່ງຢູ່ໃນວົງເລັບນັ້ນ "ຄົນທີ່ນອນຫລັບເອີຍ, ຈົ່ງຕື່ນຂຶ້ນ ຈົ່ງຟື້ນຂຶ້ນມາຈາກຄວາມຕາຍ ແລະພຣະຄຣິດຈະສ່ອງສວ່າງໃສ່ເຈົ້າ." ເບິ່ງຢ່າງນີ່ງກໍຄື ນຳມາຈາກພຣະຄັມພີເດີມ ແຕ່ວ່າບໍ່ແມ່ນ. ບາງຄົນເວົ້າວ່າ ມາຈາກບົດເພັງ ບາງບົດ ທີ່ຮ້ອງໃນສມັຍເລີ້ມຕົ້ນມີຄຣິສຕະຈັກ.

<u>(6) ເດີນຢ່າງຄົນມີປັນຍາ, ຢ່າເດີນເຫມືອນຄົນໂງ່ (5:15-20)</u>

ໂປໂລໃຊ້ຄຳວ່າ "ດຳເນີນ" ຫມາຍຄວາມວ່າການໃຊ້ຊີວິດປະຈຳວັນ. ລາວຍັງໄດ້ໄຈ້ແຍກເຖິງຄວາມຮູ້ຂອງໂລກ ແລະຄວາມຮູ້ທີ່ມາຈາກພຣະເຈົ້າ. ລາວເວົ້າແຈ້ງວ່າ ພຣະຄຣິດເປັນຄວາມຮູ້ທີ່ມາຈາກພຣະເຈົ້າ. ຄວາມໂງ່ຂອງພຣະເຈົ້າຍັງສລາດກວ່າຄົນທີ່ສລາດທີ່ສຸດໃນໂລກ. (1ໂກຣິນໂທ 1:20-25) ດັ່ງນັ້ນຄວາມຮູ້ທີ່ພວກເຮົາກ່າວນີ້ຈຶ່ງບໍ່ແມ່ນຄວາມຮູ້ທັມດາເຫມືອນໂລກທັງຫລາຍເຂົາມີ.

ທີ່ຈະເດີນຕາມຄວາມຮູ້ນີ້ ເຮົາຕ້ອງເຮັດຫມົດທຸກໂອກາດ ຫມາຍຄວາມວ່າທຸກຈຸດ, ທຸກກະບຽດນີ້ວ ຕ້ອງໃຫ້ມີຄ່າຣາຄາໃນພຣະເຢຊູ. ພວກເຮົາຕ້ອງຍາດເວລາ, ສວຍໂອກາດ ບໍ່ແມ່ນຖ້າໂອກາດອຳນວຍ, ຖ້າເວລາວ່າງ. ຄາວນີ້ເປັນຄາວທີ່ຊົ່ວຮ້າຍ ຜູ້ເຊື່ອທີ່ມີຄວາມຮູ້ຕ້ອງໃຊ້ທຸກໂອກາດ.ຖວາຍຕົວໃຫ້ພຣະເຢຊູ.

ທີ່ຈະເດີນຕາມຄວາມຮູ້ນີ້ ຕ້ອງເຂົ້າໃຈນ້ຳພຣະທັຍຂອງພຣະເຈົ້າ(5:17) ພວກເຮົາຮູ້ນຳກັນແລ້ວວ່າ ພຣະເຈົ້າມີແຜນການ ໃນແຕ່ລະບຸກຄົນ ດັ່ງໃນສາມບົດຜ່ານມາ. ຄວາມຮູ້ພິເສດນີ້ຄືເຮົາໄດ້ຈາກການອະທິຖານ, ການສຶກສາພຣະຄັມພີ, ການປະກອບສ່ວນໃນການນະມັສການ, ແລະປະກອບສ່ວນໃນການສ້າງສັນກັນຕ່າງໆ.

ທີ່ຈະເດີນຕາມຄວາມຮູ້ນີ້ ຕ້ອງເຕັມໄປດ້ວຍພຣະວິນຍານ (5:18-21) ຊຶ່ງເປັນຕົວຢ່າງໃຫ້ພວກທີ່ໂງ່, ໂປໂລກ່າວເຖິງການເມົາເຫລົ້າ ຊຶ່ງກົງກັນຂ້າມກັບພຣະວິນຍານ. ໃນນີ້ກໍເຕືອນໃຫ້ພວກເຮົາຮູ້ວ່າ ເຫລົ້າກໍມີບັນຫາ ມາແຕ່ສມັຍກ່ອນສ້າງຄຣິສຕະຈັກ. ທຸກໆສມັຍ ພຣະຄຳຂອງພຣະເຈົ້າກໍໄດ້ຕໍ່ສູ້ມາຕລອດການ. ຈົ່ງຮ້ອງເພງສັຣເສີນ, ຍ້ອງຍໍພຣະເຈົ້າ ອອກຈາກຈິດໃຈຂອງທ່ານ ແລະບໍ່ວ່າຍາມໃດ ກໍຈົ່ງຂອບພຣະຄຸນພຣະເຈົ້າສຳຫລັບທຸກໆສິ່ງດ້ວຍເຖີ້ນ.

<u>ຄຳຖາມ:</u>

1. ຄຳວ່າ ອາກາເປ ແປວ່າ ຮັກ. ຮັກໃນທີ່ນີ້ ແປວ່າຢ່າງໃດ?

2. ພິຈາຣະນາຄວາມເສື່ອມໂຊມຂອງໂລກນີ້ໃນປັດຈຸບັນ, ແລະ ຄຣິສຕຽນຄວນເຮັດຢ່າງໃດ?

3. ອະທິບາຍຄຸນລັກສະນະຂອງຜູ້ທີ່ເຊື່ອ? ອະທິບາຍຄຸນລັກສະນະຂອງຜູ້ທີ່ບໍ່ເຊື່ອ?

# ບົດຮຽນທີ 12
# ຈະເຮັດໃຫ້ເປັນຄອບຄົວຄຣິສຕຽນຢ່າງໃດ

---

ຂໍ້ພຣະຄັມພີສຳຫລັບບົດຮຽນນີ້: ເອເຟໂຊ 5:21 ຫາ 6:4
ຂໍ້ພຣະຄັມພີສຳຫລັບເບື້ອງຫລັງ: ເອເຟໂຊ 5: 15 ຫາ 6: 9
ຈຸດສຳຄັນຂອງບົດຮຽນນີ້: ໃຊ້ຊີວິດຄຣິສຕຽນດ້ວຍຄວາມເຊື່ອໃນຄອບຄົວ ຮຽກຮ້ອງໃຫ້ເຮົາມີການໂຄຣົບຊຶ່ງກັນແລະກັນ ພາຍໃຕ້ການນຳພາຂອງພຣະຄຣິດ.
ຄຳຖາມເພື່ອການສຳຫລວດ: ແມ່ນຫຍັງຄືຄວາມແຕກຕ່າງ ທີ່ພຣະເຢຊູ ເຮັດໃຫ້ມີ ຄວາມສັມພັນໃຫມ່ໃນຄອບຄົວ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຢາກຊີ້ແນະໃຫ້ເຫັນເສັ້ນທາງ ພາຍໃຕ້ການນຳພາຂອງພຣະຄຣິດແລ້ວ ຄອບຄົວຂອງເຮົາມີຄວາມແຕກຕ່າງ.

## ບົດຮຽນ

ຄຳນຳ:
ໃນປະເທດສະຫະຣັດອະເມຣິກາ ຄອບຄົວເປັນບັນຫາທີ່ອື້ສາວຫລາຍກວ່າຫມູ່. ບໍ່ວ່າຈະຢູ່ໃນໂທຣະທັດ, ຢູ່ໃນຫນ້າຫນັງສືພິມ, ຢູ່ໃນຂ່າວວິທະຍຸ, ຢູ່ໃນຣາຍການສົນທະນາໃນໂທຣະທັດ ສ່ວນຫລາຍແລ້ວແມ່ນກ່ຽວກັບຄອບຄົວ ຍັງບໍ່ພໍທໍ່ນັ້ນ ບັນຫາຍັງຍິ່ງຈະເພີ້ມຂຶ້ນທຸກໆວັນຕໍ່ໄປ. ຄວາມຈິງແລ້ວຄອບຄົວຄົນອະເມຣິກັນບໍ່ໄດ້ແນ່ນອນ. ໃນທົສວັດ ປັດຈຸບັນຄອບຄົວຍິ່ງສໍ່າສ່ອນ, ປ່ອນປົ້ນ, ວອກແວກວົນວຽນ ແລະສັງຄົມກໍປ່ຽນແປງໄປຕາມ. ໃນຕົວເມືອງ, ຕາມຊານເມືອງ ຢູ່ນຳກັນເປັນການທົດລອງ, ຂນາດຂອງຄອບຄົວ, ການບໍ່ໄວ້ໃຈກັນ, ການແຕ່ງງານກ່ອນອາຍຸ, ການມ່ວນຊື່ນທັງຫມົດນີ້ລວມເຂົ້າກັນແລ້ວກໍເຫັນຄອບຄົວເປັນການຕໍ່າ. ຄອບຄົວທຸກວັນນີ້ ບໍ່ມີການຮັບກັນໃນການປ້ອງກັນ. ພວກເຮົາຮອດບໍ່ຮູ້ຊ້ຳວ່າອັນໃດເປັນຄອບຄົວອັນໃດບໍ່ເປັນ. ບາງຄັ້ງກໍເຫັນຢູ່ກັນຫລາຍຄົນ, ບາງຄັ້ງມີແຕ່ຜູ້ຊາຍ, ບາງຄັ້ງກໍມີແຕ່ຜູ້ຍິງ ຈະແມ່ນຄອບຄົວຫລືບໍ່ ກໍບໍ່ຮູ້.

ພະຍາດທີ່ກ່າວມາຂ້າງເທິງນີ້ ທຳລາຍຫລາຍລ້ານຄອບຄົວ. ຄອບຄົວຕ້ອງການໆປິ່ນປົວ, ຄອບຄົວຕ້ອງການໆເອົາໃຈໃສ່ ພວກນັກຂຽນຕ່າງໆກໍພາກັນຂຽນປຶ້ມຂຶ້ນເພື່ອຊ່ວຍເຫລືອ ແຕ່ກໍຍັງມີບັນຫລາຍຢູ່ຄືເກົ່າ. ມີທາງດຽວທີ່ຈະປິ່ນປົວໄດ້ ຄື ພຣະຄຳຂອງພຣະເຈົ້າ. ຜູ້ສ້າງມະນຸດເທົ່ານັ້ນຈຶ່ງຈະຮູ້ຈັກວິທີປິ່ນປົວມະນຸດໄດ້ດີ. ພຣະເຈົ້າເປັນຜູ້ສ້າງຄອບຄົວ ໂປໂລຈຶ່ງໄດ້ຂຽນໄວ້ໃນເອເຟໂຊ 5:21 ຫາ 6:4.

ຜົວ ແລະ ເມັຽ (ອຟ 5:22-23)
ຜູ້ໃຫ້ຄຳປຶກສາຝ່າຍຄອບຄົວອະທິບາຍວ່າ ການແຕ່ງງານບໍ່ໄດ້ເຕັມລົ້ນໄປດ້ວຍຄວາມຫວານຊື່ນຕລອດໄປ, ແຕ່ມັນເປັນຄວາມຫວ່າງເປົ່າ ທີ່ເຮົາພະຍາຍາມຖົມບໍ່ຮູ້ເຕັມຈັກເທື່ອ. ໂປໂລໄດ້ກ່າວເຖິງສ່ວນປະກອບທີ່ຈະເຮັດໃຫ້ການແຕ່ງ

ງານໄປໄດ້ນັ້ນຄື: ການຍອມຟັງກັນ, ຄວາມຮັກ, ການເອົາໃຈ້, ເປັນອັນນຶ່ງອັນດຽວກັນ, ແລະໂຄຣົບຊຶ່ງກັນແລະກັນ. ລາວໄດ້ຂຽນຄຳຕັກເຕືອນໃນຕອນນີ້ ໂດຍສະເພາະແມ່ນຄວາມສັມພັນຣະຫວ່າງພຣະຄຣິດ ແລະຄຣິສຕະຈັກຂອງພຣະອົງເອງ. ການພົວພັນການແຕ່ງງານ ແມ່ນການເຢືອງກະຈົກ ເຖິງຄວາມສັມພັນຝ່າຍຈິດວິນຍານ. ການພົວພັນ ຝ່າຍຈິດວິນຍານຣະຫວ່າງພຣະຄຣິດ ແລະ ຄຣິສຕະຈັກຂອງພຣະອົງນັ້ນ ແມ່ນຕົວຢ່າງທີ່ດີທີ່ສຸດໃນການພົວພັນການແຕ່ງງານ.

**1.** ຜູ້ເປັນເມັຽ: ຜູ້ເປັນເມັຽ "ຕ້ອງຍອມຢູ່ໃຕ້ບັງຄັບ" ຂອງສາມີ (5:22). ຖ້າຈະເວົ້າພາສາລາວຂອງເຮົາແລ້ວ ການຢູ່ໃຕ້ບັງຄັບນັ້ນ ເໝືອນກັບວ່າເວົ້າກັບທະຫານ. ໃນນີ້ໂປໂລອາດຈະຕີຄວາມໝາຍໄປວ່າ ຈົ່ງຍອມຟັງ, ຈົ່ງໃຫ້ກຽດສາມີ (5:21)

ຖ້າຈະເວົ້າແລ້ວ ການໃຫ້ກຽດນັ້ນ ບໍ່ແມ່ນແຕ່ເມັຽ ຈະໃຫ້ກຽດຜົວເທົ່ານັ້ນ ຜົວກໍຄວນໃຫ້ກຽດ ແກ່ເມັຽເໝືອນກັນ. ການໃຫ້ກຽດຜົວນັ້ນ, ບໍ່ແມ່ນ ຈະບັງຄັບໃຫ້ລາວເຮັດ ແຕ່ລາວຕ້ອງ ເຮັດດ້ວຍຄວາມສມັກໃຈ ໃນຖານະ ທີ່ລາວເປັນຄຣິສຕຽນ. ລາວຕ້ອງເຮັດ ແລະຍອມຟັງ ແຕ່ຜົວຂອງລາວຄົນດຽວເທົ່ານັ້ນ.

ເຫດຜົນທີ່ລາວຈຳເປັນຕ້ອງເຮັດດັ່ງນັ້ນ ກໍເພາະວ່າສາມີເປັນສີສະຂອງເມັຽ ເໝືອນພຣະຄຣິດຊົງເປັນສີສະຂອງຄຣິສຕະຈັກ.(5:23) ໂປໂລຍັງເວົ້າຕໍ່ໄປອີກວ່າ ພຣະຄຣິດເປັນປະມຸກຂອງຄຣິສຕະຈັກ ລະຄຣິສຕະຈັກກໍເປັນພຣະກາຍຂອງພຣະອົງ ສາມີກໍຕ້ອງຮັກ, ບຳລຸງທະນຸຖນອມ, ປົກປ້ອງ ແລະມອບຕົວເອງໃຫ້ແກ່ການແຕ່ງງານນັ້ນ. ນີ້ກໍຈະເຫັນໄດ້ວ່າສາມີແລະພັຣຍາກໍສເມີພາບກັນ ແລະຈົ່ງຍອມຟັງຊຶ່ງກັນແລະກັນ.

2. ຜູ້ເປັນຜົວ: ໂປໂລເຕືອນຜົວອີກວ່າ ລາວຕ້ອງຮັກພັຣຍາ ເໝືອນພຣະຄຣິດຮັກຄຣິສຕະຈັກ ແລະຕ້ອງສລະຕົນເອງເພື່ອຄຣິສຕະຈັກນັ້ນ. (5:25) ຄວາມຮັກທີ່ວ່ານີ້ ຄືສາມີຕ້ອງຟັງຄວາມປາຖນາ, ຄວາມຄິດ ຈົນເຖິງກັບຕ້ອງສລະຊີວິດຂອງຕົນເອງເພື່ອພັຣຍາ.

ຖ້າເປັນດັ່ງນີ້ ສາມີກໍມີພາຣະໜ້າທີ່ໜັກກວ່າພັຣຍາຫລາຍເທົ່າ. ອີກສິ່ງນຶ່ງທີ່ພວກເຮົາເຫັນກໍຄື ສາມີຕ້ອງໄດ້ປະລະພໍ່ແມ່ຂອງຕົນໄປສັມພັນຢູ່ກັບພັຣຍາ. ເຂົາທັງສອງຈະເປັນກາຍອັນດຽວກັນ ນີ້ລະຄືພຣະເຈົ້າມີແຜນການໃຫ້ເປັນຜົວເມັຽກັນ. ສິ່ງນີ້ ແມ່ນກົດເກນທີ່ເໜືອທຸກສິ່ງ ເໜືອການຢ່າຮ້າງ ເໜືອການຫລິ້ນຊູ້ ເໜືອການມີຫລາຍຜົວຫລາຍເມັຽ ແລະເໜືອການສັມພັນກັບເພດດຽວກັນ.

ຖ້າຈະເວົ້າລວມແລ້ວ ການແຕ່ງງານແບບຄຣິສຕຽນຄວນຈະມາສລຸບທີ່ຂໍ້ 33, "ພວກທ່ານຈົ່ງຮັກພັຣຍາຂອງຕົນເໝືອນຮັກຕົນເອງ ແລະພັຣຍາກໍຈົ່ງຢຳເກງສາມີຂອງຕົນ." ຄອບຄົວຄຣິສຕຽນກໍຄວນແຕກຕ່າງຈາກຄອບຄົວທີ່ບໍ່ເປັນຄຣິສຕຽນ ເພາະວ່າຖືກສ້າງຂຶ້ນມາແຕກຕ່າງກັນ (ຄຣິສຕຽນແມ່ນພຣະເຈົ້າເປັນພື້ນຖານໃຫ້, ພວກທີ່ບໍ່ເຊື່ອອາດຈະມາຈາກພື້ນຖານອັນອື່ນ)

3. ພຣະຄຣິດ ແລະ ຄຣິສຕະຈັກ: ຂໍ້ທີ 27. ພຣະຄຣິດເປັນເຈົ້າບ່າວ ແລະຄຣິສຕະຈັກເປັນເຈົ້າສາວ. ພຣະອົງຢາກຈະຮັບຄຣິສຕະຈັກ ໃຫ້ເປັນຂອງພຣະອົງເອງ. ເປັນການດີທີ່ສຸດທີ່ຄຣິສຕະຈັກໄດ້ຮັບການປ່ຽນແປງແລະຈະໄດ້ກາຍເປັນ

ເຈົ້າສາວທີ່ພຣະອົງຊົງຮັກ. ພຣະອົງສລະຊີວິດເພື່ອເຈົ້າສາວນັ້ນ. ພຣະອົງຊົງຊໍາຣະລ້າງເຂົາ (ພາສາກຣີກ ແມ່ນ ກາ ຕາຣີຊາ) ການຊໍາຣະລ້າງນີ້ກໍເຫມືອນລ້າງດ້ວຍນໍ້າ ແຕ່ບໍ່ແມ່ນລ້າງທາງກາຍ. ພຣະເຢຊູໃຊ້ພຣະຄໍາຂອງພຣະອົງ ລ້າງຈຸດດ່າງພອຍຫລື ຈຸດຫນັງຫ່ຽວແຫ້ງ.

ພວກເຮົາເປັນພາກສ່ວນຂອງກາຍນັ້ນ(ຄຣິສຕະຈັກ) ເຮົາບໍ່ຄວນຖືເບົາ, ບໍ່ແມ່ນວ່າຢາກໄປກໍໄປ, ບໍ່ຢາກໄປກໍບໍ່ໄປພຣະ ເຢຊູຮັກພວກເຮົາຫລາຍແທ້ໆ.

<u>ເດັກ ແລະ ພໍ່ແມ່ (ອຟ 6:1-4)</u>

ເດັກໆທັງຫລາຍ ໂປໂລກໍໄດ້ສັ່ງສອນໄວ້ເຫມືອນກັນ ກ່ຽວກັບການດໍາເນີນຊີວິດຕາມແບບຂອງພຣະເຈົ້າ. ລາວເວົ້າ ໂດຍກົງກັບພວກເຂົາເຈົ້າວ່າ ສິ່ງທໍາອິດທີ່ພວກເຂົາຈະເຮັດນັ້ນກໍຄື ໂຄຣົບນັບຖືພໍ່ແມ່. ເປັນຫຍັງຈຶ່ງນັບຖືພໍ່ແມ່ ? ຄໍາຕອບກໍຄື ເພາະມັນເປັນສິ່ງທີ່ຖືກຕ້ອງ (6:1) . ໃນໂກໂລຊາຍ 3:20, ໂປໂລກ່າວວ່າ ການນັບຖືພໍ່ແມ່ນັ້ນເປັນທີ່ ພໍພຣະທັຍພຣະເຈົ້າ. ໃນສມັຍຂອງເພິ່ນ, ການນັບຖືພໍ່ແມ່ເປັນສິ່ງຈໍາເປັນທີ່ສຸດ ດັ່ງນັ້ນພວກເຮົາຈຶ່ງເຫັນ ຢູ່ໃນບັນຊີ ຂອງຜູ້ບໍ່ເຊື່ອຟັງທັງຫລາຍຄື ໃນໂຣມ 1:29-31ແລະ ໃນ 2 ຕີໂມທຽວ 3:2

ສຸພາສິດລາວ ບ້ານເຮົາກໍຍັງກ່າວກັນໄວ້ຢ່າງຈະແຈ້ງວ່າ: "ຜູ້ໃດບໍ່ຟັງຄວາມພໍ່ແມ່ ຜີແກ່ເຂົ້າຫມັ້ນນາຣົກ" ຜູ້ທີ່ບໍ່ມີພຣະ ເຈົ້າ ຜີມັນກໍຈະແກ່ເຂົ້າຫມັ້ນນະຮົກແທ້. ແຕ່ວ່າຖ້າຜູ້ໃດມີພຣະເຈົ້າແລ້ວ ຜີມັນກໍຈະມາໃກ້ບໍ່ໄດ້.

ການຟັງຄວາມກໍຄືການໃຫ້ກຽດພໍ່ແມ່, ໃນພຣະບັນຍັດສິບປະການກໍໄດ້ກ່າວໄວ້ເຫມືອນກັນ(ອພຍ 20:12) ການໃຫ້ ກຽດ ການນັບຖື ແມ່ນສ່ວນທາງໃນ ທີ່ສະແດງອອກມາຂ້າງນອກ ສ່ວນການສະແດງຂ້າງນອກ ແມ່ນການເຊື່ອຟັງ ພຣະເຈົ້າ. ພຣະເຈົ້າກໍຍັງມີສັນຍາເຫມືອນກັນວ່າ ຖ້າເຈົ້າຫາກເຊື່ອຟັງເພິ່ນ ເຈົ້າຈະຢູ່ເຢັນເປັນສຸກ ມີອາຍຸຍືນຍາວ ຖ້າ ຈະເບິ່ງແລ້ວ ເມື່ອພຣະເຈົ້າມີພຣະປະສົງຢາກໃຫ້ພວກເຮົາກະທໍາສິ່ງໃດ ພຣະອົງກໍຈະມີຂອງຂວັນມອບແກ່ເຮົາຄືນ ແຕ່ບາງຄົນຊໍ້າພັດເຂົ້າໃຈວ່າເປັນຂອງພວກເດັກໆ, ຖ້າຄິດໃຫ້ດີໆ ແລ້ວພວກເຮົາເອງ (ຜູ້ໃຫຍ່) ກໍເປັນລູກຂອງພຣະ ເຈົ້າ ຖ້າພວກເຮົາຫາກຟັງຄວາມ ແລະນັບຖືພຣະອົງ ເຮົາກໍຈະໄດ້ມີອາຍຸຍືນຍາວເຫມືອນກັນ.

ໃນຂໍ້ 4 ຍັງໄດ້ບັນຈຸຄໍາວ່າ ພໍ່ ໃນນີ້ອາດຈະເວົ້າໄດ້ທັງພໍ່ແລະແມ່. ອາດຈະມີ ສາມ ຢ່າງທີ່ໂປໂລປາຖນາຈະກ່າວຄື:

<u>(1) ຢ່າຮົບກວນ:</u>

ຫມາຍຄວາມວ່າ ຢ່າຍຸຍົງ ຫລື ເຍົ້າຍວນ ໄປໃນທາງທີ່ເຮັດໃຫ້ເດັກ ຫມົດກໍາລັງໃຈ. ພໍ່ແມ່ ບາງຄັ້ງ ກໍກະທໍາໄປໂດຍ ບໍ່ຮູ້ວ່າໂຕໄດ້ເຮັດ ເຊັ່ນ ກ່າວວ່າ ເຈົ້າເຮັດອັນນັ້ນບໍ່ໄດ້ດອກ; ເຈົ້າເຮັດອັນນີ້ບໍ່ໄດ້ດອກ ບາງຄັ້ງກໍສົມທຽບໃສ່ອັນນັ້ນອັນ ນີ້, ແລະແລ້ວກໍຝຶກລູກໆໄປໃນທາງທີ່ຜິດ. ພໍ່ຂອງທ່ານ ມາຣ໌ຕິນ ລູເທີ້ ຄືງ ຍັງຍອມວ່າ ເຄີຍເຮັດໃຫ້ລູກເສັຽກໍາລັງໃຈ ໃນການອະທິຖານ. ລາວບອກວ່າ "ລູກອະທິຖານ ຕໍ່ພຣະບິດາບໍ່ໄດ້ດອກ" ສິ່ງນີ້ເຮັດໃຫ້ລາວບໍ່ດີໃຈ ແລະລາວກໍຍັງ ຈໍາໄດ້ຕລອດໄປວ່າລາວໄດ້ເຮັດໃຫ້ລູກເສັຽກໍາລັງໃຈ. ໂປໂລອາດຈະມີປະສົບການ ແຕ່ສມັຍລາວຍັງນ້ອຍໃນເລື່ອງນີ້.

(2) ອົບຮົມດ້ວຍການຕີສອນ

ພໍ່ແມ່ຄວນຈະອົບຮົມ ດ້ວຍການຕີສອນເພື່ອໃຫ້ເປັນຄົນມີລະບຽບ. ການສອນ ຈຳເປັນຕ້ອງມີຂໍ້ບັງຄັບແລະມີການລົງໂທດ. ຖ້າບໍ່ມີການລົງໂທດການສອນກໍຈະບໍ່ມີ ເພາະລູກຈະບໍ່ຮູ້ຈັກວ່າອັນໃດຖືກ ແລະອັນໃດຜິດ. ການລົງໂທດເປັນສິ່ງນຶ່ງທີ່ສອນໃຫ້ເຂົາຮູ້ວ່າ ບໍ່ຄວນເຮັດອີກ. ພໍ່ແມ່ ກໍຄວນເປັນຕົວຢ່າງເຮັດໃນທາງທີ່ຖືກເພື່ອເຂົາຈະໄດ້ຕິດຕາມ.

(3) ເຕືອນສະຕິ

ເຕືອນສະຕິ ກໍຄ້າຍໆກັບການສອນ ຊຶ່ງການສອນກໍແມ່ນ ການແນະແນວທາງໃຫ້ໄປໃນທາງຖືກ, ແລະກໍຢັ້ງຢືນວ່າສິ່ງນັ້ນດີແທ້. ມີຕົວຢ່າງນຶ່ງໃນພຣະຄັມພີ ກ່ຽວເຣື່ອງການລ້ຽງລູກທີ່ດີທີ່ສຸດຄື ຄອບຄົວຂອງຕີໂມທຽວ ໃນ 2 ຕີໂມທຽວ 1:5, 3:14-15. ໃນເວລາຍັງນ້ອຍ ພໍ່ແມ່ ( ພໍ່ຕູ້ ແມ່ຕູ້ດ້ວຍ) ຂອງຕີໂມທຽວບໍ່ເຄີຍເຍົ້າຍວນກວນໃຈລາວໃຫ້ເກີດໂມໂຫໂທໂສເລີຍ ແຕ່ໄດ້ສັ່ງສອນລາວໃຫ້ຮູ້ເສັ້ນທາງຂອງພຣະເຈົ້າ, ແລະເປັນຕົວຢ່າງທີ່ດີ. ລາວໄດ້ຮຽນທີ່ຈະນັບຖືແລະໃຫ້ກຽດພໍ່ແມ່. ໃນສະພາບການນີ້, ກໍເປັນການງ່າຍທີ່ຈະຮັບເອົາພຣະເຢຊູ ແລະຕອບຮັບຄຳຮຽກເອີ້ນຈາກພຣະອົງ. ໂປໂລຍັງເວົ້າອີກວ່າ ຕີໂມທຽວກ້າເປັນຕົວຢ່າງ ເຫມືອນຜູ້ໃຫຍ່.

ທ່ານຜູ້ປະກາດ ອາດຈະມີ ແນວຄິດໄປຫາ ພຣະຄັມພີເດີມ ສເລີຍພຣະບັນຍັດສອງ 6:6-7 " ຈົ່ງໃຫ້ຖ້ອຍ ຄຳທີ່ຂ້າພະເຈົ້າບັນຊາພວກທ່ານໃນວັນນີ້ ຢູ່ໃນໃຈຂອງທ່ານ ແລະພວກທ່ານຈົ່ງອົດສາສອນຖ້ອຍຄຳເຫລົ່ານັ້ນ ແກ່ລູກຫລານຂອງທ່ານ ເມື່ອທ່ານນັ່ງຢູ່ໃນເຮືອນ ຍ່າງຢູ່ຕາມທາງ ແລະນອນລົງ ຫລືລຸກຂຶ້ນ ຈົ່ງເວົ້າຖ້ອຍຄຳນັ້ນ."

ຄຳຖາມ:

1. ເມື່ອທ່ານໄດ້ສີສາຜ່ານມາແລ້ວ, ທ່ານຮູ້ສຶກຢ່າງໃດໃນການເປັນສາມີ ແລະພັຣຍາ? (ພຣະຄັມພີ ເຂົ້າຂ້າງສາມີເກີນໄປໂພດບໍ່ ຫລື ເຂົ້າຂ້າງພັຣຍາໂພດໄປ)

2. ພຣະຄຣິດ ແລະ ຄຣິສຕະຈັກ ປຽບເຫມືອນຫຍັງແດ່?

3. ພຣະຄັມພີສອນໃຫ້ເຮົາເປັນຄົນຢ່າງໃດຢູ່ໃນເຮືອນ?

4. ແມ່ນຫຍັງແດ່ທີ່ເຮົາຄວນຈະປ່ຽນ ໃນຊີວິດອັນເກົ່າແກ່ຂອງເຮົາ?

# ບົດຮຽນທີ 13
## ຈະເປັນຄຣິສຕຽນຢ່າງໃດໃນເມື່ອບໍ່ແມ່ນຂອງງ່າຍ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເອເຟໂຊ 5:21 ຫາ 6:4
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ເອເຟໂຊ 5: 15 ຫາ 6: 9
ຈຸດສຳຄັນຂອງບົດຮຽນນີ້: ໃຊ້ຊີວິດຄຣິສຕຽນດ້ວຍຄວາມເຊື່ອໃນຄອບຄົວຮຽກຮ້ອງໃຫ້ເຮົາມີການໂຄ ຣົບຊຶ່ງກັນແລະກັນ ພາຍໃຕ້ການນຳພາຂອງພຣະຄຣິດ.
ຄຳຖາມເພື່ອການສຳຫລວດ: ແມ່ນຫຍັງຄືຄວາມແຕກຕ່າງ ທີ່ພຣະເຢຊູ ເຮັດໃຫ້ມີ ຄວາມສັມພັນໃຫມ່ ໃນຄອບຄົວ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຢາກຊີ້ແນະໃຫ້ເຫັນເສັ້ນທາງ ພາຍໃຕ້ການນຳພາຂອງພຣະຄຣິດວ່າຄອບ ຄົວຂອງພວກເຮົາ ມີຄວາມແຕກຕ່າງໃນຄວາມສັມພັນ.

## ບົດຮຽນ

### ຄຳນຳ

ຄຳວ່າ "ສຸດທ້າຍນີ້" ໃນເອເຟໂຊ 6:10 ບໍ່ໄດ້ຫມາຍຄວາມວ່າຈົດຫມາຍຈະຫມົດພຽງເທົ່ານີ້. ແຕ່ວ່າໄດ້ຊີ້ໄປໃສ່ສິ່ງສຸດທ້າຍທີ່ໂປໂລກ່າວໄວ້ ວ່າໃຫ້ຢືນຕໍ່ສູ້ກັບມານຊາຕານ. ລາວໄດ້ໃຊ້ຄຳວ່າ "ໃຫ້ເຮົານັ່ງ" (2:6) ແລະ "ໃຫ້ດຳເນີນຊີວິດ" ແມ່ນເພື່ອການເນັ້ນຄຳເວົ້າ ໃຫ້ຫນັກແຫນ້ນ. ໃນບົດ 6 ນີ້ລາວເວົ້າວ່າ "ຢືນຕໍ່ສູ້" (6:11; 13-14) ດັ່ງນັ້ນຜູ້ທີ່ເຊື່ອທັງຫລາຍຈຶ່ງບໍ່ແມ່ນຈະຢູ່ເພື່ອພຣະຄຣິດໃນໂບດຕາມທັມດາ, ຊີວິດສ່ວນຕົວ ແລະຊີວິດຄອບຄົວເທົ່ານັ້ນ, ແຕ່ພວກທ່ານທັງຫລາຍຈົ່ງຕຽມຕົວເຂົ້າຕໍ່ສູ້ໃນສົງຄາມດ້ວຍ. ພາກສຸດທ້າຍຂອງເອເຟໂຊ ຈຶ່ງກ່າວເຖິງອາວຸດຍຸດໂທປະກອນທີ່ຈະຕໍ່ສູ້ກັບມານຊາຕານດ້ວຍ.

ຄຣິສຕຽນຄວນຈະໄປຊອກອາວຸດນີ້ໄດ້ຢູ່ໃສ? ພວກເຮົາຈະຮູ້ໄດ້ຢ່າງໃດໃນເມື່ອມີການຕໍ່ສູ້ກັນທາງດ້ານຈິດວິນຍານ? ຫົວຂໍ້ຂອງບົດຮຽນນີ້ ກໍໄດ້ບອກພວກເຮົາແລ້ວວ່າ ການເປັນຄຣິສຕຽນບໍ່ແມ່ນຂອງງ່າຍໆ.

### ອາວຸດສູງສຸດທີ່ຈະເຂົ້າຕໍ່ສູ້ດ້ານຈິດວິນຍານ. (ອຟ 6:10)

ໃນຂະນະທີ່ໂປໂລອອກປະກາດທີ່ເມືອງເອເຟໂຊ, ລາວແລະຄະນະພັກພວກຂອງລາວໄດ້ຖືກຕໍ່ຕ້ານຢ່າງຫນັກ (ກຈ 19) ການຈາຣະຈົນ ວຸ້ນວາຍ ໄດ້ເກີດຂຶ້ນ, ພວກຊ່າງຕີເງິນ ຕີຄຳເປັນຮູບພຣະກໍໄດ້ມາຊຸມນຸມກັນເພາະການປະກາດຂອງໂປໂລບອກໃຫ້ເຄົາຣົບພຣະເຈົ້າອົງທ່ຽງແທ້ ບໍ່ແມ່ນຈະເຄົາຣົບ ພຣະຮູບປັ້ນ ໂດຍທີ່ບໍ່ແມ່ນພຣະແທ້. ພວກຊ່າງເຫລົ່ານີ້ ພາກັນຕົກໃຈຢ້ານບໍ່ມີວຽກເຮັດງານທຳ, ຈຶ່ງຊັກຊວນກັນ ຫາເຣື່ອງໃສ່ໂປໂລ ແລະ ພັກພວກວ່າ ເປັນຜູ້ທີ່ປມາດສະຖານທີ່ນະມັສການ ແລະຈະປມາດນາງພຣະຂອງພວກເຂົາດ້ວຍ. ຈຶ່ງໄດ້ພາກັນຊັກຊວນຄົນທັງຫລາຍຮ້ອງໂຮຂຶ້ນດ້ວຍຄວາມຄຽດແຄ້ນ ແລະຈັບເອົາຄົນຂອງໂປໂລໄປດ້ວຍ.

ເຣື່ອງລາວທີ່ເກີດຂື້ນນີ້ເປັນເຣື່ອງຍາກເພາະມັນກ່ຽວກັບຄວາມເຊື່ອ ແລະເຣື່ອງຈິດໃຈ. ຊາວເມືອງເອເຟໂຊ ເປັນຄຣິສຕຽນຊຶ່ງຕ້ອງຕໍ່ສູ້ ຢູ່ຕລອດເວລາ ບໍ່ສາມາດທີ່ຈະຢຸດຢັ້ງໄດ້ ຖ້າຢຸດຍາມໃດ ກໍເປັນອັນວ່າເສັຽຊັຍໄປ ໂດຍອັຕໂນມັດ.

ການຢູ່ເພື່ອພຣະຄຣິດ ບໍ່ແມ່ນການງ່າຍ ໂປໂລໄດ້ໝູນໃຈເລື້ອຍມາ, ຕັກເຕືອນພວກເຂົາວ່າຈະບໍ່ມີວັນສິ້ນສຸດ ຈົນເຖິງວັນຂອງພຣະເຈົ້າ. ຄຣິສຕຽນ ທຸກວັນນີ້, ຜູ້ທີ່ມີຄວາມເຊື່ອຫລາຍ, ຜູ້ທີ່ທຳງານໃຫ້ກັບພຣະເຈົ້າກໍຍັງ ຖືກເຢາະເຢີ້ຍ ຖາກຖາງ ດູຖູກ ດູໝິ່ນ ແຕ່ກໍບໍ່ແມ່ນຈະສິ້ນສຸດເທົ່ານີ້ ຍັງຈະມີຕໍ່ໆໄປອີກຈົນເຖິງວັນສຸດທ້າຍ. ເຮົາຈະຢືນຢັດຢູ່ໄດ້ຄືແນວໃດ? ຄຳຕອບທີ່ດີເດັ່ນທີ່ສຸດນັ້ນກໍຄື ຄຣິສຕຽນມີອຳນາດເຕັມ, ສາມາດຕໍ່ສູ້ໄດ້, ແລະບໍ່ມີສິ້ນສຸດ. ກຳລັງຕ່າງໆນີ້ ແມ່ນມາຈາກພຣະເຈົ້າ. ໂປໂລກໍໄດ້ກ່າວເຖິງພະລັງນີ້ ໃນເອເຟໂຊ 1:19 ວ່າ ພະລັງອຳນາດທີ່ເຮັດໃຫ້ພຣະເຢຊູຄຣິດຟື້ນຄືນພຣະຊົນນັ້ນລະ, ແລະລາວກໍໄດ້ກ່າວອີກໃນ 6:10 ຊຶ່ງຖ້າ ເປັນພາສາກຣີກແລ້ວກໍແມ່ນຄຳດຽວກັນ. ຜູ້ທີ່ເຊື່ອທັງຫລາຍຄວນມີພະລັງອັນນີ້.

ໂປໂລກ່າວວ່າ "ຂໍພວກທ່ານຈົ່ງມີກຳລັງເພີ້ມຂື້ນ" ບໍ່ແມ່ນເຮັດເອົາເອງແຕ່ຮ້ອງຂໍຈາກພຣະເຈົ້າໃຫ້ເພີ້ມຂື້ນ. ຄຳເວົ້ານີ້ ຖ້າອ່ານໃນ ຟີລິປປອຍ 4:13 ແລ້ວຈະເຫັນວ່າຄ້າຍຄືກັນ. "ເຮົາສາມາດສູ້ກັບທຸກສິ່ງໄດ້ ໂດຍພຣະ ອົງຜູ້ຊົງຊູກຳລັງ". ວາງໃຈໃນພຣະຄຣິດ ແມ່ນການຮຽນ ທີ່ຈະມອບຈຸດປະສົງແລະເປົ້າໝາຍໃຫ້ພຣະເຈົ້າ ແລະໃນຊີວິດຂອງເຮົາກໍໃຫ້ເຂັ້ມແຂງຂື້ນໃນພຣະອົງ.

ເມື່ອ ປີ 1956-57 ໄດ້ມີການຝຶກແອບໂຕນຈ້ອງຫລາຍ ຂ້າພະເຈົ້າກໍໄດ້ເບິ່ງການຝຶກແອບນັ້ນຫລາຍສົມຄວນ ເພາະແມ່ນທາງໄປມາຂອງຂ້າພະເຈົ້າ. ເມື່ອສັງເກດເບິ່ງຈ້ອງ ແລະຄົນທີ່ເລື່ອນລອຍລົງມາສູ່ດິນນັ້ນເຮັດໃຫ້ ຂ້າພະເຈົ້າຄິດໄປວ່າ ຄົນແລະຈ້ອງຈະເຮັດຫຍັງບໍ່ໄດ້ ຖ້າລົມທາກບໍ່ຊ່ວຍໃຫ້ຈ້ອງນັ້ນພືອອກ. ສິ່ງທີ່ຕາເຫັນ ບໍ່ສາມາດເຮັດຫຍັງໄດ້ຕ້ອງອາສັຍສິ່ງທີ່ຕາບໍ່ເຫັນ, ແລະສິ່ງທີ່ຕາບໍ່ເຫັນນີ້ກໍແມ່ນພະລັງອຳນາດຂອງພຣະເຈົ້າ ທີ່ບໍ່ມີມື້ສິ້ນສຸດ.

2 ໂກຣິນໂທ 4:7 "ແຕ່ວ່າຂອງທີ່ມີຄ່ານີ້ ເຮົາມີຢູ່ໃນພາຊະນະດິນ ເພື່ອໃຫ້ເຫັນວ່າຣິດເດດອັນເລີດ ປະເສີດນັ້ນ ຈະເປັນຂອງພຣະເຈົ້າ ບໍ່ໃຊ່ເປັນຂອງເຮົາເອງ." ໂປໂລກ່າວຕໍ່ໄປອີກໃນຂໍ້ 18 ວ່າ "ເພາະວ່າເຮົາບໍ່ໄດ້ເຫັນ ແກ່ສິ່ງທີ່ຕາເຫັນຢູ່ ແຕ່ເຫັນແກ່ສິ່ງທີ່ຕາບໍ່ເຫັນ ດ້ວຍວ່າສິ່ງທີ່ຕາເຫັນຢູ່ນັ້ນ ກໍເປັນຂອງຊົ່ວຄາວ ແຕ່ສິ່ງທີ່ຕາບໍ່ ເຫັນນັ້ນກໍຖາວອນເປັນນິດ."

## <u>ສັດຕູຕົວຮ້າຍກາດຂອງຈິດວິນຍານ (ອຟ 6:11-12)</u>

ເມື່ອມາເຖິງຕອນນີ້ເຫັນວ່າມີຄວາມສຳຄັນຫລາຍ ເພາະໄດ້ກ່າວສະເພາະເຈາະຈົງໃສ່ສັດຕູຢ່າງແຈ່ມແຈ້ງ. ແຕ່ບໍ່ແມ່ນຕໍ່ສູ້ກັບພວກຫລໍ່ຮູບພະ, ພວກກາບໄຫວ້ຮູບໂຄຣົບ, ແລະ ພວກຝູງຊົນທີ່ຮ້ອງໂຮນັ້ນ (ກຈ 19). ສັດຕູຕົວນີ້ ບໍ່ມີ ເນື້ອໜັງແລະບໍ່ມີເລືອດ ແລະບໍ່ມີຄວາມເປັນມະນຸດ ມັນເປັນວິນຍານຊົ່ວທີ່ຕາພວກເຮົາບໍ່ ເຫັນ ມັນຢູ່ນຳຜູ້ທີ່ບໍ່ເຊື່ອ. ເອເຟໂຊ 6:11 ໄດ້ກ່າວວ່າມັນເປັນພະຍາມານ. ບາງບ່ອນໂປໂລກໍຮ້ອງມັນວ່າ ຊາຕານ. (ເຊັ່ນໃນ ຣມ 16:20) ຊາຕານນີ້ ມັນສາມາດເຮັດໄດ້ຫລາຍຢ່າງ ເຊັ່ນ : ຫລອກລວງ ລໍ້ລວງ

ຈອມປອມ ຫວານນອກຂົມໃນ ເມື່ອມັນອ່ອຍດ້ວຍນ້ຳອ້ອຍແລ້ວ ມັນກໍຈະຫາວິທີຂ້າ. ໂປໂລຍັງຮູ້ອີກວ່າ ບາງຄັ້ງມັນຍັງປອມແປງຕົວເອງ ວ່າ ເປັນເທວະດາແຫ່ງຄວາມສວ່າງ. (2ໂກຣິນໂທ 11:14)

ປານນັ້ນກໍຍັງມີບາງພວກທີ່ກົ້ມຫົວ ຍອມໄປເຊື່ອຟັງຄວາມຂອງມັນ. ຫລາຍຄົນຂາດການຕຶກຕອງ ບໍ່ໄດ້ສືກ ສາຢ່າງຄັກແນ່ ແລະ ບໍ່ເຫັນເຫດການໄກ ກໍໄດ້ຮ່ວມປະກອບສ່ວນ ເຮັດວຽກໃຫ້ພວກມັນ. ພວກຜີຮ້າຍມັນ ເກັ່ງຫລາຍມັນກ່າວວ່າ "ພຣະເຢຊູເຮົາກໍລຶ້ງເຄີຍ ໂປໂລເຮົາກໍຮູ້ຈັກ ແຕ່ພວກເຈົ້າແມ່ນໃຜ." (ກຈ 19:15)

ຊາຕານ ບໍ່ໄດ້ເຮັດວຽກຜູ້ດຽວ ໃນເອເຟໂຊ 6:12 ພວກເຮົາຈະເຫັນວ່າມີ ສີ່ພວກໃຫຍ່ງດັ່ງນີ້ ຄື: ຜູ້ປົກຄອງ, ຜູ້ມີອຳນາດ, ເຈົ້າໂລກທີ່ຢູ່ໃນຄວາມມືດ, ກຳລັງວິນຍານຝ່າຍຄວາມຊົ່ວຮ້າຍ. ທັງສີ່ອຳນາດນີ້ ພວກເຮົາບໍ່ ສາມາດເຫັນໄດ້ ແຕ່ມັນກໍມີກຳລັງ ມີອຳນາດ ແລະມີກອງທັບອັນໃຫຍ່ຫລວງ.

ໂປໂລຢາກໃຫ້ພວກເຮົາຮູ້ວ່າ ພວກເຮົາກຳລັງຕໍ່ສູ້ກັບໃຜ ຜູ້ໃດ ຢູ່ໃສ. ແຕ່ຜູ້ທີ່ຈະຊ່ວຍໃຫ້ພວກເຮົາຢືນຢັດ ຢູ່ໄດ້ ກໍຍິ່ງມີອຳນາດທີ່ສູງສຸດ ແລະເຮັດໃຫ້ພວກເຮົາກາຍເປັນຜູ້ໄດ້ຮັບຊັຍຊະນະໄດ້ໂດຍພຣະອົງໄດ້ມອບ ອາວຸດໃຫ້ກັບພວກເຮົາ.

<u>ອາວຸດສຸດຍອດທີ່ຈະຕໍ່ສູ້ດ້ານຈິດວິນຍານ (ອຟ 6:13-18)</u>

" ເຫດສັນນັ້ນ " ໃນຂໍ້ 13, ເຮັດໃຫ້ພວກເຮົາເບິ່ງຄືນພວກສັດຕູ. ຖ້າສັດຕູຫາກເປັນວິນຍານ ພວກເຮົາກໍ ຕ້ອງເອົາອາວຸດທີ່ພຣະເຈົ້າຊົງຈັດຕຽມໃຫ້. ໂປໂລໄດ້ເຕືອນພວກເຮົາ ໃຫ້ຮັບເອົາອາວຸດ ຍຸທພັນຄົບຊຸດ ທີ່ ມາຈາກພຣະເຈົ້າ. ໃນໂຣມ 13:12 ລາວຮ້ອງອາວຸດນີ້ວ່າ ອາວຸດແຫ່ງຄວາມສວ່າງ. ໃນ 2 ໂກຣິນໂທ ໂປ ໂລໄດ້ຮ້ອງອາວຸດນີ້ວ່າ ອາວຸດແຫ່ງຄວາມຊອບທັມ, ແລະໃນ 2 ໂກຣິນໂທ 10:4 ລາວຮ້ອງວ່າ ອາວຸດບໍ່ ແມ່ນຂອງໂລກ. ໃນ 1 ເທຊະໂລນິກ 5:8 ໂປໂລບໍ່ໄດ້ກ່າວເຖິງອາວຸດ ແຕ່ບອກໃຫ້ສຸບເອົາເຄື່ອງປ້ອງກັນ ກໍມີຄວາມຫມາຍວ່າ ອາວຸດເຊັ່ນກັນ.

<u>ເອົາຄວາມຈິງຄາດແອວ (ອຟ 6:14)</u>

ຄວາມຈິງນັ້ນ ກໍຄື ພຣະຄຳຂອງພຣະເຈົ້າ, ຖ້າພຣະຄຳ ຫາກສະຖິດຢູ່ນຳຜູ້ໃດແລ້ວນັ້ນຜູ້ນັ້ນກໍຈະເອົາຊະນະ ມານໄດ້ ເພາະພຣະຄຳຂອງພຣະເຈົ້າກົງກັນຂ້າມກັບຄຳຂອງມານ. ມານເປັນພໍ່ຂອງການຂີ້ຕົວະ.

<u>ເອົາຄວາມຊອບທັມປ້ອງກັນເອິກ (6:14)</u>

ນີ້ກໍແມ່ນອີກສ່ວນນຶ່ງຂອງອາວຸດ, ທີ່ຈະປ້ອງກັນຮ່າງກາຍຂອງເຮົາ. ຄວາມຊອບທັມນີ້ ແມ່ນອາວຸດທີ່ເຮົາ ໄດ້ຮັບຫລັງຈາກທີ່ມາເປັນຄຣິສຕຽນແລ້ວ.

<u>ເອົາຄວາມພັ່ງພ້ອມມາສຸບໃສ່ຕີນ (6:15)</u>

ທະຫານໂຣມັນ ກ່ອນຈະອອກຮົບຕ້ອງມີເກີບ ຊັ້ງດານ ເພື່ອປ້ອງກັນການເຈັບຕີນໃນເວລາອອກສູ້ຮົບ. ຄຣິສ ຕຽນ ຜູ້ທີ່ມີຄວາມເຊື່ອແລ້ວຕ້ອງພັ່ງພ້ອມໃນການອອກໄປປະກາດ.

ເອົາຄວາມເຊື່ອເປັນເຂນ (6:16)

ອາວຸດແຕ່ລະຊະນິດສຳຄັນຫມົດ. ໂປໂລກ່າວວ່າ " ພ້ອມກັບສິ່ງທັງຫມົດນີ້ " ກໍຫມາຍຄວາມວ່າ ອາວຸດທຸກຢ່າງນີ້ ດີຫມົດ ແຕ່ເຫນືອກວ່າຫມູ່ນັ້ນແມ່ນ ຄວາມເຊື່ອ. ເພາະຄວາມເຊື່ອຈະພາໃຫ້ເຮົາເດີນໄດ້ຢ່າງສງ່າຜ່າເຜີຍໄດ້. ລູກສອນໄຟຂອງມານຈະມີຫລາຍຢ່າງ: ການອວດຕົວ, ຈອງຫອງ, ອິດສາ, ຣິສຍາ, ການບໍ່ສຸພາບ, ຂົ່ມເພີ່ນຍໍໂຕເຫລົ່ານີ້ ເປັນຕົ້ນ.

ຖືພຣະແສງຂອງພຣະວິນຍານ (6:17)

ອາວຸດສິ່ງດຽວນີ້ ທີ່ຈະຂ້າມານຊາຕານໄດ້. ທີ່ກ່າວມາຕ່າງໆນັ້ນແມ່ນສິ່ງປ້ອງກັນ. ເຮັບເຣີ 4:12 ກ່າວວ່າ ພຣະຄຳຂອງພຣະເຈົ້າມີຣິດເດດ ມີອຳນາດ ຄົມກວ່າດາບສອງຄົມ. ພຣະເຢຊູກໍໃຊ້ພຣະຄຳຂອງພຣະເຈົ້າສູ້ກັບມານ ແລ້ວມັນກໍຫນີໄປ.

ອາວຸດລັບ(ອະທິຖານ) (6:18-20)

ການອະທິຖານແມ່ນການຫາຍໃຈຂອງຄຣິສຕຽນ. ຕ້ອງໄດ້ຫາຍໃຈບາດໃຫຍ່ໆ ຄຣິສຕຽນຈະຂາດເສັຽບໍ່ໄດ້ ແລະກໍຍັງເປັນການຕິດຕໍ່ພິເສດກັບພຣະເຈົ້າ. ຄຳສັ່ງ ການບັນຊາຕ່າງໆແມ່ນມາຈາກພຣະເຈົ້າ ແລະກໍຍັງເປັນການລັບສ່ວນຕົວ.

ຄຳຖາມ:

(1) ການຢູ່ເພື່ອພຣະຄຣິດນີ້ຈະໃຊ້ເວລາດົນປານໃດ?

(2) ສິ່ງໃດເປັນສິ່ງທີ່ຍັ້ງຍືນຕລອດໄປ ສິ່ງທີ່ຕາເຫັນ ຫລື ສິ່ງທີ່ຕາບໍ່ເຫັນ?

(3) ເປັນຫຍັງຄົນຈຳນວນຫລວງຫລາຍຈຶ່ງຫັນໄປເຊື່ອຟັງມານຊາຕານ?

(4) ອາວຸດທີ່ພຣະເຈົ້າມອບໃຫ້ນັ້ນ ມີຫຍັງແດ່?